# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາຄານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

17-24 ພຶດສະພາ 2025
ປີທີ 14
ສະບັບທີ 1018
ລາຍສັບປະດາ


## ສຳເລັດກອງປະຊຸມຄົບຄະນະ ຄັ້ງທີ 10 ຂອງຄະນະບໍລິຫານງານສູນກາງພັກ



(ສພຊ) - ກອງປະຊຸມຄົບຄະນະ ຄັ້ງທີ 10 ຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XI ໄດ້ດຳເນີນມາແຕ່ວັນທີ 19-23 ພຶດສະພາ 2025 ທີ່ສຳນັກງານສູນກາງພັກ ພາຍໃຕ້ການເປັນປະທານຂອງສະຫາຍ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ ໄດ້ປິດລົງດ້ວຍຜົນສຳເລັດອັນຈົບງາມ.

ຄະນະບໍລິຫານງານສູນກາງພັກ ໄດ້ພ້ອມກັນຄົ້ນຄວ້າ, ປຶກສາຫາລື ແລະໃຫ້ທິດຊີ້ນຳຕໍ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ-ເງິນຕາ ໃນ 6 ເດືອນຕົ້ນປີ 2025; ຕີລາຄາຜົນການດຳເນີນກອງປະຊຸມໃຫຍ່ຂອງອົງຄະນະພັກເມືອງ-ນະຄອນ, ບັນດາຮາກຖານພັກອ້ອມຂ້າງສູນກາງ ແລະ ທ້ອງຖິ່ນ; ພິເສດ ໄດ້ປຶກສາຫາລື ແລະ ມີຄວາມເຫັນຊີ້ນຳຕໍ່ບັນດາຮ່າງເອກະສານທີ່ຈະນຳລາຍງານຕໍ່ກອງປະຊຸມ

ອ່ານຕໍ່ໜ້າ 11

## ຮອງປະທານສະພາແຫ່ງຊາດ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງເອກອັກຄະລັດຖະທູດສະຫະພາບເອີຣົບ



(ສພຊ) - ຕອນບ່າຍວັນທີ 16 ພຶດສະພາຜ່ານມາ ທີ່ສະພາແຫ່ງຊາດ, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງທ່ານ ມາກ ກາລາເຮີ (Mark GALLAGHER) ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດ

ອ່ານຕໍ່ໜ້າ 6



ແນວຄິດປະທານ
### ໄກສອນ ພົມວິຫານ
ຜູ້ທີ່ປະຊາຊົນເຄົາລົບຮັກ

ຊາດລາວເຮົາ ໄດ້ດຳລົງຊີວິດຢູ່ມື້ບຸນປະຕິວັດ ອັນຄຶກຄື້ນມ່ວນຊື່ນຢ່າງແທ້ຈິງ, ພິເສດແມ່ນໄດ້ຊີງເອົາໄຊຊະນະອັນຍິ່ງໃຫຍ່ ທີ່ບໍ່ເຄີຍມີຈັກເທື່ອມາໄດ້ ປົດປ່ອຍຕົນເອງດ້ວຍກຳລັງແຮງຂອງຕົນເອງ ໃຫ້ຫຼຸດຈາກຊີກໂສ້ແຫ່ງການຂູດຮີດເພື່ອບືນຕົວຂຶ້ນສ້າງຊີວິດໃໝ່, ຊີວິດທີ່ມີອິດສະຫຼະພາບຢ່າງແທ້ຈິງ.

(ບົດລາຍງານການເມືອງ ຕໍ່ກອງປະຊຸມໃຫຍ່ຜູ້ແທນປະຊາຊົນທົ່ວປະເທດ ວັນທີ 2 ທັນວາ 1975, ໜ້າ 119)

ຕ້ອງສຶກສາອົບຮົມໃຫ້ຕົນລາວທຸກຄົນ ເຂົ້າໃຈແຈ້ງວ່າເຂົາເຈົ້າແມ່ນເຈົ້າຂອງປະເທດລາວ, ຊັບສິນ, ຊັບພະຍາກອນຂອງປະເທດຊາດທັງໝົດ ລ້ວນແຕ່ເປັນຂອງປະຊາຊົນ, ເຂົາເຈົ້າຕ້ອງເຮັດລ້ອນພັນທະຂອງຜູ້ທີ່ເປັນເຈົ້າປະເທດຊາດ.

(ປື້ມສັງລວມບົດໂອ້ລົມຕໍ່ຂັ້ນສູງກາງ, ໜ້າ 105)

ອ່ານຕໍ່ສະບັບໜ້າ

## ກວດກາເນື້ອໃນຮອບດ້ານຮ່າງກົດໝາຍການປູກຝັງ

(ສພຊ) - ວັນທີ 17-18 ພຶດສະພານີ້ ທີ່ເມືອງວັງວຽງ ແຂວງວຽງຈັນ ໄດ້ມີກອງປະຊຸມກວດກາເນື້ອໃນຮອບດ້ານຮ່າງກົດໝາຍວ່າດ້ວຍການປູກຝັງ (ສ້າງໃໝ່) ໂດຍການເປັນປະທານຂອງທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີ ຮອງປະທານສະພາແຫ່ງຊາດ (ສພຊ); ເຂົ້າຮ່ວມມີບັນດາທ່ານປະທານ ແລະ ຮອງປະທານກຳມາທິການທີ່ກ່ຽວຂ້ອງຂອງ ສພຊ, ຮອງລັດຖະມົນຕີກະຊວງ ແລະ ອົງການທີ່ກ່ຽວຂ້ອງ, ຕາງໜ້າອົງການສະຫະປະຊາຊາດ ເພື່ອການພັດທະນາ ປະຈຳ ສປປລາວ, ຄະນະທີ່ປຶກສາທາງດ້ານກົດໝາຍຂອງຄະນະປະຈຳສະພາແຫ່ງຊາດ, ຫົວໜ້າ-




ອ່ານຕໍ່ໜ້າ 7

## ລົງນາມບົດບັນທຶກຄວາມເຂົ້າໃຈ ວ່າດ້ວຍການສົ່ງເສີມການສຶກສາສົງ



(ສພຊ) - ວັນທີ 21 ພຶດສະພາຜ່ານມາ ທີ່ສະພາແຫ່ງຊາດ (ສພຊ) ໄດ້ມີພິທີລົງນາມໃນບົດບັນທຶກຄວາມເຂົ້າໃຈລະຫວ່າງ ກອງທຶນຊ່ວຍເຫຼືອສັງຄົມຂອງສະພາແຫ່ງຊາດແຫ່ງສປປລາວ ແລະ ມະຫາວິທະຍາໄລ ມະຫາຈຸລາລົງກອນ ຣາຊະວິທະຍາໄລ ແຫ່ງລາຊະອານາຈັກໄທວ່າດ້ວຍການສົ່ງເສີມການສຶກສາສົງ; ຝ່າຍມະຫາວິທະຍາໄລ ມະຫາຈຸລາລົງກອນ ຣາຊະວິທະຍາໄລ ໂດຍມີພຣະເທບວັດຊະຣະສານບັນດິດ ຣສ. ປອ. ຮອງອະທິການບໍດີມະ

ອ່ານຕໍ່ໜ້າ 7

## ຫາລືການແກ້ໄຂປາກົດການຫຍໍ້ທໍ້ທີ່ເຄັ່ງຮ້ອນໃນສັງຄົມ



(ສພຊ) - ວັນທີ 16 ພຶດສະພານີ້ ທີ່ສະພາແຫ່ງຊາດ (ສພຊ) ໄດ້ມີກອງປະຊຸມປຶກສາຫາລືກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ, ນິຕິກຳໃຕ້ກົດໝາຍໃນຂົງເຂດວັດທະນະທຳ-ສັງຄົມທີ່ຕິດພັນກັບການແກ້ໄຂປາກົດການຫຍໍ້ທໍ້ທີ່ເປັນບັນຫາເຄັ່ງຮ້ອນໃນສັງຄົມ ໂດຍການເປັນປະທານຂອງທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ; ເຂົ້າຮ່ວມມີບັນດາທ່ານຮອງປະທານກຳມາທິການຂອງ ສພຊ, ຮອງລັດຖະມົນຕີຈາກກະ

ອ່ານຕໍ່ໜ້າ 8

## ຄະນະມິດຕະພາບລັດຖະສະພາ ລາວ-ລັດເຊຍ-ລາວ ພົບປະທາງໄກ




ອ່ານຕໍ່ໜ້າ 7



5 ສັນຍານ... (ໜ້າ 9)


ເລືອກຕັ້ງລັດຖະສະພາ... (ໜ້າ 10)

ເຫຼົ່າໄວ້ ໄດ້ຍິດຮຽນ
ວິເສດ ສະແຫວງສຶກສາ
ປັນຍາປະດິດ... (ໜ້າ 12)

# ປະທານ ກວທສ ເຄື່ອນໄຫວວຽກງານຢູ່ອຸດົມໄຊ



(ສພຊ) - ຕອນເຊົ້າວັນທີ 12 ພຶດສະພາຜ່ານມາທີ່ຫ້ອງປະຊຸມສະພາປະຊາຊົນແຂວງອຸດົມໄຊ, ທ່ານບຸນຕາເທບພະວົງ ກຳມະການສຳຮອງສູນກາງພັກ, ຄະນະປະຈຳສະພາແຫ່ງຊາດ (ຄປຈສພຊ), ປະທານກຳມາທິການວັດທະນະທຳ-ສັງຄົມ (ກວທສ) ພ້ອມດ້ວຍຄະນະ ໄດ້ພົບປະທ່ານ ຄຳດີ ວົງລ້ອມ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ ແລະຄະນະເພື່ອແຈ້ງຈຸດປະສົງຂອງການເຄື່ອນໄຫວວຽກງານຢູ່ແຂວງອຸດົມໄຊ.

ຕອນບ່າຍທີ່ຫ້ອງປະຊຸມພະແນກສຶກສາທິການ ແລະ ກິລາແຂວງ ໄດ້ມີກອງປະຊຸມຮ່ວມລະຫວ່າງກຳມາທິການວັດທະນະທຳ-ສັງຄົມ ກັບ ຄະນະກຳມະການວັດທະນະທຳ-ສັງຄົມແລະ ບັນດາເຜົ່າ, ສະພາປະຊາຊົນແຂວງ ແລະ ບັນດາພະແນກການ, ອົງການອ້ອມຂ້າງແຂວງ ໂດຍການເປັນປະທານຮ່ວມຂອງທ່ານ ບຸນຕາ ເທບພະວົງ ແລະ ທ່ານ ຄຳດີ ວົງລ້ອມ; ມີທ່ານ ຄຳມະນີ ໄຊດວງຕາ ປະທານຄະນະກຳມະການວັດທະນະທຳ-ສັງຄົມແລະບັນດາເຜົ່າ, ບັນດາທ່ານສະມາຊິກສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າພະແນກການ, ອົງການ ແລະ ພະນັກງານຈາກຂະແໜງກ່ຽວຂ້ອງ ເຂົ້າຮ່ວມຢ່າງພ້ອມພຽງ ເຊິ່ງມີຈຸດປະສົງເພື່ອຕິດຕາມກວດກາ, ເກັບກຳຂໍ້ມູນກ່ຽວກັບການຈັດຕັ້ງປະຕິບັດບັນດາຄາດໝາຍໃນຂົງເຂດວັດທະນະທຳ-ສັງຄົມ ປະຈຳປີ 2025 ເພື່ອລາຍງານຕໍ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ແລະ ກອງປະຊຸມສະໄໝສາມັນເທື່ອທີ 9 ຂອງ ສພຊ ຊຸດທີ IX.

ໃນກອງປະຊຸມ, ທ່ານ ຄຳດີ ວົງລ້ອມ ໄດ້ລາຍງານຫຍໍ້ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ໃນໄລຍະ 4 ເດືອນຕົ້ນປີ 2025 ແລະ ຜົນສຳເລັດທີ່ພົ້ນເດັ່ນຕ່າງໆ; ພ້ອມກັນນັ້ນ, ກໍໄດ້ຮັບຟັງການລາຍງານຈາກບັນດາພະແນກການຕາມຄຳຖາມເຈາະຈີ້ມຂອງຄະນະຮັບຜິດຊອບ ໂດຍສະເພາະແມ່ນການສຸມໃສ່ຈັດຕັ້ງປະຕິບັດບັນດາຄາດໝາຍ ເປັນຕົ້ນ: ຂົງເຂດສຶກສາທິການ ແລະ ກິລາ, ຂົງເຂດສາທາລະນະສຸກ, ຂົງເຂດແຮງງານ ແລະ ສະຫວັດດີການສັງຄົມ, ຂົງເຂດຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເຊິ່ງແຕ່ລະຂົງ ເຂດ ໄດ້ສຸມໃສ່ປະຕິບັດໜ້າທີ່ຂອງຕົນຕາມການມອບໝາຍ ແລະ ແກ້ໄຂບັນຫາທີ່ຄົງຄ້າງໄດ້ຕາມແຜນການທີ່ກຳນົດໄວ້.

ວັນທີ 14 ພຶດສະພາ, ທ່ານ ບຸນຕາ ເທບພະວົງ ພ້ອມດ້ວຍຄະນະ ໄດ້ລົງເຄື່ອນໄຫວວຽກງານຢູ່ເມືອງຫຼາ ໂດຍມີທ່ານນາງ ຄຳພອນ ພົມມະຈັນ ຮອງປະທານສະພາປະຊາຊົນແຂວງ, ທ່ານ ຄຳມະນີ ໄຊດວງຕາ, ບັນດາທ່ານສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງ, ຄະນະນຳຂອງເມືອງ, ຫົວໜ້າ-ຮອງຫົວໜ້າຫ້ອງການແລະພະນັກງານຂະແໜງການທີ່ກ່ຽວຂ້ອງ ເຂົ້າຮ່ວມ ເຊິ່ງບັນດາຫ້ອງການທີ່ກ່ຽວຂ້ອງຂອງເມືອງ ໄດ້ລາຍງານການ ເຄື່ອນໄຫວວຽກງານໂດຍຫຍໍ້ຕາມຄຳຖາມເຈາະຈີ້ມຂອງຄະນະຈາກສະພາແຫ່ງຊາດ ໂດຍສະເພາະແມ່ນການສຸມໃສ່ຈັດຕັ້ງປະຕິບັດບັນດາຄາດໝາຍ, ຫຼັງຈາກນັ້ນ ໄດ້ມີການແລກປ່ຽນຄຳຄິດເຫັນເຊິ່ງກັນແລະກັນຢ່າງກົງໄປກົງມາ; ນອກຈາກນີ້, ຍັງໄດ້ເຄື່ອນໄຫວຢ້ຽມຢາມ ແລະ ເຮັດວຽກຢູ່ໂຮງໝໍແຂວງ, ໂຮງຮຽນວິຊາຊີບພ້ອມທັງຢ້ຽມຊົມແຫຼ່ງທ່ອງທ່ຽວແລະສະຖານທີ່ຕ່າງໆ ຂອງເມືອງຫຼາອີກດ້ວຍ.



# ເຝິກອົບຮົມການປະເມີນຜົນການປະຕິບັດຂໍ້ຕົກລົງ ປະທານຄະນະກຳມະການປົກຄອງນະຄອນຫຼວງ, ແຂວງ



(ສພຊ) - ເພື່ອຍົກລະດັບຄວາມຮູ້ກ່ຽວກັບວຽກງານຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງປະທານຄະນະກຳມະການປົກຄອງນະຄອນຫຼວງ, ແຂວງ ໃຫ້ແກ່ສະພາປະຊາຊົນຂັ້ນແຂວງ; ເພື່ອເອກະພາບໃນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ວຽກງານດັ່ງກ່າວ ຢ່າງມີປະສິດທິພາບ, ປະສິດທິຜົນ ຕອບສະໜອງໄດ້ຄວາມຮຽກຮ້ອງຕ້ອງການໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານຕົວຈິງ. ສະນັ້ນ, ໃນວັນທີ 12-13 ພຶດສະພາ 2025 ທີ່ແຂວງວຽງຈັນ, ກຳມາທິການກົດໝາຍ ໄດ້ຈັດກອງປະຊຸມຝຶກອົບຮົມການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງປະທານຄະນະກຳມະການປົກຄອງນະຄອນຫຼວງ, ແຂວງ ໃຫ້ພະນັກງານ-ລັດຖະກອນຂອງສະພາປະຊາຊົນນະຄອນຫຼວງວຽງຈັນ, ແຂວງວຽງຈັນ, ແຂວງໄຊສົມບູນ ໂດຍການເປັນປະທານຂອງທ່ານ ຄຳແພງ ວິລະພັນ ປະທານກຳມາທິການກົດໝາຍ; ເຂົ້າຮ່ວມມີຮອງປະທານສະພາປະຊາຊົນແຂວງຄຳມ່ວນ, ເລຂາທິການສະພາປະຊາຊົນແຂວງຄຳມ່ວນ, ຫົວໜ້າແລະຮອງຫົວໜ້າກົມຕິດຕາມກວດກາ, ໂຄສະນາ ແລະ ຕີຄວາມໝາຍກົດໝາຍ, ປະທານ ແລະ ຮອງປະທານຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ, ເສດຖະກິດ, ແຜນການ ແລະ ການເງິນ, ຄະນະພະແນກ, ຫົວໜ້າແລະຮອງຫົວໜ້າຂະແໜງ, ລັດຖະກອນວິຊາການຈາກກົມຕິດຕາມກວດກາ, ໂຄສະນາແລະຕີຄວາມໝາຍກົດໝາຍ ແລະ ຈາກ 4 ແຂວງຄື: ນະຄອນຫຼວງວຽງຈັນ, ແຂວງຄຳມ່ວນ, ແຂວງວຽງຈັນແລະແຂວງໄຊສົມບູນ.

ໃນກອງປະຊຸມຝຶກອົບຮົມຄັ້ງນີ້ ຜູ້ເຂົ້າຮ່ວມໄດ້ຮັບຟັງບົດຮຽນກ່ຽວກັບການສ້າງແລະປັບປຸງນິຕິກຳໃຕ້ກົດໝາຍ (ຂໍ້ຕົກລົງຂອງປະທານຄະນະກຳມະການປົກຄອງນະຄອນຫຼວງ, ແຂວງ); ບົດຮຽນການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂອງສະພາແຫ່ງຊາດ; ບົດຮຽນການຕິດຕາມກວດກາຂອງຄະນະປະຈຳສະພາປະຊາຊົນແຂວງຄຳມ່ວນ; ບົດຮຽນການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າ ແຂວງຄຳມ່ວນແລະຄູ່ມືກ່ຽວກັບການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງປະທານຄະນະກຳມະການປົກຄອງນະຄອນຫຼວງ, ແຂວງ. ນອກຈາກນັ້ນ, ຍັງໄດ້ເຜີຍແຜ່ນິຕິກຳຂອງສະພາແຫ່ງຊາດ 3 ສະບັບ ຄື: ຄຳແນະນຳຂອງຄະນະປະຈຳສະພາແຫ່ງຊາດວ່າດ້ວຍການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງປະທານຄະນະກຳມະການປົກຄອງນະຄອນຫຼວງ, ແຂວງ ສະບັບເລກທີ 06/ຄປຈ, ລົງວັນທີ 28 ມີນາ 2025; ຄຳແນະນຳຂອງຄະນະປະຈຳສະພາແຫ່ງຊາດວ່າດ້ວຍການສ້າງແລະປັບປຸງກົດໝາຍ ໄລຍະປີ 2026-2030 ສະບັບເລກທີ 03/ຄປຈ, ລົງວັນທີ 5 ມັງກອນ 2024 ແລະ ຄຳແນະນຳຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການສະຫຼຸບຕີລາຄາການໂຄສະນາເຜີຍແຜ່ກົດໝາຍ ສະບັບເລກທີ 01/ຄປຈ, ລົງວັນທີ 3 ມັງກອນ 2024 ເພື່ອໃຫ້ຜູ້ເຂົ້າຮ່ວມໄດ້ເຊື່ອມຊຶມ ແລະ ນຳໄປເຜີຍແຜ່ໃນທ້ອງຖິ່ນຂອງຕົນຕໍ່ໄປ.

ກອງປະຊຸມດັ່ງກ່າວແມ່ນໄດ້ຮັບການສະໜັບສະໜູນທາງດ້ານງົບປະມານຈາກມູນນິທິເວດມິນເຕີ (Westminster Foundation for Democracy).

**(ກົມຕິດຕາມກວດກາ, ໂຄສະນາ ແລະ ຕີຄວາມໝາຍກົດໝາຍ)**

# ຕິດຕາມກວດກາການປະຕິບັດວຽກງານເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ຢູ່ 2 ແຂວງພາກໃຕ້



(ສພຊ) - ວັນທີ 12-16 ພຶດສະພາຜ່ານມາ, ທ່ານ ມະນີໂສ ຊາມຸນຕີ ຮອງປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ພ້ອມດ້ວຍຄະນະ ສົມທົບກັບຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ສະພາປະຊາຊົນແຂວງ ເຄື່ອນໄຫວຕິດຕາມກວດການການຈັດຕັ້ງປະຕິບັດບາງວຽກງານໃນຂົງເຂດເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ທີ່ແຂວງຈຳປາສັກ ແລະ ແຂວງສາລະວັນ ຕາມລຳດັບ ໂດຍໄດ້ເປີດກອງປະຊຸມຮ່ວມກັບພະແນກການທີ່ກ່ຽວຂ້ອງ ເພື່ອຮັບຟັງການລາຍງານຈາກພະແນກໂຍທາທິການແລະຂົນສົ່ງ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ, ນິຕິກຳໃຕ້ກົດໝາຍ ທີ່ຕິດພັນກັບການອຳນວຍຄວາມສະດວກທາງດ້ານການຂົນສົ່ງ ໂດຍສະເພາະການຂົນສົ່ງສິນຄ້າພາຍໃນ, ລະຫວ່າງປະເທດ ແລະ ຜ່ານແດນ ໃນໄລຍະຜ່ານມາ; ພະແນກການເງິນລາຍງານກ່ຽວກັບການອຳນວຍຄວາມສະດວກທາງດ້ານການຂົນສົ່ງ ໂດຍສະເພາະການຂົນສົ່ງສິນຄ້າພາຍໃນ, ລະຫວ່າງປະເທດແລະຜ່ານແດນ; ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ລາຍງານການຈັດຕັ້ງປະຕິບັດວຽກງານຂຶ້ນທະບຽນອອກໃບຕາດິນ ແລະ ການປະຕິບັດພັນທະຄ່າເຊົ່າ, ສຳປະທານທີ່ດິນ ແລະ ການຈັດຕັ້ງປະຕິບັດວຽກງານຂອງບັນດາໂຄງການລົງທຶນຈຳນວນໜຶ່ງ ທີ່ມີຜົນກະທົບຕໍ່ສິ່ງແວດລ້ອມ, ສັງຄົມ ແລະ ທຳມະຊາດ; ພະແນກກະສິກຳ ແລະ ປ່າໄມ້ ລາຍງານການຈັດຕັ້ງປະຕິບັດວຽກງານຊົນລະປະທານ, ໂຮງງານຜະລິດຝຸ່ນ, ປຸ໋ຍ ແລະ ຫົວອາຫານສັດ, ສູນ, ສະຖານີ, ກຸ່ມ, ສະຫະກອນການຜະລິດກະສິກຳທີ່ພົວພັນເຖິງການສົ່ງເສີມການຜະລິດເພື່ອຄໍ້າປະກັນສະບຽງອາຫານ ແລະຜະລິດເປັນສິນຄ້າສົ່ງອອກ. ຈາກນັ້ນ, ກໍໄດ້ມີການສົນທະນາແລກປ່ຽນ, ຕັ້ງຄຳຖາມເຈາະຈີ້ມ ເພື່ອຊອກໃຫ້ເຫັນດ້ານດີທີ່ຄວນເສີມຂະຫຍາຍ, ຊຸກຍູ້ສົ່ງເສີມແລະດ້ານອ່ອນຂໍ້ຄົງຄ້າງທີ່ຈະຕ້ອງຊອກຫາວິທີການແກ້ໄຂໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ແນໃສ່ເຮັດໃຫ້ພາກສ່ວນກ່ຽວຂ້ອງ ຈັດຕັ້ງປະຕິບັດໃຫ້ຖືກຕ້ອງຕາມກົດໝາຍ, ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຕ່ລະໄລຍະ; ທັງຈະເປັນຂໍ້ມູນແລະບ່ອນອີງໃນການສັງລວມລາຍງານຕໍ່ຄະນະປະຈຳສະພາແຫ່ງຊາດ ແລະ ກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດ ຊຸດທີ IX ທີ່ຈະມາເຖິງນີ້.

ນອກນັ້ນ, ຍັງໄດ້ເຮັດວຽກຮ່ວມກັບຄະນະຄຸ້ມຄອງດ່ານສາກົນວັງເຕົ່າ ທີ່ບ້ານວັງເຕົ່າ ເມືອງໂພນທອງ ເຊິ່ງໄດ້ຮັບຟັງການລາຍງານກ່ຽວກັບການຈັດຕັ້ງປະຕິບັດການຄຸ້ມຄອງພາຫະນະຂົນສົ່ງສິນຄ້າເຂົ້າ-ອອກຜ່ານດ່ານ. ຈາກນັ້ນ ໄດ້ລົງຢ້ຽມຢາມ, ຕິດຕາມກວດກາຕົວຈິງຢູ່ພາກສະໜາມຄື: ໂຄງການຊົນລະປະທານຫ້ວຍວັງເຫ ເມືອງໂພນທອງ, ໂຄງການຊົນລະປະທານບ້ານໜອງຫອຍ ແລະ ເຂດປູກເຂົ້າ ຈຸດບ້ານໜອງບົວທອງ ເມືອງມຸນລະປາໂມກ, ອຸທິຍານແຫ່ງຊາດດົງຫົວສາວ ເມືອງປະທຸມພອນ (ຈຸດບ້ານນ້ຳພາກ) ແລະ ການຜະລິດກາເຟເຂດບ້ານປາກບ້ອງ ເມືອງປາກຊ່ອງ ແຂວງຈຳປາສັກ. ທີ່ແຂວງສາລະວັນ ໄດ້ລົງຢ້ຽມຢາມພື້ນທີ່ການຜະລິດເຂົ້າເປັນສິນຄ້າຂອງສະຫະກອນໜອງໃສຮ່ວມໃຈນາເພີເລີນເຊິ່ງມີ 50 ຄອບຄົວ, ມີເນື້ອທີ່ການຜະລິດລະດູຝົນ 114 ເຮັກຕາ ລະດູແລ້ງ 40 ກວ່າເຮັກຕາ; ພື້ນທີ່ຕົວຈິງຂອງຊົນລະປະທານ ທີ່ບ້ານນາທົ່ມ ແລະ ໂຮງງານຜະລິດເຫຼົ້າຂາວ ບ້ານນາແພງໃຫຍ່ ເມືອງຄົງເຊໂດນ.

ກ່ອນໜ້ານັ້ນ, ທ່ານ ມະນີໂສ ຊາມຸນຕີ ແລະ ຄະນະ ໄດ້ເຂົ້າພົບທ່ານ ປອ. ດາວວົງ ພອນແກ້ວ ເຈົ້າແຂວງໆສາລະວັນ ແລະ ທ່ານ ສົມບູນ ເຮືອງວົງສາ ຮອງເຈົ້າແຂວງໆຈຳປາສັກ ເພື່ອລາຍງານຈຸດປະສົງຂອງການມາເຄື່ອນໄຫວວຽກງານຢູ່ແຂວງ.

**(ສົມພອນ ໄຊປັນຍາ ແລະ ດີລຳພົນ ພົມມະຈັນ)**

# ກວດກາ ແລະ ປັບປຸງເນື້ອໃນປຶ້ມຄູ່ມືການຮັບ ແລະ ພິຈາລະນາຄຳຮ້ອງຂໍຄວາມເປັນທຳ




(ສພຊ) - ເພື່ອຜັນຂະຫຍາຍເນື້ອໃນຂອງກົດໝາຍ ທັງເປັນການໂຄສະນາ ເຜີຍແຜ່ ແລະ ເປັນບ່ອນອີງໃນການສ້າງຄວາມເຂົ້າໃຈກ່ຽວກັບການຮັບ ແລະ ພິຈາລະນາຄຳຮ້ອງຂໍຄວາມເປັນທຳ ໃຫ້ແກ່ພະນັກງານລັດຖະກອນທີ່ເຮັດໜ້າທີ່ໃນການຮັບ ແລະ ຄົ້ນຄວ້າຄຳຮ້ອງຂໍຄວາມເປັນທຳ ກໍຄືປະຊາຊົນຜູ້ຍື່ນຄຳຮ້ອງຂໍຄວາມເປັນທຳ ໃຫ້ໄດ້ຮູ້ເຖິງສິດ ແລະ ໜ້າທີ່, ຫຼັກການ, ຂັ້ນຕອນ, ວິທີການ ແລະ ກົນໄກໃນການຮັບແລະພິຈາລະນາຄຳຮ້ອງຂໍຄວາມເປັນທຳ ໄດ້ຢ່າງລະອຽດ, ມີຄວາມເປັນເອກະພາບ, ຖືກຕ້ອງຕາມກົດໝາຍກຳນົດໄວ້ ແນໃສ່ຮັບປະກັນໃຫ້ການເຄື່ອນໄຫວວຽກງານສອງພາກສ່ວນມີປະສິດທິພາບ, ຮັດກຸມ, ທັນເວລາ ແລະ ຖືກຕ້ອງຕາມກົດໝາຍ; ວັນທີ 15-17 ພຶດສະພານີ້ ທີ່ເມືອງແກ້ວອຸດົມ ແຂວງວຽງຈັນ ໄດ້ມີກອງປະຊຸມກວດກາ ແລະ ປັບປຸງເນື້ອໃນປຶ້ມຄູ່ມືການຮັບ ແລະ ພິຈາລະນາຄຳຮ້ອງຂໍຄວາມເປັນທຳ ຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ແລະ ຄະນະປະຈຳສະພາແຫ່ງຊາດ ໂດຍການເປັນປະທານຂອງທ່ານ ນາງທຸມມາລີ ວິງພະຈັນ ປະທານກຳມາທິການຍຸຕິທຳ ເຊິ່ງມີບັນດາທ່ານຮອງປະທານກຳມາທິການຍຸຕິທຳ, ຫົວໜ້າ-ຮອງຫົວໜ້າກົມ, ຄະນະພະແນກ ແລະ ພະນັກງານທີ່ກ່ຽວຂ້ອງເຂົ້າຮ່ວມ.

ທ່ານ ນາງ ທຸມມາລີ ວິງພະຈັນ ໃຫ້ຮູ້ວ່າ: ນັບຕັ້ງແຕ່ກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງຂໍຄວາມເປັນທຳ ໄດ້ຮັບການສ້າງ ແລະປັບປຸງມາທັງໝົດຈຳນວນ 4 ສະບັບ ເຫັນວ່າກົດໝາຍດັ່ງກ່າວຍັງບໍ່ທັນໄດ້ຮັບການຜັນຂະຫຍາຍອອກເປັນນິຕິກຳໃຕ້ກົດໝາຍທີ່ເປັນຄູ່ມື ໂດຍສະເພາະແມ່ນວຽກງານການຮັບ ແລະ ພິຈາລະນາຄຳຮ້ອງຂໍຄວາມເປັນທຳ; ດັ່ງນັ້ນ, ກຳມາທິການຍຸຕິທຳຈຶ່ງຈັດກອງປະຊຸມເພື່ອກວດກາຄືນ ແລະປັບປຸງເນື້ອໃນໃຫ້ມີຄວາມສົມບູນ ແລະ ສອດຄ່ອງກັບນິຕິກຳຕ່າງໆ ທີ່ໄດ້ມີການປັບປຸງໃນປັດຈຸບັນ.

ກອງປະຊຸມໄດ້ຮ່ວມກັນກວດກາ ແລະ ປັບປຸງຄືນເນື້ອໃນປຶ້ມຄູ່ມືການຮັບ ແລະ ພິຈາລະນາຄຳຮ້ອງຂໍຄວາມເປັນທຳ ຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ແລະ ຄະນະປະຈຳສະພາແຫ່ງຊາດ; ປັບປຸງຂໍ້ຕົກລົງວ່າດ້ວຍການຮັບ, ຄົ້ນຄວ້າ ແລະ ພິຈາລະນາຄຳຮ້ອງຂໍຄວາມເປັນທຳ; ຄົ້ນຄວ້າປັບປຸງເນື້ອໃນຂໍ້ຕົກລົງຮ່ວມວ່າດ້ວຍການປະສານງານລະຫວ່າງກຳມາທິການຍຸຕິທຳ ກັບ ສານປະຊາຊົນສູງສຸດ. ຈາກນັ້ນ, ກໍໄດ້ພ້ອມກັນສຸມໃສ່ຄົ້ນຄວ້າ ແລະ ປະກອບຄວາມຄິດຄວາມເຫັນຕໍ່ວຽກງານທີ່ນຳມາປຶກສາຫາລືໃນຄັ້ງນີ້ໃຫ້ມີຜົນສຳເລັດຕາມຄາດໝາຍທີ່ວາງໄວ້.

**(ນາງ ອາລິນ ສຸພົມມະປະກົດ)**

# ກບຜ ຕິດຕາມກວດກາ ແລະ ເກັບກຳຂໍ້ມູນຢູ່ແຂວງວຽງຈັນ



(ສພຂ) - ກອງປະຊຸມຕິດຕາມກວດກາການຈັດຕັ້ງປະຕິບັດວຽກງານສາສະໜາ ແລະ ວຽກງານບັນດາເຜົ່າ ປະຈຳປີ 2025 ໄດ້ຈັດຂຶ້ນທີ່ຫ້ອງປະຊຸມຂອງສະພາປະຊາຊົນແຂວງ (ສພຂ) ວຽງຈັນ ເມື່ອວັນພຸດທີ 14 ພຶດສະພາຜ່ານມາໂດຍການເປັນປະທານຂອງທ່ານ ຄຳຈັນ ໂສຕາປະເສີດ ຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການບັນດາເຜົ່າ(ກບຜ)ເຊິ່ງມີບັນດາທ່ານກຳມະການຂອງກບຜ, ປະທານ-ຮອງປະທານຄະນະກຳມະການ ແລະ ຄະນະເລຂາທິການ ສພຂ,ແນວລາວສ້າງຊາດແຂວງ, 3 ອົງການຈັດຕັ້ງມະຫາຊົນແຂວງ, ພະແນກພາຍໃນແຂວງ, ກອງບັນຊາການ ປກສ ແຂວງ ພ້ອມດ້ວຍພະນັກງານຈາກຂະແໜງການທີ່ກ່ຽວຂ້ອງ ເຂົ້າຮ່ວມ; ຈຸດປະສົງ ກໍເພື່ອປະຕິບັດຕາມກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ແຜນການເຄື່ອນໄຫວຕິດຕາມກວດກາ ແລະ ເກັບກຳຂໍ້ມູນການຈັດຕັ້ງປະຕິບັດກົດໝາຍ, ນິຕິກຳໃຕ້ກົດໝາຍຂອງຂະແໜງການທີ່ກ່ຽວຂ້ອງເປັນຕົ້ນ: ວຽກງານສາສະໜາ, ວຽກຊົນເຜົ່າ, ການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ, ການປົກຄອງທ້ອງຖິ່ນ, ການຈັດສັນພູມລຳເນົາ ແລະ ອາຊີບຄົງທີ່ ທີ່ຕິດພັນກັບວຽກງານ 3 ສ້າງ.

ກອງປະຊຸມໄດ້ຮັບຟັງການລາຍງານຈາກຂະແໜງການກ່ຽວຂ້ອງຂອງແຂວງ ເປັນຕົ້ນ: ການແກ້ໄຂປາກົດການຫຍໍ້ທໍ້ທາງສາສະໜາ ແລະ ບັນຫາຊົນເຜົ່າ ຢູ່ພາຍໃນແຂວງ, ການຈັດຕັ້ງປະຕິບັດດຳລັດວ່າດ້ວຍການຄຸ້ມຄອງແລະການປົກປ້ອງການເຄື່ອນໄຫວຂອງສາສະໜາ ສະບັບເລກທີ 315/ລບ, ລົງວັນທີ 16/8/2016, ວຽກງານປົກຄອງທ້ອງຖິ່ນ, ວຽກງານ 3 ສ້າງ, ວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ; ຈາກນັ້ນ, ກໍໄດ້ແລກປ່ຽນຄຳຄິດຄຳເຫັນຕໍ່ກັບບັນຫາດັ່ງກ່າວ ຢ່າງມີຈຸດສຸມ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານສາສະໜາ ແລະ ວຽກງານຊົນເຜົ່າ ຢູ່ແຂວງວຽງຈັນ ໄດ້ຮັບການຈັດຕັ້ງປະຕິບັດຢ່າງຖືກຕ້ອງຕາມແນວທາງນະໂຍບາຍຂອງພັກ, ລັດຖະທຳມະນູນ ແລະ ລະບຽບກົດໝາຍຂອງລັດ.

ທ່ານ ຄຳຈັນ ໂສຕາປະເສີດ ໄດ້ມີຄຳເຫັນເນັ້ນໜັກໃຫ້ພາກສ່ວນທີ່ກ່ຽວຂ້ອງສືບຕໍ່ເອົາໃຈໃສ່ຟື້ນຟູວັດທະນະທຳ ແລະ ແກ້ໄຂບັນຫາຮີດຄອງປະເພນີທີ່ບໍ່ຖືກຕ້ອງສອດຄ່ອງ ໃຫ້ປະຊາຊົນບັນດາເຜົ່າໄດ້ຮັບຮູ້ຢ່າງກວ້າງຂວາງ ແລະນຳເອົາແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ ກ່ຽວກັບວຽກງານສາສະໜາ ແລະຊົນເຜົ່າ ລົງສູ່ປະຊາຊົນໃຫ້ທົ່ວເຖິງແລະເລິກເຊິ່ງ.

**(ບູລາຕີ ແສນທະວົງ)**

# ສນສ ເກັບກຳຂໍ້ມູນ, ຕິດຕາມ ແລະ ຊຸກຍູ້ວຽກງານຢູ່ ສພຂ ໄຊຍະບູລີ




(ສພຂ) - ວັນທີ 19 ພຶດສະພານີ້ ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ໄຊຍະບູລີ ໄດ້ດຳເນີນກອງປະຊຸມເກັບກຳຂໍ້ມູນ, ຕິດຕາມ, ຊຸກຍູ້ວຽກງານຂອງສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ (ສນສ) ພາຍໃຕ້ການເປັນປະທານຮ່ວມຂອງທ່ານ ດຣ. ວິລະພັນ ສີລິທຳ ຮອງຫົວໜ້າສະຖາບັນຄົ້ນຄວ້ານິຕິກຳ ແລະ ທ່ານ ນາງ ວິລະພອນ ທອງພິມ ກຳມະການພັກແຂວງ, ຮອງປະທານສະພາປະຊາຊົນແຂວງ ໂດຍມີບັນດາທ່ານຄະນະປະຈຳ, ຮອງປະທານຄະນະກຳມະການ, ຮອງເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານທີ່ກ່ຽວຂ້ອງພາຍໃນ ສພຂ ພ້ອມດ້ວຍທີມງານຈາກ ສນສ ເຂົ້າຮ່ວມ.

ໃນວາລະດຳເນີນກອງປະຊຸມ, ໄດ້ຮັບຟັງລາຍງານການເຄື່ອນໄຫວໂດຍຫຍໍ້ຂອງສະພາປະຊາຊົນແຂວງ ເປັນຕົ້ນແມ່ນບັນຫາພົ້ນເດັ່ນ, ຜົນສຳເລັດ, ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງຂະແໜງຄົ້ນຄວ້າສັງລວມ ແລະ ຂໍ້ມູນຂ່າວສານ; ບາງຜົນສຳເລັດອັນພົ້ນເດັ່ນໃນການເຄື່ອນໄຫວວຽກງານ 1 ປີຜ່ານມາເຊິ່ງໄດ້ລົງຕິດຕາມກວດກາ ແລະ ຊຸກຍູ້ວຽກງານງານຂອງອົງການປົກຄອງ, ການປະຕິບັດລັດຖະທຳມະນູນ ແລະ ນິຕິກຳໃຕ້ກົດໝາຍ ຢ່າງປົກກະຕິພ້ອມທັງຕິດຕາມກວດກາການທົດແທນຄ່າເສຍຫາຍໃຫ້ແກ່ປະຊາຊົນ;ວຽກງານຄົ້ນຄວ້າວິທະຍາສາດ, ການເຝິກອົບຮົມ, ຂໍ້ມູນຂ່າວສານ ແລະ ຫ້ອງສະໝຸດ. ຈາກນັ້ນ, ກໍໄດ້ແລກປ່ຽນຄຳຄິດຄຳເຫັນຢ່າງກົງໄປກົງມາຕໍ່ການຈັດຕັ້ງປະຕິບັດວຽກງານໃນຂົງເຂດດັ່ງກ່າວ ລະຫວ່າງ ສນສ ກັບ ສພຂ ຢ່າງມີຈຸດສຸມ ແລະ ມີການສະເໜີບັນຫາທີ່ຍັງບໍ່ສອດຄ່ອງ ແນໃສ່ຕີລາຄາຄືນບັນດາໜ້າວຽກ ເພື່ອກ້າວໄປເຖິງການປັບປຸງແກ້ໄຂໃນຕໍ່ໜ້າ ໃຫ້ມີຄຸນນະພາບ, ສອດຄ່ອງກັບສະພາບຕົວຈິງ.

ໂອກາດນີ້, ທ່ານ ນາງ ວິລະພອນ ທອງພິມ ໄດ້ມີຄຳເຫັນຕໍ່ການຈັດຕັ້ງປະຕິບັດວຽກງານຂອງຄະນະເລຂາທິການສະພາປະຊາຊົນແຂວງ ເຊິ່ງທ່ານສະແດງຄວາມຍ້ອງຍໍຊົມເຊີຍຕໍ່ກັບວຽກງານຄະນະເລຂາທິການ ທີ່ເຫັນວ່າມີຜົນສຳເລັດຫຼາຍດ້ານ ພ້ອມທັງຮຽກຮ້ອງໃຫ້ເອົາໃຈໃສ່ຈັດຕັ້ງປະຕິບັດວຽກງານໃນການເປັນເສນາທິການໃນທຸກໆດ້ານ ເພື່ອເຮັດໃຫ້ການນຳພາວຽກງານພາຍໃນສະພາປະຊາຊົນແຂວງ ໄດ້ຮັບການພັດທະນາດີຂຶ້ນກວ່າເກົ່າ ແລະ ຈະນຳເອົາຄຳສະເໜີທີ່ໄດ້ແລກປ່ຽນກັນໃນຄັ້ງນີ້ ໄປສະເໜີຫາຂັ້ນເທິງ ເພື່ອພິຈາລະນາ, ຄົ້ນຄວ້າແກ້ໄຂໃຫ້ມີຄວາມຖືກຕ້ອງ ແລະສອດຄ່ອງຂຶ້ນເທື່ອລະກ້າວ.

**(ອິນທີ ຂຽວສີຟ້າ)**

# ຕິດຕາມກວດກາການຈັດຕັ້ງປະຕິບັດວຽກງານຂົງເຂດເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ



(ສພຂ) - ວັນທີ 14 ພຶດສະພານີ້ ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ໄຊຍະບູລີ ໄດ້ມີກອງປະຊຸມຕິດຕາມກວດກາການຈັດຕັ້ງປະຕິບັດວຽກງານໃນຂົງເຂດເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ພາຍໃຕ້ການເປັນປະທານຮ່ວມຂອງທ່ານ ປອ. ເກດແກ້ວ ສີຫາລາດ ຮອງປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ແລະທ່ານ ເພັງນິລັນ ຄຳພັນເພັງ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ; ມີບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າພະແນກການທີ່ກ່ຽວຂ້ອງ ພ້ອມດ້ວຍພະນັກງານພາຍໃນຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ຂອງ ສພຂ ເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງການລາຍງານສະພາບການຈັດຕັ້ງປະຕິບັດບາງວຽກງານຂອງ 4 ພະແນກການຂອງແຂວງ ຄື: ໂຍທາທິການແລະຂົນສົ່ງ, ການເງິນ, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະສິກຳ ແລະ ປ່າໄມ້; ຈາກນັ້ນ; ຜູ້ເຂົ້າຮ່ວມໄດ້ແລກປ່ຽນຄຳຄິດ-ຄຳເຫັນຢ່າງກົງໄປກົງມາ ເພື່ອຍົກໃຫ້ເຫັນດ້ານດີ, ດ້ານອ່ອນ, ດ້ານຄົງຄ້າງ ແລະ ສະເໜີວິທີການແກ້ໄຂໃນຕໍ່ໜ້າ. ພ້ອມດຽວກັນ, ທ່ານ ປອ. ເກດແກ້ວ ສີຫາລາດ ກໍໄດ້ມີຄຳເຫັນຊີ້ນຳພະແນກການຂອງແຂວງ ຈົ່ງສືບຕໍ່ເພີ່ມທະວີເອົາໃຈໃສ່ຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງຕົນ ໃຫ້ມີປະສິດທິພາບແລະປະສິດທິຜົນສູງຂຶ້ນກວ່າເກົ່າ.

**(ໂພໄຊ ແກ້ວກັນຍາ)**

## ປະທານ ກປຊສ ຊຸກຍູ້ວຽກງານຢູ່ດ່ານສາກົນນ້ຳເງິນ ແລະ ພົບປະໂອ້ລົມພະນັກງານກອງພົນທີ 2



(ສພຊ) - ວັນທີ 20 ພຶດສະພາຜ່ານມາ, ສະຫາຍ ພົຕ. ວົງສັກ ພັນທະວົງ ຄະນະປະຈຳສະພາແຫ່ງຊາດ (ສພຊ) , ປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ກປຊສ) ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຊຸກຍູ້ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຢູ່ດ່ານສາກົນນ້ຳເງິນເມືອງເງິນແຂວງໄຊຍະບູລີ ໂດຍມີຫົວໜ້າຄຸ້ມຄອງດ່ານສາກົນນ້ຳເງິນ, ຫົວໜ້າພາສີແລະພາກສ່ວນທີ່ກ່ຽວຂ້ອງຂອງເມືອງ ໃຫ້ການຕ້ອນຮັບຢ່າງອົບອຸ່ນ.

ສະຫາຍ ພັທ. ຈອນພົນ ມິນວິຈິດ ຫົວໜ້າຄຸ້ມຄອງດ່ານສາກົນນ້ຳເງິນ ລາຍງານໃຫ້ຮູ້ວ່າ: ຄະນະຄຸ້ມຄອງດ່ານສາກົນນ້ຳເງິນໄດ້ຕັ້ງໜ້າສຸມໃສ່ນຳພາ-ຊີ້ນຳບັນດາຂະແໜງການ ກໍຄືເຈົ້າໜ້າທີ່ປະຈຳດ່ານ ເຮັດໜ້າທີ່ກວດກາຄົນເຂົ້າ-ອອກເມືອງ ໂດຍຕິດພັນກັບການປ້ອງກັນເວນຍາມດ່ານຕະຫຼອດ 24 ຊົ່ວໂມງ ພ້ອມທັງກວດກາລາດຕະເວນຕາມຂອບເຂດຄວາມຮັບຜິດຊອບຢ່າງປົກກະຕິເພື່ອຮັບປະກັນໃຫ້ບໍລິເວນດັ່ງກ່າວ ມີຄວາມສະຫງົບປອດໄພ 100% ເຊິ່ງໃນ 4 ເດືອນຕົ້ນປີ 2025 ມີຄົນເຂົ້າເມືອງ 44,572 ຄົນ ຍິງ 15,015 ຄົນ, ຄົນອອກເມືອງ 44,067 ຄົນ ຍິງ 15,560, ພາຫານະເຂົ້າເມືອງ 9,267 ຖ້ຽວຄັນ, ພາຫານະອອກເມືອງ 8,983 ຖ້ຽວຄັນ.

ສະຫາຍ ພົຕ. ວົງສັກ ພັນທະວົງ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນງານການນຳພາ-ຊີ້ນຳຂອງຄະນະຄຸ້ມຄອງດ່ານສາກົນນ້ຳເງິນ ທີ່ໄດ້ເອົາໃຈໃສ່ເຄື່ອນໄຫວເຮັດໜ້າທີ່ວິຊາສະເພາະຂອງຕົນດ້ວຍຄວາມຈູບຈ້າວຫ້າວຫັນ ທັງເນັ້ນໜັກໃຫ້ພ້ອມກັນສືບຕໍ່ຮັກສາມູນເຊື້ອຄວາມສາມັກຄີພາຍໃນ-ພາຍນອກໃຫ້ແໜ້ນແຟ້ນ ພ້ອມກັນຕິດຕາມກວດກາການເຂົ້າ-ອອກໃຫ້ເຂັ້ມງວດ, ຖືກຕ້ອງຕາມລະບຽບກົດໝາຍ ແນໃສ່ເຮັດໃຫ້ດ່ານສາກົນນ້ຳເງິນມີຄວາມສະຫງົບປອດໄພ 100%.

ວັນທີ 22 ພຶດສະພາ, ສະຫາຍ ພົຕ. ປອ. ວົງສັກ ພັນທະວົງ ພ້ອມດ້ວຍຄະນະ ໄດ້ພົບປະໂອ້ລົມພະນັກງານຫຼັກແຫຼ່ງກອງພົນທີ 2 ໂດຍມີສະຫາຍ ພົຈວ. ຄຳດີ ໄຊຍະວົງ ເລຂາຄະນະພັກ, ຫົວໜ້າການເມືອງກອງພົນທີ 2, ບັນດາຄະນະພັກ-ຄະນະບັນຊາກອງພົນ ແລະ ພະນັກງານຫຼັກແຫຼ່ງທົ່ວກອງພົນທີ 2 ເຂົ້າຮ່ວມຢ່າງພ້ອມພຽງ.

ສະຫາຍ ພົຈວ. ຄຳດີ ໄຊຍະວົງ ໄດ້ລາຍງານໂດຍຫຍໍ້ກ່ຽວກັບສະພາບຈຸດພິເສດ, ທີ່ຕັ້ງ, ພາລະບົດບາດ ແລະ ໜ້າທີ່ການເມືອງຂອງກົມກອງ ລວມທັງຜົນງານທີ່ຍາດມາໄດ້ຕະຫຼອດໄລຍະຜ່ານມາ ເຊິ່ງຍົກໃຫ້ເຫັນຫຼາຍຂົງເຂດວຽກງານທີ່ຄະນະພັກ-ຄະນະບັນຊາກອງພົນທີ 2 ໄດ້ພ້ອມກັນຈັດຕັ້ງປະຕິບັດດ້ວຍຄວາມຮັບຜິດຊອບສູງ ໂດຍປິ່ນອ້ອມ 4 ໜ້າທີ່ໃຫຍ່ 26 ແຜນງານ ທີ່ຄະນະພັກກະຊວງປ້ອງກັນປະເທດວາງອອກເຊິ່ງມີຜົນສຳເລັດຫຼາຍດ້ານທີ່ພົ້ນເດັ່ນ ເຮັດໃຫ້ສະພາບຂອບເຂດກົມກອງຮັບຜິດຊອບ ມີຄວາມສະຫງົບໂດຍພື້ນຖານ, ຊີວິດການເປັນຢູ່ຂອງພະນັກງານ-ນັກຮົບ ໄດ້ຮັບການປັບປຸງດີຂຶ້ນ, ພື້ນຖານຂອງກົມກອງໄດ້ມີການພັດທະນາດີຂຶ້ນ ຕາມທິດສ້າງນັກຮົບວັດທະນະທຳ ກົມກອງວັດທະນະທຳຕາມທິດນຳຂອງຂັ້ນເທິງວາງອອກ, ຮັກສາໄດ້ທາດແທ້ມູນເຊື້ອອັນດີງາມຂອງກອງທັບ ກໍຄືຮັກສາໄດ້ນາມ ມະຍົດກອງພົນທີ 2 ວິລະຊົນ, ມີຄວາມຈົງຮັກພັກດີຕໍ່ພັກ ຕໍ່ປະເທດຊາດ ແລະ ປະຊາຊົນລາວບັນດາເຜົ່າ, ຮັກສາໄດ້ຄວາມສາມັກຄີພາຍໃນ ແລະ ອຳນາດການປົກຄອງທ້ອງຖິ່ນ, ປົກປັກຮັກສາເຂດນ້ຳແດນດິນເວົ້າລວມ, ເວົ້າສະເພາະຂອບເຂດແຂວງໄຊຍະບູລີ ໃຫ້ມີຄວາມສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບ, ເສດຖະກິດໄດ້ຮັບການພັດທະນາດີຂຶ້ນເລື້ອຍໆ.

ສະຫາຍ ພົຕ. ປອ. ວົງສັກ ພັນທະວົງ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນງານ ແລະ ຜົນສຳເລັດໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານທີ່ຄະນະພັກ-ຄະນະບັນຊາ, ພະນັກງານຫຼັກແຫຼ່ງກອງພົນທີ 2 ຍາດມາໄດ້ຕະຫຼອດໄລຍະຜ່ານມາ ພ້ອມທັງຍົກໃຫ້ເຫັນພາລະບົດບາດຂອງສະພາແຫ່ງຊາດແລະຊີ້ແຈ້ງໃຫ້ເຫັນຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 8 ຂອງ ສພຊ ຊຸດທີ IX ແລະ ຮຽກຮ້ອງໃຫ້ຄະນະພັກ-ຄະນະບັນຊາແຕ່ລະຂັ້ນ ຍົກສູງນ້ຳໃຈຄວາມຮັບຜິດຊອບຂອງຕົນ ຕໍ່ໜ້າທີ່ການເມືອງທີ່ພັກ-ລັດຂັ້ນເທິງ ກໍຄືການຈັດຕັ້ງມອບໝາຍໃຫ້, ເປັນເຈົ້າການປະຕິບັດຄຳຂວັນຮັກຊາດ ແລະ ພັດທະນາ, ຕັ້ງໜ້າປັບປຸງກໍ່ສ້າງກຳລັງໃຫ້ມີຄວາມເຕີບໃຫຍ່ເຂັ້ມແຂງ, ປັບປຸງກໍ່ສ້າງກົມກອງຄ້າຍຄູ ໃຫ້ມີຄວາມແໜ້ນໜາຖາວອນ, ເປັນເຈົ້າການເຮັດໜ້າທີ່ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ເຮັດໃຫ້ຂອບເຂດກົມກອງຮັບຜິດຊອບ ມີຄວາມສະຫງົບ, ປະຊາຊົນມີທາງທຳມາຫາກິນ, ມີໂອກາດພັດທະນາເສດຖະກິດ-ສັງຄົມ, ຫັນລົງກໍ່ສ້າງຮາກຖານການເມືອງ ຕິດພັນກັບການປະຕິບັດ 2 ວາລະແຫ່ງຊາດຂອງລັດຖະບານ ເພື່ອຕ້ານ ແລະ ສະກັດກັ້ນປາກົດການຫຍໍ້ທໍ້ຂອງສັງຄົມ ໃຫ້ນັບມື້ຫຼຸດໜ້ອຍຖອຍລົງ.

ໂອກາດທີ່ລົງເຄື່ອນໄຫວວຽກງານໃນຄັ້ງນີ້, ສະຫາຍ ພົຕ. ປອ. ວົງສັກ ພັນທະວົງ ໄດ້ນຳເອົາອຸປະກອນກິລາ ແລະ ເຄື່ອງບໍລິໂພກຈຳນວນໜຶ່ງ ມອບໃຫ້ກອງພົນທີ 2 ອີກດ້ວຍ.

**(ຖວທ ເມືອງເງິນ ແລະ ສຸວັນໂນ ທະລັງສີ)**



## ກວດກາເນື້ອໃນຮອບດ້ານ ຮ່າງກົດໝາຍພະນັກງານໄອຍະການ



(ສພຊ)-ວັນທີ 16-17 ພຶດສະພານີ້ ທີ່ສະພາແຫ່ງຊາດ (ສພຊ) ໄດ້ມີກອງປະຊຸມກວດກາເນື້ອໃນຮອບດ້ານຮ່າງກົດໝາຍວ່າດ້ວຍພະນັກງານໄອຍະການ (ສະບັບປັບປຸງ) ໂດຍການເປັນປະທານຂອງທ່ານ ຄຳແພງ ວິລະພັນ ປະທານກຳມາທິການກົດໝາຍ; ເຂົ້າຮ່ວມມີບັນດາທ່ານຮອງປະທານກຳມາທິການທີ່ກ່ຽວຂ້ອງຂອງ ສພຊ, ຮອງລັດຖະມົນຕີກະຊວງ ແລະ ອົງການທີ່ກ່ຽວຂ້ອງ, ຄະນະທີ່ປຶກສາທາງດ້ານກົດໝາຍຂອງຄະນະປະຈຳສະພາແຫ່ງຊາດ, ຫົວໜ້າ-ຮອງຫົວໜ້າກົມ, ຄະນະພະແນກ ແລະ ພະນັກງານ-ລັດຖະກອນຈາກພາກສ່ວນທີ່ກ່ຽວຂ້ອງ.

ທ່ານ ຄຳແພງ ວິລະພັນ ກ່າວວ່າ: ກອງປະຊຸມຄັ້ງນີ້ແມ່ນເພື່ອຄົ້ນຄວ້າ, ວິເຄາະວິໄຈເນື້ອໃນຕ່າງໆຂອງກົດໝາຍຢ່າງລະອຽດ, ເລິກເຊິ່ງຮັບປະກັນຄວາມພ້ອມທາງດ້ານເນື້ອໃນຂອງຮ່າງກົດໝາຍວ່າດ້ວຍພະນັກງານໄອຍະການ ກ່ອນນຳເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດຊຸດທີ IX ເຊິ່ງຈະໄດ້ພ້ອມກັນຄົ້ນຄວ້າ ແລະ ປະກອບຄຳເຫັນຢ່າງມີເຫດຜົນ, ກົງໄປກົງມາ ແນໃສ່ເຮັດໃຫ້ຮ່າງກົດໝາຍສະບັບນີ້ ມີເນື້ອໃນຄົບຖ້ວນ, ຮັດກຸມ ແລະ ສາມາດຈັດຕັ້ງປະຕິບັດໄດ້ຢ່າງມີປະສິດທິພາບ ແລະ ປະສິດທິຜົນ; ຫາກມີເນື້ອໃນ, ບັນຫາໃດ ທີ່ກອງປະຊຸມບໍ່ສາມາດຕົກລົງເປັນເອກະພາບກັນໄດ້ນັ້ນ ຈະໄດ້ນຳສະເໜີຂໍຄຳເຫັນຈາກກອງປະຊຸມຄະນະປະຈຳສະພາແຫ່ງຊາດ ເພື່ອພິຈາລະນາຕື່ມ.

ທ່ານ ນາງ ພອນເພັດ ອຸ່ນແກ້ວ ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ກ່າວວ່າ: ເພື່ອເຮັດໃຫ້ການຄຸ້ມຄອງພະນັກງານໄອຍະການ ໄດ້ຢ່າງລວມສູນ, ເປັນເອກະພາບ ແລະ ມີປະສິດທິຜົນ ຈຶ່ງມີຄວາມຈຳເປັນຕ້ອງສ້າງເຄື່ອງມືໃນການຄຸ້ມຄອງພະນັກງານໄອຍະການໃນຂອບເຂດທົ່ວປະເທດ ດ້ວຍການກຳນົດມາດຕະຖານ, ເງື່ອນໄຂ, ການສອບເສັງ, ການປະເມີນຜົນ, ການເລື່ອນຂັ້ນ, ການປົດຂັ້ນ, ການຍົກຍ້າຍ ລວມທັງກຳນົດນະໂຍບາຍຕໍ່ພະນັກງານ, ຈັນຍາບັນ, ຈັນຍາທຳ, ການປະຕິບັດວິໄນ, ການກວດກາ, ການປົກປ້ອງ, ສິດ ແລະ ໜ້າທີ່ຂອງພະນັກງານໄອຍະການປະຊາຊົນແຕ່ລະຂັ້ນໃຫ້ຈະແຈ້ງ, ຄົບຖ້ວນ ເພື່ອຮັບປະກັນໃຫ້ພະນັກງານໄອຍະການ ໄດ້ຮັບການພັດທະນາຮອບດ້ານດ້ວຍຄຸນນະພາບບໍ່ວ່າຈະເປັນທາງດ້ານທິດສະດີການເມືອງ-ການປົກຄອງ, ວຽກງານວິຊາສະເພາະ, ພາສາຕ່າງປະເທດ ແລະ ອື່ນໆ ເພື່ອປະກອບສ່ວນເຂົ້າໃນການປະຕິບັດໜ້າທີ່ການເມືອງ ໃຫ້ມີຜົນສຳເລັດ ແລະ ຖືກຕ້ອງຕາມກົດໝາຍ.



ຕອນສວາຍວັນທີ 15 ພຶດສະພາ, ທ່ານ ຄຳແພງ ວິລະພັນ ເຊິ່ງເປັນສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 8, ຕາງໜ້າໃຫ້ຄະນະປະຈຳສະພາປະຊາຊົນແຂວງຫົວພັນ ໄດ້ມອບໃບຍ້ອງຍໍໃຫ້ກຸ່ມບໍລິສັດ ວຽງຈັນ ວິສະວະກຳໄຟຟ້າ ທີ່ມີຜົນງານດີເດັ່ນມອບອຸປະກອນກິລາໃຫ້ສະພາປະຊາຊົນແຂວງຫົວພັນ ເພື່ອນຳໄປມອບຕໍ່ໃຫ້ບັນດາໂຮງຮຽນຢູ່ເຂດຫ່າງໄກສອກຫຼີກ ລວມມູນຄ່າ 40 ລ້ານກີບ, ກ່າວຮັບໂດຍທ່ານ ບຸນແຖວ ພົມມະໄຊສີ ຕາງໜ້າບໍລິສັດ ວຽງຈັນ ວິສະວະກຳໄຟຟ້າ.

**(ສອນສັກ ວັນວິໄຊ)**

## ມັດທະຍົມໜອງບອນ ຢ້ຽມຊົມຫ້ອງມູນເຊື້ອສະພາແຫ່ງຊາດ



(ສພຊ) - ຕອນສວາຍວັນທີ 13 ພຶດສະພາຜ່ານມາ, ກົມສື່ມວນຊົນ ຄະນະເລຂາທິການສະພາແຫ່ງຊາດ ໄດ້ຕ້ອນຮັບ ແລະ ນຳພານັກຮຽນໂຮງຮຽນມັດທະຍົມສຶກສາສົມບູນໜອງບອນ ທີ່ມາທັດສະນະສຶກສາຢ້ຽມຊົມຫໍມູນເຊື້ອ ຈຳນວນ 40 ຄົນ ເຊິ່ງນຳໂດຍທ່ານ ອາຈານ ສຸກສາຄອນ ວົງລັດສະໝີ ເລຂາຊາວໜຸ່ມໂຮງຮຽນດັ່ງກ່າວ.

ການມາທັດສະນະສຶກສາຄັ້ງນີ້, ໄດ້ຮັບຟັງການບັນລະຍາຍໂດຍຫຍໍ້ເຫດການຕ່າງໆໃນປະຫວັດສາດ, ຢ້ຽມຊົມການວາງສະແດງຮູບພາບ ແລະ ວັດຖຸພັນຕ່າງໆ, ຊົມຮູບເງົາປະຫວັດຄວາມເປັນມາຂອງສະພາປະຊາຊົນສູງສຸດ ຊຸດທີ I ເຖິງ ສະພາແຫ່ງຊາດ ຊຸດປັດຈຸບັນ (ຊຸດທີ IX) ແລະ ຢ້ຽມຊົມຫ້ອງປະຊຸມໃຫຍ່ຂອງສະພາແຫ່ງຊາດ ເຮັດໃຫ້ນ້ອງໆນັກຮຽນ, ຄູ-ອາຈານ ມີຄວາມຮັບຮູ້ເຂົ້າໃຈກ່ຽວກັບພາລະບົດບາດ, ສິດ ແລະ ໜ້າທີ່ຂອງອົງການນິຕິບັນຍັດຫຼາຍຂຶ້ນ.

**(ສອນສັກ ວັນວິໄຊ)**

# ຕິດຕາມກວດກາການປະຕິບັດ ກົດໝາຍຂອງສະພາແຫ່ງຊາດ




(ສພຊ)-ສານປະຊາຊົນສູງສຸດ (ສປສສ) ຮ່ວມກັບກຳມາທິການຍຸຕິທຳ ໄດ້ຈັດກອງປະຊຸມຕິດຕາມກວດກາການປະຕິບັດກົດໝາຍຂອງສະພາແຫ່ງຊາດ ເມື່ອວັນທີ 12 ພຶດສະພາຜ່ານມາ ໂດຍການເປັນປະທານຮ່ວມຂອງທ່ານ ນາງ ທຸມມາລີ ວົງພະຈັນ ປະທານກຳມາທິການຍຸຕິທຳ ແລະ ທ່ານ ບຸນຂວາງ ທະວີສັກ ຮອງປະທານສານປະຊາຊົນສູງສຸດ ເຊິ່ງມີບັນດາທ່ານຫົວໜ້າຄະນະສານ, ຫົວໜ້າກົມ, ຜູ້ພິພາກສາເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ຮັບຟັງລາຍງານການຈັດຕັ້ງປະຕິບັດການຕິດຕາມກວດກາການເຄົາລົບ ແລະ ປະຕິບັດກົດໝາຍ (ການປະຕິບັດຫຼັກການໂຕ້ແຍ່ງ-ໂຕ້ຖຽງ, ການປະຕິບັດມະຕິກອງປະຊຸມສະພາແຫ່ງຊາດ ກ່ຽວກັບການ ເຄື່ອນໄຫວວຽກງານປະຈຳປີ 2024 ແລະ ທິດທາງແຜນການປະຈຳປີ2025ສະບັບເລກທີ 141/ສພຊ, ລົງວັນທີ 11 ທັນວາ 2024); ເພື່ອຈັດຕັ້ງປະຕິບັດວຽກງານດັ່ງກ່າວໃຫ້ມີຜົນສຳເລັດ, ປະທານສານປະຊາຊົນສູງສຸດ ໄດ້ອອກຂໍ້ຕົກລົງສະບັບເລກທີ 613/ສປສສ, ລົງວັນທີ 18 ສິງຫາ 2023 ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບ ລົງຕິດຕາມຊຸກຍູ້ການໂຕ້ແຍ່ງ-ໂຕ້ຖຽງໃນທີ່ປະຊຸມສານ.

ຜ່ານການຈັດຕັ້ງປະຕິບັດຕົວຈິງ, ຄະນະຮັບຜິດຊອບໄດ້ລົງຕິດຕາມຊຸກຍູ້ການໂຕ້ແຍ່ງ-ໂຕ້ຖຽງໃນທີ່ປະຊຸມສານ ໄດ້ 7 ແຂວງ ແລະ 19 ເຂດ ໂດຍໄດ້ເຊີນສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນແຂວງ-ນະຄອນຫຼວງວຽງຈັນ ເຂົ້າຮ່ວມຕິດຕາມນຳເຊິ່ງມີຈຸດປະສົງເພື່ອລົງຕິດຕາມຊຸກຍູ້ໃຫ້ເຫັນຂັ້ນຕອນ, ວິທີການດຳເນີນຄະດີຢູ່ສານປະຊາຊົນແຂວງ, ສານປະຊາຊົນເຂດ ໃນການຈັດຕັ້ງປະຕິບັດຕາມກົດໝາຍກຳນົດ ໂດຍສະເພາະແມ່ນການໃຫ້ສິດແກ່ໂຈດ, ຈຳເລີຍ, ບຸກຄົນທີສາມ ໄດ້ມີການປະກອບຂໍ້ມູນຫຼັກຖານ ນຳມາໂຕ້ແຍ່ງ-ໂຕ້ຖຽງຕໍ່ເຫດການ, ຂໍ້ສະເໜີ ຫຼື ຂໍ້ມູນຫຼັກຖານ ທີ່ຖືເປັນປະເດັນຂອງແຕ່ລະຝ່າຍທີ່ສະເໜີມານັ້ນ ຢ່າງເລິກເຊິ່ງ, ຄົບຖ້ວນ ແລະ ໝົດຈິດໝົດໃຈຂອງທັງສອງຝ່າຍ; ຖືເອົາຜົນຂອງການໂຕ້ແຍ່ງ-ໂຕ້ຖຽງເປັນບ່ອນອີງໃນການພິຈາລະນາຕັດສິນ ແລະພິພາກສາ ໃຫ້ລະອຽດ, ຈະແຈ້ງ ແລະ ຖືກຕ້ອງ ໂດຍສະເພາະຢູ່ຂັ້ນຕົ້ນ ແລະ ຂັ້ນອຸທອນ; ຮັບປະກັນໃຫ້ຜູ້ພິພາກສາ ໄດ້ນຳໃຊ້ທຸກຂັ້ນຕອນ, ວິທີການພິຈາລະນາແກ້ໄຂຄະດີ ໃຫ້ມີຄວາມແຈ້ງຂາວ, ຕັດສິນ ແລະ ພິພາກສາຢ່າງຖືກຕ້ອງ, ເປັນທຳ ແລະ ນຳໄປຈັດຕັ້ງປະຕິບັດໄດ້.

**(ຕຸໄລເພັດ, ສປສສ)**

# ນັກສຶກສາທິດສະດີການເມືອງຂັ້ນຕົ້ນ ຂອງ ສພຊ ທັດສະນະສຶກສາຢູ່ຄຳມ່ວນ



(ສພຊ) - ວັນທີ 21 ພຶດສະພານີ້, ຄະນະຄູ-ອາຈານ ແລະ ນັກສຶກສາທິດສະດີການເມືອງຂັ້ນຕົ້ນ ຊຸດທີ III ຂອງສະພາແຫ່ງຊາດ (ສພຊ) ນຳໂດຍທ່ານ ສິງຄຳ ວົງພະຈັນ ຮອງເລຂາທິການສະພາແຫ່ງຊາດ, ຄະນະຮັບຜິດຊອບທິດສະດີການເມືອງຂັ້ນຕົ້ນ ໄດ້ເຄື່ອນໄຫວທັດສະນະສຶກສາ, ພົບປະແລກປ່ຽນບົດຮຽນ ແລະ ຂໍ້ມູນ ກ່ຽວກັບການພັດທະນາເສດຖະກິດ-ສັງຄົມຂອງແຂວງ ແລະ ບົດຮຽນອື່ນໆ ຢູ່ແຂວງຄຳມ່ວນ ໂດຍການຕ້ອນຮັບຂອງທ່ານ ສົມສະອາດ ອຸ່ນສີດາ ຮອງເຈົ້າແຂວງໆຄຳມ່ວນເຊິ່ງມີບັນດາພະແນກການກ່ຽວຂ້ອງເຂົ້າຮ່ວມ.

ຕາງໜ້າຄະນະຮັບຜິດຊອບ ໄດ້ລາຍງານແຜນເຄື່ອນໄຫວກ່ຽວກັບການນຳພານັກສຶກສາ ທັງໝົດ 36 ທ່ານ ຍິງ 12 ທ່ານມາທັດສະນະສຶກສາຢູ່ແຂວງຄຳມ່ວນ ເຊິ່ງພາຍຫຼັງຮຽນທິດສະດີແລ້ວ ກໍໄດ້ຮຽນຮູ້ພຶດຕິກຳຕົວຈິງເພື່ອນຳເອົາຂໍ້ມູນມາປະກອບເຂົ້າໃນບົດຂອງຕົນ.

ໂອກາດດັ່ງກ່າວ, ທ່ານ ສົມສະອາດ ອຸ່ນສີດາ ໄດ້ກ່າວສະແດງຄວາມຕ້ອນຮັບ ແລະ ຂອບໃຈມາຍັງຄະນະຮັບຜິດຊອບ, ຄູ-ອາຈານ ແລະ ນັກສຶກສາ ທີ່ໄດ້ເລືອກເອົາແຂວງຄຳມ່ວນເປັນບ່ອນທັດສະນາສຶກສາເກັບກຳຂໍ້ມູນ ພ້ອມທັງແຈ້ງໂດຍສັງເຂບສະພາບຈຸດພິເສດແລະການພັດທະນາເສດຖະກິດ-ສັງຄົມ6 ເດືອນຕົ້ນປີ 2025 ຂອງແຂວງ ລວມເຖິງແນວທາງ, ນະໂຍບາຍ, ທ່າແຮງ, ຂໍ້ສະດວກ, ຂໍ້ຫຍຸ້ງຍາກໃນການພັດທະນາ ແລະ ວຽກງານ 3 ສ້າງ. ພ້ອມກັນນີ້, ຍັງໄດ້ມີການແລກປ່ຽນຂໍ້ມູນ, ປະກອບຄຳເຫັນ, ຖາມ-ຕອບ ເຊິ່ງກັນແລະກັນ ລະຫວ່າງນັກສຶກສາກັບບັນດາພະແນກການ.

**(ມະນີວັນ,
ນັກຂ່າວແຂວງຄຳມ່ວນ)**

# ກອງປະຊຸມໃຫຍ່ສະມາຊິກຊາວໜຸ່ມ ສພຊ ຄັ້ງທີ V



(ສພຊ) - ກອງປະຊຸມໃຫຍ່ສະມາຊິກຊາວໜຸ່ມສະພາແຫ່ງຊາດ (ສພຊ) ຄັ້ງທີ V ໄດ້ຈັດຂຶ້ນໃນວັນທີ 20 ພຶດສະພານີ້ ໂດຍການເປັນປະທານຂອງສະຫາຍ ພອນແກ້ວ ຕົ້ນວໍລະຈິດ ກຳມະການຄະນະບໍລິຫານງານສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ (ຄຊປປລ), ເລຂາຄະນະບໍລິຫານງານຊາວໜຸ່ມສະພາແຫ່ງຊາດ ສະໄໝທີ IV, ມີສະຫາຍ ທອງລີ ສີສຸລິດ ຮອງເລຂາຄະນະບໍລິຫານງານສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ, ສະຫາຍ ທັນຕາ ກອງຜາລີ ກຳມະການຄະນະບໍລິຫານງານພັກສະພາແຫ່ງຊາດ, ຜູ້ຊີ້ນຳອົງການຈັດຕັ້ງມະຫາຊົນ, ບັນດາສະຫາຍຕາງໜ້າຈາກຮາກຖານພັກ, ອົງການຈັດຕັ້ງມະຫາຊົນ ພ້ອມດ້ວຍສະມາຊິກຊາວໜຸ່ມພາຍໃນ ສພຊ ເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ຮັບຟັງການຜ່ານຮ່າງບົດລາຍງານການເມືອງ ແລະ ທິດທາງແຜນການເຄື່ອນໄຫວວຽກງານແຕ່ປີ2025-2030ຂອງຄະນະບໍລິຫານງານຊາວໜຸ່ມສະພາແຫ່ງຊາດ; ການປະກອບຄຳເຫັນຈາກຕາງໜ້າສະຫະພັນກຳມະບານສະພາແຫ່ງຊາດ; ຜ່ານຂໍ້ຕົກລົງວ່າດ້ວຍການຮັບຮອງເປັນຄະນະຊາວໜຸ່ມປະຊາຊົນປະຕິວັດລາວ 4 ບຸກ ແລະ ຂໍ້ຕົກລົງນາມມະຍົດທຸງໄຊນຳໜ້າຂອງ ຄຊປປລ ພ້ອມກັນນັ້ນ, ກໍໄດ້ມີພິທີມອບໃບຍັ້ງຢືນ 4 ບຸກແລະທຸງໄຊນຳໜ້າຂະບວນການ 4 ບຸກ ໃຫ້ບຸກຄົນ ແລະ ໜ່ວຍຊາວໜຸ່ມຮາກຖານ, ມອບຫຼຽນຊາວໜຸ່ມຕະລຸມບອນແລະໃບຍ້ອງຍໍໃຫ້ຄະນະບໍລິຫານງານຊາວໜຸ່ມ ສພຊ ຄັ້ງທີ IV ເຊິ່ງມອບໂດຍສະຫາຍ ທອງລີ ສີສຸລິດ. ຈາກນັ້ນ, ສະຫາຍ ພອນແກ້ວ ຕົ້ນວໍລະຈິດ ກໍໄດ້ຂຶ້ນຜ່ານບົດສຳຫຼວດການນຳພາລວມຂອງຄະນະບໍລິຫານງານຊາວໜຸ່ມສະພາແຫ່ງຊາດ ຄັ້ງທີ IV ແລະ ຄະນະບໍລິຫານງານຊຸດເກົ່າກໍໄດ້ຂຶ້ນກ່າວລາໜ້າທີ່.

ໃນກອງປະຊຸມຍັງໄດ້ຮັບຟັງການໂອ້ລົມຂອງສະຫາຍ ທັນຕາ ກອງຜາລີ ເຊິ່ງໄດ້ສະແດງຄວາມຍ້ອງຍໍຊົມເຊີຍ ແລະຕີລາຄາສູງຕໍ່ຜົນສຳເລັດຮອບດ້ານຂອງຄະນະບໍລິຫານງານຊາວໜຸ່ມສະພາແຫ່ງຊາດ ທີ່ໄດ້ຄຽງບ່າຄຽງໄຫຼ່ກັບບັນດາອົງການຈັດຕັ້ງມະຫາຊົນ ພາຍໃຕ້ການຊີ້ນຳ-ນຳພາຂອງຄະນະບໍລິຫານງານພັກສະພາແຫ່ງຊາດ ສະໄໝທີ IV ແລະ ຄະນະປະຈຳສະພາແຫ່ງຊາດ ໄດ້ເຮັດສຳເລັດໜ້າທີ່ການເມືອງຂອງຕົນ. ສະຫາຍຍັງໄດ້ແລກປ່ຽນ ແລະເນັ້ນໜັກບາງບັນຫາຕື່ມ ເປັນຕົ້ນ: ສະມາຊິກຊາວໜຸ່ມ ຕ້ອງມີທັດສະນະຫຼັກໝັ້ນການເມືອງໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດ ແລະ ເຊື່ອໝັ້ນຕໍ່ການນຳພາຂອງພັກ; ປັບປຸງກົງຈັກການຈັດຕັ້ງຂອງຊາວໜຸ່ມໃຫ້ກະທັດຮັດ ແລະ ສອດຄ່ອງກັບກົງຈັກຂອງສະພາແຫ່ງຊາດທີ່ກຳລັງຄົ້ນຄວ້າເພື່ອປັບປຸງຕາມທິດຊີ້ນຳຂອງພັກ; ປັບປຸງແບບແຜນວິທີເຮັດວຽກ, ລະບອບສອງແສງລາຍງານໃຫ້ເປັນປົກກະຕິ, ຍົກສູງສະຕິຕໍ່ການຈັດຕັ້ງ ແລະ ເປັນແບບຢ່າງນຳໜ້າໃນການປະຕິບັດວຽກງານຊາວໜຸ່ມ ພ້ອມດຽວກັນນັ້ນ, ກໍຈະຕ້ອງເອົາໃຈໃສ່ປະຕິບັດທິດທາງແຜນການ ແລະ ແກ້ໄຂບັນດາຂໍ້ຄົງຄ້າງຕ່າງໆ.

ຜູ້ແທນ 129 ສະຫາຍ ທີ່ເຂົ້າຮ່ວມກອງປະຊຸມ ໄດ້ໃຊ້ສິດປະຊາທິປະໄຕຂອງຕົນປ່ອນບັດເລືອກຕັ້ງເອົາຄະນະບໍລິຫານງານຊາວໜຸ່ມຊຸດໃໝ່ ເຊິ່ງມີຜູ້ສະໝັກ 18 ສະຫາຍ ຍິງ 5 ສະຫາຍ, ເລືອກໄດ້ 15 ສະຫາຍ ຍິງ 3 ສະຫາຍ; ກອງປະຊຸມຄັ້ງປະຖົມມະລຶກຂອງຄະນະບໍລິຫານງານຊາວໜຸ່ມສະພາແຫ່ງຊາດ ຄັ້ງທີ V ໄດ້ເຫັນດີເປັນເອກະພາບດັ່ງນີ້: ຄະນະປະຈຳມີ 5 ສະຫາຍ ຄື: 1. ສະຫາຍ ສົມບູນ ໂຄດໄຊ ເລຂາ, 2. ສະຫາຍ ສົມຈິດ ພົມຖາວົງ ຮອງເລຂາ, 3. ສະຫາຍ ຈັນໄລວັນ ພົມມາໄຊ ຮອງເລຂາ, 4. ສະຫາຍ ນາງ ໂຄຕະມີ ສະຫວັດດີ, 5. ສະຫາຍ ບຸນລົ້ນ ສໍລາດຈຳປາ ແລະ ຄະນະກວດກາມີ 3 ສະຫາຍ ຄື: 1. ສະຫາຍ ສົມຈິດ ພົມຖາວົງ ປະທານ, 2. ສະຫາຍ ສົມຈັນ ໄຊມົງຢ່າງ ຮອງປະທານ, 3. ສະຫາຍ ເສລີສັນ ວົງແສງຈັນ.

ສະຫາຍ ທອງລີ ສີສຸລິດ ໄດ້ມີຄຳເຫັນໂອ້ລົມບາງຈຸດ ເພື່ອໃຫ້ຄະນະບໍລິຫານງານຊາວໜຸ່ມຊຸດໃໝ່ ແລະ ບັນດາສະຫາຍສະມາຊິກຊາວໜຸ່ມສະພາແຫ່ງຊາດ ນຳໄປຄົ້ນຄວ້າ ເປັນຕົ້ນ: ສືບຕໍ່ເພີ່ມທະວີວຽກງານສຶກສາອົບຮົມການເມືອງ-ແນວຄິດ ດ້ວຍຫຼາຍຮູບຫຼາຍສີ ແລະ ມີລັກສະນະກ້າວໜ້າ ສົມຄູ່ກັບການຈັດຕັ້ງປະຕິບັດວຽກງານວິຊາສະເພາະ; ປັບປຸງກົນໄກປະສານງານວຽກງານຊາວໜຸ່ມ ລະຫວ່າງຊາວໜຸ່ມສະພາແຫ່ງຊາດກັບພາກສ່ວນກ່ຽວຂ້ອງຂອງສູນກາງຊາວໜຸ່ມກໍຄືຊາວໜຸ່ມພາກສ່ວນຕ່າງໆ ໃຫ້ເປັນປົກກະຕິຕໍ່ເນື່ອງ ແລະ ມີປະສິດທິຜົນນັບມື້ຫຼາຍຂຶ້ນ; ເອົາໃຈໃສ່ເຄື່ອນໄຫວຂະບວນການຕ່າງໆ ຮ່ວມກັບຄະນະຊາວໜຸ່ມກະຊວງ, ອົງການ ໃຫ້ມີບັນຍາກາດຟົດຟື້ນ ໂດຍສະເພາະຂະບວນການຊ່ວຍເຫຼືອສັງຄົມ; ຕ້ອງມີຄວາມຕື່ນຕົວເປັນເຈົ້າການໃນການອອກແຮງແຂ່ງຂັນກັນສ້າງຜົນງານ, ປະກອບສ່ວນໃນຂະບວນການຕ່າງໆ ເຍືອງໃສ່ການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 4 ບຸກ ຕິດພັນກັບຂະບວນການຮັກຊາດ ແລະ ພັດທະນາ ທີ່ຊາວໜຸ່ມສະພາແຫ່ງຊາດວາງອອກເພື່ອກໍ່ສ້າງຕົນເອງໃຫ້ກາຍເປັນພະນັກງານຮຸ່ນໜຸ່ມຜູ້ດີເດັ່ນ, ກາຍເປັນພະນັກງານສືບທອດທີ່ໜຸ່ມແໜ້ນ.

**(ກົງທະນູຄຳ ພິພັດເສລີ)**





## ຮອງປະທານ...

(ຕໍ່ຈາກໜ້າ 1)

ເຕັມ ແຫ່ງ ສະຫະພາບເອີຣົບ ປະຈຳ ສປປລາວ ພ້ອມດ້ວຍຄະນະ ໃນໂອກາດທີ່ໄດ້ມາຮັບໜ້າທີ່ໃໝ່ ປະຈຳ ສປປລາວ.

ທ່ານປອ. ນາງສູນທອນ ໄຊຍະຈັກ ໄດ້ສະແດງຄວາມຍິນດີຕ້ອນຮັບ ແລະ ສະແດງຄວາມຊົມເຊີຍຕໍ່ຜົນງານທີ່ຍາດມາໄດ້ ພ້ອມທັງແຈ້ງສະພາບການພາຍໃນ ແລະ ການຈັດຕັ້ງປະຕິບັດໜ້າທີ່ຂອງສະພາແຫ່ງຊາດລາວ ທັງໄດ້ຕີຄາລາສູງຕໍ່ສາຍພົວພັນການທູດລະຫວ່າງ ສປປລາວ ແລະສະຫະພາບເອີຣົບຕະຫຼອດໄລຍະຜ່ານມາແລະສະແດງຄວາມຂອບໃຈຕໍ່ການສະໜັບສະໜູນຂອງສະຫະ ພາບເອີຣົບ ຕໍ່ ສປປ ລາວທັງສະແດງຄວາມເຊື່ອໝັ້ນ ແລະ ອວຍພອນໃຫ້ທ່ານທູດຈົ່ງປະສົບຜົນສຳເລັດໃນການປະຕິບັດໜ້າທີ່ອັນມີກຽດຂອງທ່ານ, ສືບຕໍ່ສານຕໍ່ມິດຕະພາບ ແລະ ການພົວພັນຮ່ວມມືລະຫວ່າງ ສປປລາວ ແລະ ສະຫະພາບເອີຣົບ ໃນການຊຸກຍູ້ການພົວພັນຮ່ວມມືດ້ານເສດຖະກິດ, ການຄ້າ, ການລົງທຶນ, ຮ່ວມມືດ້ານຍຸຕິທຳ, ສຶກສາ, ສາທາລະນະສຸກ, ການກໍ່ສ້າງພື້ນຖານໂຄງລ່າງ ແລະ ອື່ນໆເພື່ອປະກອບສ່ວນເສີມຂະຫຍາຍສາຍພົວພັນມິດຕະພາບອັນດີງາມລະຫວ່າງ ສປປລາວ-ສະຫະພາບເອີຣົບ ໃຫ້ໄດ້ຮັບການພັດທະນາຂະຫຍາຍຕົວຂຶ້ນເລື້ອຍໆ.

ທ່ານ ມາກ ກາລາເຣີ ໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບຢ່າງອົບອຸ່ນ ພ້ອມທັງລາຍງານສະພາບການທີ່ພົ້ນເດັ່ນຂອງສະຫະພາບເອີຣົບແລະການຈັດຕັ້ງປະຕິ ບັດໜ້າທີ່ວຽກງານຂອງຕົນ ແລະ ຖືເປັນກຽດທີ່ໄດ້ຮັບການແຕ່ງຕັ້ງເປັນເອກອັກຄະລັດຖະທູດ ຜູ້ມີອຳນາດເຕັມຄົນໃໝ່ ແຫ່ງ ສະຫະພາບເອີຣົບ ປະຈຳ ສປປລາວ ໃນຄັ້ງນີ້; ນອກນັ້ນ ຍັງຕີລາສູງຕໍ່ການພົວພັນລະຫວ່າງສະຫະພາບເອີຣົບ ແລະ ສປປລາວ ໃນຕະຫຼອດ 50 ປີທີ່ສະຫະພາບເອີຣົບ ແລະ ສປປ ລາວ ໄດ້ສ້າງສາຍພົວພັນການທູດນຳກັນ. ທ່ານໄດ້ໃຫ້ຄຳໝັ້ນໝາຍຈະສືບຕໍ່ປະຕິບັດໜ້າທີ່ການທູດຂອງຕົນເພື່ອຊຸກຍູ້ການສະໜັບສະໜູນຊ່ວຍເຫຼືອຂອງສະຫະພາບເອີຣົບ ຕໍ່ ສປປລາວ ກໍຄືສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ.

# ຮອງເລຂາທິການສະພາແຫ່ງຊາດ ເຄື່ອນໄຫວວຽກງານຢູ່ໄຊສົມບູນ



(ສພຊ) - ວັນພຸດທີ 21 ພຶດສະພາຜ່ານມາ, ທ່ານ ປອ. ອາຄົມ ປຣະເສີດ ຮອງເລຂາທິການສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວວຽກງານຢູ່ແຂວງໄຊສົມບູນ ໂດຍການຕ້ອນຮັບຂອງທ່ານແດງ ປະທຸມທອງ ປະທານສະພາປະຊາຊົນແຂວງ (ສພຂ) ເຊິ່ງທ່ານ ອາຄົມ ປຣະເສີດ ໄດ້ແຈ້ງຈຸດປະສົງຂອງການເຄື່ອນໄຫວວຽກງານຄັ້ງນີ້ແມ່ນເພື່ອຕິດຕາມຊຸກຍູ້ ແລະ ເກັບກຳຂໍ້ມູນການເຄື່ອນໄຫວວຽກງານຂອງຄະນະເລຂາທິການ ສພຂ ໃນໄລຍະຜ່ານມາ, ທ່ານ ແດງ ປະທຸມທອງ ໄດ້ສະແດງຄວາມຕ້ອນຮັບຢ່າງອົບອຸ່ນ ພ້ອມທັງລາຍງານສະພາບລວມໃນການສ້າງສາພັດທະນາແຂວງ.

ໂອກາດນີ້, ທ່ານ ບີ ເຣີ່ ຮອງເລຂາທິການສະພາປະຊາຊົນແຂວງ ໄດ້ລາຍງານກ່ຽວກັບການຈັດຕັ້ງປະຕິບັດວຽກງານຂອງຄະນະເລຂາທິການ ສພຂ ເປັນຕົ້ນ ວຽກງານຄົ້ນຄວ້າ-ສັງລວມ, ເລຂານຸການ-ການນຳ, ການເປັນເສນາທິການໃຫ້ແກ່ຄະນະປະຈຳ ສພຂແລະເປັນເສນາທິການໃຫ້ແກ່ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 18 ລວມທັງວຽກງານສື່ມວນຊົນ, ການຄຸ້ມຄອງ-ຈໍລະຈອນເອກະສານ, ວຽກງານຈັດຕັ້ງ-ພະນັກງານ ແລະ ກວດກາ, ການຄຸ້ມຄອງຫ້ອງການ, ບໍລິຫານ-ພິທີການ ແລະ ການເງິນ ພ້ອມທັງຍົກໃຫ້ເຫັນເຖິງຂໍ້ສະດວກ ແລະ ຂໍ້ຄົງຄ້າງ ໃນການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາ; ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມກໍໄດ້ປະກອບຄຳຄິດຄຳເຫັນດ້ວຍຄວາມຮັບຜິດຊອບສູງເພື່ອປຶກສາຫາລື, ແລກປ່ຽນບົດຮຽນເຊິ່ງກັນແລະກັນ ໂດຍສະເພາະຂໍ້ຫຍຸ້ງຍາກໃນການຈັດຕັ້ງປະຕິບັດວຽກງານຕ່າງໆ ເພື່ອພ້ອມກັນຊອກຫາວິທີການແກ້ໄຂໃນຕໍ່ໜ້າໃຫ້ດີຂຶ້ນກວ່າເກົ່າ.

**(ພຸດທະສອນ ເວດສະວົງ)**

# ສປນວ ຮັບຮອງເອົາການສ້າງຕັ້ງຕາແສງຊ້າງມີໄຊ




(ສພຊ) - ກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງສະພາປະຊາຊົນນະຄອນຫຼວງວຽງຈັນ (ສປນວ) ຊຸດທີ II ໄດ້ໄຂຂຶ້ນ ແລະ ປິດລົງ ໃນວັນທີ 22 ພຶດສະພານີ້ ທີ່ຫ້ອງວ່າການສຳນັກງານປົກຄອງນະຄອນຫຼວງວຽງຈັນ ພາຍໃຕ້ການເປັນປະທານຂອງທ່ານ ນາງ ລຳພອຍ ສີອັກຄະຈັນ ຄະນະປະຈຳພັກ, ຮອງປະທານສະພາປະຊາຊົນນະຄອນ ຫຼວງວຽງຈັນ ແລະ ທ່ານ ບຸນທາມ ພຸດທະວົງສາ ຄະນະພັກ, ຮອງປະທານສະພາປະຊາຊົນນະຄອນຫຼວງວຽງຈັນ ໂດຍການເຂົ້າຮ່ວມຂອງທ່ານ ຊົງເລົ່າ ຢົງນູ ຮອງເລຂາຄະນະພັກນະຄອນຫຼວງວຽງຈັນ, ທ່ານ ພູວົງ ວົງຄຳຊາວ ຄະ ນະປະຈຳພັກ, ຮອງເຈົ້າຄອງນະຄອນຫຼວງວຽງຈັນ, ບັນດາທ່ານການນຳພັກ-ລັດຂັ້ນ ນວ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 1 ແລະ ສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນ (ສສນວ) ພ້ອມດ້ວຍແຂກຖືກເຊີນ.

ທ່ານ ນາງ ລຳພອຍ ສີອັກຄະຈັນກ່າວວ່າ: ກອງປະຊຸມຄັ້ງນີ້ແມ່ນເພື່ອຄົ້ນຄວ້າພິຈາລະນາ ແລະ ຮັບຮອງເອົາການສ້າງຕັ້ງຕາແສງ (ທົດລອງ) ຢູ່ເມືອງໄຊທານີ ເຊິ່ງເປັນວາລະທີ່ສຳຄັນ, ຈຳເປັນ ແລະ ຮີບດ່ວນຂອງນະຄອນຫຼວງວຽງຈັນ ທັງຈະເປັນຕົວແບບໃນການພິຈາລະນາແລະຮັບຮອງເອົາການສ້າງຕັ້ງຕາແສງຢູ່ຂອບເຂດທົ່ວປະເທດ.

ໃນວາລະການດຳເນີນກອງປະຊຸມ, ທ່ານ ພູວົງ ວົງຄຳຊາວ ໄດ້ລາຍງານກ່ຽວກັບການຄົ້ນຄວ້າສ້າງຕັ້ງຕາແສງ (ທົດລອງ) ຢູ່ເມືອງໄຊທານີ ໂດຍໃຫ້ຮູ້ວ່າ: ພາຍຫຼັງລັດຖະທຳມະນູນສະບັບປັບປຸງໃໝ່, ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນສະບັບປັບປຸງ ໄດ້ຮັບຮອງເອົາໃນກອງປະຊຸມສະໄໝວິສາມັນເທື່ອ 2 ຂອງສະພາແຫ່ງຊາດ ຊຸດທີ IX, ບ່ອນອີງໃນການສ້າງຕັ້ງຕາແສງຈຶ່ງມີທັງລັດຖະທຳມະນູນ, ກົດໝາຍ, ມະຕິຂອງສູນກາງພັກ, ແຈ້ງການຂອງລັດຖະບານແລະຂອງຄະນະປະຈຳພັກ, ອົງການປົກຄອງນະຄອນຫຼວງວຽງຈັນ ໃຫ້ທົດລອງສ້າງຕັ້ງຕາແສງທຳອິດຂອງ ນວ ແລະ ຂອງປະເທດຢູ່ເມືອງໄຊທານີ. ມາຮອດປັດຈຸບັນ, ສຳເລັດການຂຽນບົດວິພາກເສດຖະກິດ-ສັງຄົມຂອງຕາແສງ; ສຳເລັດການກຳນົດຂອບເຂດພື້ນທີ່ຂອງຕາແສງ; ສຳເລັດການສຳຫຼວດເຂດແດນເຊື່ອມຕໍ່ລະຫວ່າງບ້ານຕໍ່ບ້ານ, ເມືອງຕໍ່ເມືອງ ໃນຂອບເຂດຕາແສງ, ລົງໂຄສະນາເຜີຍແຜ່ນິຕິກຳຕ່າງໆໃຫ້ປະຊາຊົນໄດ້ຮັບຮູ້ ແລະ ເຂົ້າຮ່ວມໃນການກະກຽມສ້າງຕັ້ງຕາແສງ, ໄດ້ທາບທາມຊື່ຂອງເມືອງໃໝ່ໃນ 24 ບ້ານເປົ້າໝາຍ ແລະ ທາບທາມໃນ 9 ເມືອງທົ່ວ ນວ ເພື່ອໃຫ້ຊາວນະຄອນຫຼວງ ໄດ້ມີສ່ວນຮ່ວມໃນການຄົ້ນຄວ້າຊື່ຂອງຕາແສງ; ສຳເລັດການຮ່າງຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຕາແສງ; ສຳເລັດການຈັດຕັ້ງປະຕິບັດ 6 ໂຄງການຈຸດສຸມຄື: ໂຄງການສຳຫຼວດອອກແບບແຜນຜັງຂອງເມືອງໃໝ່, ໂຄງການສຳຫຼວດອອກແບບສຳນັກງານປົກຄອງຕາແສງ, ໂຄງການສຳຫຼວດເສັ້ນທາງເຂົ້າ-ອອກສຳນັກງານປົກຄອງຕາແສງ, ໂຄງການບຸກເບີກພື້ນທີ່ຕັ້ງສຳນັກງານປົກຄອງຕາແສງ, ໂຄງການກໍ່ສ້າງຫ້ອງການຄະນະຮັບຜິດຊອບຄົ້ນຄວ້າສ້າງຕັ້ງເມືອງໃໝ່ 1 ຫຼັງ, ໂຄງການຕໍ່ຕື່ມຫ້ອງການ ແລະ ສ້າງຫໍພັກພະນັກງານ 1 ຫຼັງ.

ທ່ານຮອງເຈົ້າຄອງນະຄອນຫຼວງວຽງຈັນ ໃຫ້ຮູ້ອີກວ່າ: ນິຕິກຳຂອງສູນກາງ ໄດ້ກຳນົດໃຫ້ເມືອງໜຶ່ງປະກອບມີຢ່າງໜ້ອຍ 3 ຕາແສງ, ຫຼາຍສຸດບໍ່ໃຫ້ກາຍ 5 ຕາແສງແລະຕາແສງໜຶ່ງກວມເອົາແຕ່ 6-24 ບ້ານ; ສະນັ້ນ, ເມືອງໄຊທານີ ປະກອບມີ 104 ບ້ານ ເມື່ອແບ່ງເປັນ 5 ຕາແສງ ກໍຈະຖືກຕາແສງໜຶ່ງ 20-24 ບ້ານ ເຊິ່ງກຳນົດເອົາ 23 ບ້ານ ຂອງ 4 ກຸ່ມບ້ານເຂດຝາກນ້ຳງື່ມ ອອກໄປເປັນຕາແສງໜຶ່ງ ເຫັນວ່າຖືກຕ້ອງສອດຄ່ອງກັບນິຕິກຳ ແລະຖືກຕ້ອງກັບສະພາບຄວາມເປັນຈິງ. ສຳລັບຕາແສງຈະສ້າງຕັ້ງທົດລອງນີ້ ຊື່ວ່າ "ຕາແສງຊ້າງມີໄຊ" ມີເນື້ອທີ່ທັງໝົດ 358 ກິໂລຕາແມັດ ຫຼື 35,8 ເຮັກຕາ ປະກອບມີ 23 ບ້ານ (ເຊິ່ງແມ່ນບັນດາບ້ານເປົ້າໝາຍທີ່ຈະສ້າງເມືອງໃໝ່ໃນເມື່ອກ່ອນ) ຄື: ໂພນໄຮຄຳ, ໂພນໂຮງ, ຫາດກ້ຽງ, ຫາດພະອິນ, ໂພນຄໍ້, ນາກຸງ, ທົ່ງມັ່ງ, ຊຸດສາມບາດ, ຊຳບອນ, ດວງບຸດດີ, ນາແຄ, ທ່າດິນແດງເໜືອ, ທ່າດິນແດງໃຕ້, ເວີນແທ່ນ, ທ່າຈຳປາ, ຫົວຂົວ, ຫົວນາ, ນາຄັນທຸງ, ນາຄາຍ, ໂພນແພງ, ນາໂງມເກົ່າ, ນາໂງມໃໝ່ ແລະ ນາຕານ; ມີພົນລະເມືອງທັງໝົດ 35,577 ຄົນ ເປັນຍິງ 17,878 ຄົນ, ມີ 6,043 ຄອບຄົວ, ມີ 6,736 ຫຼັງຄາເຮືອນ, ມີ 474 ໜ່ວຍ.

ຈາກນັ້ນ, ສສຊ ແລະ ສສນວ ໄດ້ຍົກສູງຄວາມຮັບຜິດຊອບໜ້າທີ່ການເມືອງ, ສຸມທຸກສະຕິປັນຍາ, ຄວາມຮູ້ຄວາມສາມາດຂອງຕົນ ເຂົ້າໃນການຄົ້ນຄວ້າ, ພິຈາລະນາ ແລະ ປະກອບຄຳເຫັນຢ່າງມີປະຊາທິປະໄຕ, ເລິກເຊິ່ງ, ມີຈຸດສຸມ, ເຈາະຈົງ, ພາວະວິໄສ, ມີເຫດຜົນຕົວຈິງ ແລະຮັບປະກັນຄວາມສອດຄ່ອງກັບນະໂຍບາຍຂອງພັກ, ຖືກຕ້ອງຕາມລັດຖະທຳມະນູນ, ກົດໝາຍ, ສະພາບຈຸດພິເສດຕົວຈິງຂອງ ນວ ໃນປັດຈຸບັນ ເພື່ອຮັບປະກັນໃຫ້ການສ້າງຕັ້ງຕາແສງໃນຄັ້ງນີ້ ສາມາດນຳໄປຈັດຕັ້ງປະຕິບັດໄດ້ຢ່າງເປັນຮູບປະທຳທີ່ແທ້ຈິງແລະເກີດດອກອອກຜົນ.

ໃນຕອນທ້າຍ, ທ່ານ ນາງ ລຳພອຍ ສີອັກຄະຈັນ ກ່າວວ່າ: ກອງປະຊຸມໄດ້ບັນລຸຜົນສຳເລັດຕາມຈຸດປະສົງລະດັບຄາດໝາຍທີ່ວາງໄວ້ ເຊິ່ງເຕັມໄປດ້ວຍບັນຍາກາດຟົດຟື້ນແຫ່ງການເສີມຂະຫຍາຍສິດປະຊາທິປະໄຕ, ການຍົກສູງຄວາມຮັບຜິດຊອບການເມືອງຂອງບັນດາທ່ານສສຊຊຸດທີ IX ປະຈຳເຂດເລືອກຕັ້ງທີ 1 ແລະ ສສນວ ຊຸດທີ II; ກອງປະຊຸມຕີລາຄາສູງຕໍ່ຄວາມຮັບຜິດຊອບສູງໃນການຄົ້ນຄວ້າ, ປະກອບຄຳເຫັນ, ຕັ້ງຄຳຊັກຖາມ ແລະຄຳແນະນຳຢ່າງມີເຫດຜົນ, ມີເນື້ອໃນທີ່ເລິກເຊິ່ງ, ເຈາະຈົງ, ລະອຽດຖີ່ຖ້ວນ ແລະ ມີຄວາມເປັນເອກະພາບສູງ ໃນການຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງເອົາການສ້າງຕັ້ງຕາແສງ (ທົດລອງ) ຢູ່ເມືອງໄຊທານີ ເຊິ່ງມີຊື່ວ່າ: ຕາແສງຊ້າງມີໄຊ; ຜົນສຳເລັດຂອງກອງປະຊຸມຄັ້ງນີ້ແມ່ນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງ ສປນວ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນສະບັບປັບປຸງໃໝ່ປີ 2025, ການຜັນຂະຫຍາຍຕາມທິດຊີ້ນຳຂອງຄະນະບໍລິຫານງານສູນກາງພັກກ່ຽວກັບການປັບປຸງລະບົບກົງຈັກການປົກຄອງຂັ້ນຕາແສງໃນຂອບເຂດທົ່ວປະເທດ ແລະ ເປັນການຮັບຮອງການສ້າງຕັ້ງຕາແສງທຳອິດຢູ່ນະຄອນຫຼວງວຽງຈັນ.

ເພື່ອສືບຕໍ່ຈັດຕັ້ງປະຕິບັດເນື້ອໃນຜົນສຳເລັດກອງປະຊຸມຄັ້ງນີ້, ກອງປະຊຸມຮຽກຮ້ອງມາຍັງອົງການປົກຄອງນະຄອນຫຼວງວຽງຈັນ, ອົງການປົກຄອງເມືອງໄຊທານີແລະພາກສ່ວນທີ່ກ່ຽວຂ້ອງ ຈົ່ງໄດ້ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດມະຕິກອງປະຊຸມຄັ້ງນີ້ໃຫ້ໄດ້ຮັບຜົນສຳເລັດເປັນຮູບປະທຳ.

**(ນາງ ໄຊໂສພາພອນ ມິ່ງມຸງຄຸນ)**



## ກອງກາ...

(ຕໍ່ຈາກໜ້າ 1)

ຮອງຫົວໜ້າກົມ, ຄະນະພະແນກ ແລະ ພະນັກງານ-ລັດຖະກອນ ຈາກພາກສ່ວນທີ່ກ່ຽວຂ້ອງ.

ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ກ່າວວ່າ: ກອງປະຊຸມຄັ້ງນີ້ຈະໄດ້ພ້ອມກັນຄົ້ນຄວ້າເນື້ອໃນຮອບດ້ານຂອງຮ່າງກົດໝາຍຢ່າງລະອຽດ ໂດຍຈະເລີ່ມແຕ່ມາດຕາທຳອິດຫາມາດຕາສຸດທ້າຍ ເພື່ອຮັບປະກັນໃຫ້ເນື້ອໃນມີຄວາມຄົບຖ້ວນ, ຮັດກຸມ, ສອດຄ່ອງກັບສະພາບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ, ລັດຖະທຳມະນູນ ແລະ ກົດໝາຍອື່ນທີ່ປະກາດໃຊ້ແລ້ວ, ຮັບປະກັນໃຫ້ການຈັດຕັ້ງປະຕິບັດວຽກງານການປູກຝັງ ທີ່ຕິດພັນກັບການດຳລົງຊີວິດຂອງປວງຊົນລາວເຮົາ ມີປະສິດທິພາບ ແລະ ປະສິດທິຜົນ.

ທ່ານ ກິແກ້ວ ສິງນາວົງ ຮອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ໄດ້ສະເໜີໂດຍຫຍໍ້ກ່ຽວກັບເຫດຜົນແລະຄວາມຈຳເປັນຂອງການສ້າງກົດໝາຍວ່າດ້ວຍການປູກຝັງ ແມ່ນເພື່ອຜັນຂະຫຍາຍວຽກງານປູກຝັງທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍກະສິກຳ ສະບັບປີ 1998 ອອກເປັນກົດໝາຍສະເພາະເນື່ອງຈາກໄລຍະຜ່ານມາກໍໄດ້ຜັນຂະຫຍາຍວຽກງານລ້ຽງສັດ, ການປະມົງແລະຊົນລະປະທານອອກເປັນກົດໝາຍສະເພາະແລ້ວແຕ່ຍັງບໍ່ມີກົດໝາຍວ່າດ້ວຍການປູກຝັງທີ່ເປັນລະບົບຄົບຊຸດ; ເພື່ອຄຸ້ມຄອງວຽກງານປູກຝັງ ເປັນຕົ້ນ: ທີ່ດິນປູກຝັງ, ປັດໄຈການຜະລິດ, ການຜະລິດ, ການປຸງແຕ່ງ ແລະ ຕະຫຼາດ, ການນຳເຂົ້າ-ສົ່ງອອກ, ການຄົ້ນຄວ້າທົດລອງດ້ານການປູກຝັງ ລວມທັງການກຳນົດນະໂຍບາຍ ແລະ ກອງທຶນສົ່ງເສີມວຽກງານດັ່ງກ່າວ ໃຫ້ມີຄວາມເປັນເອກະພາບໃນຂອບເຂດທົ່ວປະເທດ; ປະຕິບັດຕາມແນວທາງປ່ຽນແປງໃໝ່ທີ່ມີຫຼັກການຂອງພັກ ໂດຍສະເພາະທິດນຳໃນການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ ກໍຄືການເສີມຂະຫຍາຍຄວາມເປັນເຈົ້າໃນການຜະລິດພືດເພື່ອເປົ້າໝາຍຮັບປະກັນຄວາມໝັ້ນຄົງດ້ານສະບຽງອາຫານ, ໂພຊະນາການ ແລະ ການຜະລິດເປັນສິນຄ້າ ຕິດພັນກັບການປັບປຸງຊີວິດການເປັນຢູ່ຂອງປະຊາຊົນລາວບັນດາເຜົ່າໃຫ້ດີຂຶ້ນເທື່ອລະກ້າວ; ເພື່ອຮັບປະກັນການຜະລິດພືດ ໃຫ້ມີຄວາມຍືນຍົງ ແລະ ປົກປັກຮັກສາສິ່ງແວດລ້ອມ, ຮັບປະກັນສະບຽງອາຫານໃຫ້ພຽງພໍ, ປອດໄພຕໍ່ສຸຂະພາບຂອງຜູ້ບໍລິໂພກແລະຜູ້ຜະລິດດ້ວຍການສົ່ງເສີມການຜະລິດກະສິກຳສະອາດ; ເພື່ອເຮັດໃຫ້ການແບ່ງຂັ້ນຄຸ້ມຄອງ ແລະ ກວດກາວຽກງານປູກຝັງ ແຕ່ສູນກາງຮອດທ້ອງຖິ່ນ ໃຫ້ລະອຽດ ແລະ ຈະແຈ້ງຂຶ້ນກວ່າເກົ່າ ເຊິ່ງຈະເຮັດໃຫ້ການຈັດຕັ້ງປະຕິບັດວຽກງານປູກຝັງມີປະສິດທິພາບກວ່າເກົ່າ.

ຜູ້ເຂົ້າຮ່ວມໄດ້ຍົກສູງຄວາມຮັບຜິດຊອບ ແລະ ເປັນເຈົ້າການຄົ້ນຄວ້າ, ປະກອບຄຳເຫັນ ເພື່ອເຮັດໃຫ້ຮ່າງກົດໝາຍມີເນື້ອໃນທີ່ສົມບູນ, ຄົບຖ້ວນ ແລະ ສາມາດນຳເຂົ້າພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດ ຊຸດທີ IX ທີ່ຈະດຳເນີນໃນເດືອນມິຖຸນານີ້.

**(ນາງ ອານິຕາ ມ່ວນສະຫວັດ)**

## ລົງນາມ...

(ຕໍ່ຈາກໜ້າ 1)

ຫາວິທະຍາໄລ ມະຫາຈຸລາລົງກອນ ຣາຊະວິທະຍາໄລ ແລະ ຝ່າຍກອງທຶນຊ່ວຍເຫຼືອສັງຄົມຂອງສະພາແຫ່ງຊາດລາວແມ່ນທ່ານ ດຣ. ນາງ ວິພາວັນ ພົມວິຫານປະທານກອງທຶນຊ່ວຍເຫຼືອສັງຄົມຂອງສະພາແຫ່ງຊາດລາວ ເປັນຜູ້ລົງນາມໃສ່ບົດບັນທຶກດັ່ງກ່າວ ເຊິ່ງມີພຣະອາຈານໃຫຍ່ ບຸນສວນ ພັນທະວົງຮອງປະທານ ອົງການພຸດທະສາສະໜາສັມພັນລາວ, ທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ, ທ່ານເອກອັກຄະລາຊະທູດແຫ່ງລາຊະອານາຈັກໄທ ປະຈຳ ສປປລາວ, ບັນດາທ່ານຮອງປະທານກຳມາທິການແລະຄະນະເລຂາທິການ ສພຊ, ຮອງລັດຖະມົນຕີຈາກກະຊວງການຕ່າງປະເທດ, ກະຊວງສຶກສາທິການ ແລະ ກິລາ, ທ່ານຮອງປະທານສູນກາງແນວລາວສ້າງຊາດ, ຜູ້ຕາງໜ້າຂອງຄະນະພົວພັນຕ່າງປະເທດສູນກາງພັກ ແລະກະຊວງພາຍໃນ, ສະມາຊິກສະພາແຫ່ງຊາດ ແລະ ບັນດາແຂກຖືກເຊີນເຂົ້າຮ່ວມເປັນສັກຂີພະຍານ.

ໃນພິທີ, ທ່ານ ເພັດລາ ທັນທະວົງສາ ຫົວໜ້າກົມພົວພັນລັດຖະສະພາສອງຝ່າຍ, ກຳມາທິການການຕ່າງປະເທດຕາງໜ້າໃຫ້ກອງເລຂາຊ່ວຍວຽກໃນການສ້າງບົດບັນທຶກຄວາມເຂົ້າໃຈດັ່ງກ່າວ ໄດ້ລາຍງານກ່ຽວກັບສະພາບການກະກຽມໂດຍຫຍໍ້, ບາງເນື້ອໃນຈິດໃຈສຳຄັນຂອງບົດບັນທຶກ ແລະ ທິດທາງການຈັດຕັ້ງຜັນຂະຫຍາຍບົດບັນທຶກຄວາມເຂົ້າໃຈໃນຕໍ່ໜ້າ ເຊິ່ງບົດບັນທຶກຄວາມເຂົ້າໃຈລະຫວ່າງກອງທຶນຊ່ວຍເຫຼືອສັງຄົມຂອງສະພາແຫ່ງຊາດລາວ ແລະ ມະຫາວິທະຍາໄລ ມະຫາຈຸລາລົງກອນຣາຊະວິທະຍາໄລຂອງປະເທດໄທ ວ່າດ້ວຍການສົ່ງເສີມການສຶກສາສົງ ມີຈຸດປະສົງຕົ້ນຕໍເພື່ອຊຸກຍູ້ ແລະ ສົ່ງເສີມການສຶກສາສົງ ໂດຍສະເພາະແມ່ນການສ້າງຊັບພະຍາກອນມະນຸດ, ການຍາດແຍ່ງລະດົມຂົນຂວາຍທຶນຮອນ-ວັດຖຸອຸປະກອນ, ບູລະນະ ແລະ ສ້າງພື້ນຖານໂຄງລ່າງໃຫ້ແກ່ການສຶກສາສົງ, ສ້າງຄວາມເຂັ້ມແຂງໃຫ້ພຣະສົງແລະຄະລືຫັດ ໃນຂົງເຂດວຽກງານສຶກສາສົງ ມີປະສິດທິພາບ ແລະ ປະສິດຜົນສູງຂຶ້ນກວ່າເກົ່າ. ຈາກນັ້ນ, ພຣະເທບວັດຊະຣະສານບັນດິດ ກໍໄດ້ມີຄຳເຫັນໂດຍເນັ້ນໃຫ້ເຫັນເຖິງຄວາມໝາຍສຳຄັນ ແລະຜົນປະໂຫຍດໃນຈັດຕັ້ງປະຕິບັດບົດບັນທຶກວ່າດ້ວຍການສົ່ງເສີມການສຶກສາສົງ ເຊິ່ງຈະນຳເອົາຜົນປະໂຫຍດຮ່ວມກັນມາສູ່ການພັດທະນາ ແລະ ປັບປຸງວຽກງານການຊຸກຍູ້ແລະສົ່ງເສີມການສຶກສາສົງ ໃນສອງປະເທດ ລາວ-ໄທ.

ຄະນະຜູ້ແທນມະຫາວິທະຍາໄລ ມະຫາຈຸລາລົງກອນ ຣາຊະວິທະຍາໄລຍັງໄດ້ເດີນທາງໄປທ່ຽວຊົມ ແລະ ສັກກະລະບູຊາສະຖານທີ່ສຳຄັນທາງພຸດທະສາສະໜາຢູ່ນະຄອນຫຼວງວຽງຈັນ ແລະ ແຂວງຫຼວງພະບາງ ຈຳນວນໜຶ່ງ ອີກດ້ວຍ.




## ຄະນະມິດຕະພາບ...

(ຕໍ່ຈາກໜ້າ 1)

(ສພຊ) - ວັນທີ 19 ພຶດສະພາຜ່ານມາ ທີ່ສະພາແຫ່ງຊາດ, ທ່ານ ພົທ. ສຸວອນ ເລືອງບຸນມີ ຮອງປະທານສະພາແຫ່ງຊາດ, ປະທານຄະນະມິດຕະພາບລັດຖະສະພາ ລາວ-ລັດເຊຍ ໄດ້ພົບປະກັບທ່ານນິໂກລາຍ ຈຸລາຟເລຟຮອງປະທານສະພາສູງ ແຫ່ງ ສ.ລັດເຊຍ, ປະທານຄະນະມິດຕະພາບລັດຖະສະພາລັດເຊຍ-ລາວຜ່ານລະບົບວິດີໂອແບບທາງໄກ ເຊິ່ງເປັນຄັ້ງທຳອິດທີ່ສອງປະທານຄະນະມິດຕະພາບລັດຖະສະພາລາວ-ລັດເຊຍ-ລາວ ໄດ້ພົບປະກັນພາຍຫຼັງທີ່ທ່ານ ນິໂກລາຍ ຈຸລາຟເລຟ ໄດ້ຮັບການແຕ່ງຕັ້ງເປັນປະທານຄະນະມິດຕະພາບລັດຖະສະພາລັດເຊຍ-ລາວ ຄົນໃໝ່; ຈຸດປະສົງການພົບປະ ແມ່ນເພື່ອທັກທາຍສ້າງຄວາມລຶ້ງເຄີຍລະຫວ່າງສອງປະທານ, ທັງເປັນການປຶກສາຫາລື ແລະ ແລກປ່ຽນຄຳຄິດຄຳເຫັນໃນການສ້າງກົນໄກຊຸກຍູ້ ແລະ ເສີມຂະຫຍາຍສາຍພົວພັນມິດຕະພາບອັນເປັນມູນເຊື້ອທີ່ດີງາມ ແລະ ການເປັນຄູ່ຮ່ວມຍຸດທະສາດ ລະຫວ່າງສອງປະເທດ ກໍຄືລະຫວ່າງສອງອົງການນິຕິບັດຍັດ ໃຫ້ນັບມື້ນັບເຂົ້າສູ່ລວງເລິກ ແລະ ເປັນຮູບປະທຳຂຶ້ນເລື້ອຍໆ.

ໂອກາດດັ່ງກ່າວ, ທ່ານ ພົທ. ສຸວອນ ເລືອງບຸນມີ ໄດ້ສະແດງຄວາມປິຕິຍິນດີ ແລະ ຊົມເຊີຍຕໍ່ວັນໄຊຊະນະໃນມະຫາສົງຄາມປົກປ້ອງປິຕຸພູມຂອງສະຫະພາບໂຊຫວຽດ ຄົບຮອບ 80 ປີ (9/5/1945-9/5/2025) ທີ່ຫາກໍສຳເລັດການສະເຫຼີມສະຫຼອງຜ່ານໄປ; ພ້ອມນັ້ນ, ຍັງໄດ້ແຈ້ງສະພາບການພາຍໃນ ແລະການເຄື່ອນໄຫວຂອງສະພາແຫ່ງຊາດ ທັງຕີລາຄາສູງຕໍ່ສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນເປັນມູນເຊື້ອທີ່ດີງາມແລະການເປັນຄູ່ຮ່ວມຍຸດທະສາດ ລະຫວ່າງສອງປະເທດ ກໍຄືສອງອົງການນິຕິບັນຍັດ ລາວ-ລັດເຊຍ, ລັດເຊຍ-ລາວທີ່ໄດ້ຮັບການຂະຫຍາຍຕົວເປັນຢ່າງດີ ແລະ ຕໍ່ເນື່ອງ, ມີການແລກປ່ຽນຢ້ຽມຢາມເຊິ່ງກັນແລະກັນເປັນປົກກະຕິ, ແລກປ່ຽນສານຊົມເຊີຍ ແລະ ສານອວຍພອນ ໃນໂອກາດວັນສຳຄັນຂອງຊາດ ທັງມີການສະໜັບສະໜູນເຊິ່ງກັນແລະກັນໃນເວທີລັດຖະສະພາພາກພື້ນ ແລະ ສາກົນ.

ທ່ານ ນິໂກລາຍ ຈຸລາຟເລຟ ໄດ້ສະແດງຄວາມຍິນດີຕໍ່ການພົບປະຄັ້ງນີ້ ທັງຕີລາຄາສູງຕໍ່ສາຍພົວພັນມິດຕະພາບອັນເປັນມູນເຊື້ອທີ່ດີງາມແລະການເປັນຄູ່ຮ່ວມຍຸດທະສາດລະຫວ່າງສອງປະເທດ ລັດເຊຍ-ລາວ ກໍຄືການພົວພັນຮ່ວມມືລະຫວ່າງສອງອົງການນິຕິບັດຍັດ ທັງໄດ້ແຈ້ງສະພາບການພົ້ນເດັ່ນຮອບດ້ານຂອງສະຫະພັນລັດເຊຍ ໃນການພັດທະນາປະເທດໃຫ້ນັບມື້ນັບເຂັ້ມແຂງ.

ສອງຝ່າຍຢືນຢັນຈະຮ່ວມກັນຊຸກຍູ້ລັດຖະບານຂອງສອງປະເທດ ໃນການຈັດຕັ້ງຜັນຂະຫຍາຍບົດບັນທຶກ, ສັນຍາ ແລະ ສົນທິສັນຍາທີ່ສອງລັດຖະບານໄດ້ລົງນາມຮ່ວມກັນ ໄດ້ຮັບການຈັດຕັ້ງປະຕິບັດໃຫ້ສຳເລັດ; ໃນຕອນທ້າຍ, ທ່ານປະທານຄະນະມິດຕະພາບລັດຖະສະພາ ລາວ-ລັດເຊຍ ໄດ້ເຊື້ອເຊີນທ່ານປະທານຄະນະມິດຕະພາບລັດຖະສະພາ ລັດເຊຍ-ລາວ ມາຢ້ຽມຢາມ ແລະ ພົບປະຢູ່ ສປປລາວ ທ້າຍປີ 2025 ນີ້.



ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະເລຂາທິການສະພາແຫ່ງຊາດ
ກົມບໍລິຫານ-ພິທີການ

ນະຄອນຫຼວງວຽງຈັນ, ວັນທີ 18/05/25

**ປະກາດ**

**ຮັບສະໝັກພະນັກງານຂັບລົດ(ຕາມສັນຍາ)**

ກົມບໍລິຫານ-ພິທີການ ຄະນະເລຂາທິການສະພາແຫ່ງຊາດ ມີຄວາມຕ້ອງການຮັບສະໝັກພະນັກງານຂັບລົດ ຈຳນວນ 18 ຄົນ ເພື່ອຂັບລົດປະຈຳຕຳແໜ່ງການນຳຂອງສະພາແຫ່ງຊາດ.

1. ເງື່ອນໄຂຜູ້ສະໝັກ
   - ເປັນຄົນລາວ, ເພດຊາຍ ອາຍຸ 25-45 ປີ;
   - ຈົບການສຶກສາຊັ້ນ ມັດທະຍົມຂຶ້ນໄປ (ຖ້າມີໃບຢັ້ງຢືນການຮຽນ ຈົບຈາກໂຮງຮຽນວິຊາຊີບການຂັບຂີ່ ຈະພິຈາລະນາເປັນພິເສດ);ມີໃບຂັບຂີ່ B ຂຶ້ນໄປ;
   - ສາມາດເຄື່ອນໄຫວໃນການປະຕິບັດໜ້າທີ່ວຽກງານໃນວັນເສົາ ແລະ ອາທິດ ກໍລະນີມີການເຄື່ອນໄຫວວຽກງານທີ່ຈຳເປັນ
   - ມີຄວາມຮູ້ພື້ນຖານດ້ານເຕັກນິກລົດ, ສາມາດກວດກາເຕັກນິກລົດໄດ້ໃນລະດັບໜຶ່ງ;
   - ມີສຸຂະພາບແຂງແຮງດີ, ບໍ່ມີພະຍາດຊ້ຳເຮື້ອ ຫຼື ຕິດແປດ;
   - ມີມະນຸດສຳພັນທີ່ດີ, ມີຄວາມດຸໝັ່ນຫ້າວຫັນ, ມີຄວາມຊື່ສັດບໍລິສຸດ, ມັກໃນວຽກງານໃຫ້ບໍລິການ;
   - ມີພາຫະນະທຽວການເປັນຂອງຕົນເອງ;
   - ມີປະສົບປະການຢ່າງໜ້ອຍ 2 ປີ, ສາມາດເດີນທາງຂຶ້ນເໜືອ-ລົງໃຕ້ໃນຂອບເຂດທົ່ວປະເທດ ແລະ ສາມາດຂັບລົດຢູ່ຕ່າງປະເທດໄດ້;
   - ມີຄວາມເພິ່ງພໍເຮັດວຽກໃນອົງການຈັດຕັ້ງຂອງລັດ.
2. ເອກະສານປະກອບມີດັ່ງນີ້:
   1. ໃບຄຳຮ້ອງສະໝັກງານ (ຂຽນດ້ວຍຕົນເອງ); 2. ໃບຊີວະປະຫວັດຫຍໍ້; 3. ໃບປະກາສະນີຍະບັດຊັ້ນມັດທະຍົມສຶກສາຕອນຕົ້ນຂຶ້ນໄປ; 4. ໃບຢັ້ງຢືນທີ່ຢູ່ ແລະ ໃບຢັ້ງຢືນຮັບປະກັນ; 5. ສຳເນົາບັດປະຈຳຕົວ ຫຼື ສຳມະໂນຄົວ; 6. ໃບຂັບຂີ່; 7. ໃບແຈ້ງໂທດ ບໍ່ໃຫ້ເກີນ 3 ເດືອນ; 8. ໃບຢັ້ງຢືນກວດສຸຂະພາບ ບໍ່ໃຫ້ເກີນ 3 ເດືອນ; 9. ຮູບຖ່າຍຈະໜາດ 3x4cm ຈຳນວນ 02 ໃບ;

+ ເລີ່ມເປີດຮັບສະໝັກແຕ່ວັນທີ 15 ພຶດສະພາ 2025 ຈະໄດ້ປິດຮັບສະໝັກ ໃນວັນທີ 30 ພຶດສະພາ 2025.
ທ່ານທີ່ສົນໃຈສາມາດຍື່ນໃບສະໝັກໄດ້ທີ່ສະພາແຫ່ງຊາດ (ພະແນກຄຸ້ມຄອງພາຫະນະ ຫ້ອງ 105)
ຕິດຕໍ່: ທ່ານ ເປມ ແກ້ວມະນີວົງ 020 55325873
ທ່ານ ພົດກາວອນ ພັນທະວົງສີ 020 5447 4331

ເຊັນແທນຫົວໜ້າກົມບໍລິຫານ-ພິທີການ

ຂັນທອງ ແສງສີໃຈ




# ໃຊ້ຊີວິດໃຫ້ມີສະຕິ ຍາມອາກາດຮ້ອນ

**# ດົ້ນກິບເມກ**

ນັບແຕ່ໄລຍະປີໃໝ່ມານີ້ ອາກາດຢູ່ບ້ານເຮົາຮ້ອນແຮງກວ່າແຕ່ລະປີຜ່ານມາ ເຊິ່ງພາໃຫ້ເກີດໄຟໄໝ້ປ່າ-ໄຟໄໝ້ເຮືອນ-ໄຟຟ້າຊອັດ-ສາຍໄຟກຳເກົ່າ ງ່າຍຕໍ່ການເກີດກະແສໄຟໄໝ້ລຸກລາມໄປໃສ່ບ້ານເຮືອນທີ່ຢູ່ໃກ້, ສາເຫດຂອງໄຟໄໝ້ຍັງພົບເຫັນໄດ້ຈາກການໃຊ້ໄຟແຕ່ງກິນ-ຫຸງເຂົ້າແລ້ວຫຼົງລືມ ປະໝາດບໍ່ໄດ້ມອດ-ປິດໃຫ້ຄັກ ແນ່, ຢູ່ບາງເຂດທັງໃນນະຄອນຫຼວງ ແລະ ຕ່າງແຂວງ ຫຼົງລືມເປີດໄຟໄວ້ເວລາໄຟຟ້າບໍ່ມາ ກໍອອກໄປເຮັດວຽກ, ນີ້ກໍແມ່ນສາເຫດໜຶ່ງພາໃຫ້ເກີດໄຟໄໝ້; ນ້ຳປະປາກໍຄືກັນ ບາງຄົນຫຼົງເປີດນ້ຳໄວ້ກໍມີ ທັງໝົດນີ້ມັນເວົ້າເຖິງສະຕິບໍ່ໃຫ້ປະໝາດ.

ສອງສາມທິດຜ່ານມານີ້, ຢູ່ນະຄອນຫຼວງວຽງຈັນ ເທົ່າທີ່ຜູ້ຂຽນຕິດຕາມຂ່າວປາກົດເກີດອັກຄີໄພຢູ່ຫຼາຍບ່ອນ; ດັ່ງນັ້ນ, ພວກເຮົາຕ້ອງມີສະຕິຊ່ວຍກັນບອກເຕືອນລູກຫຼານການໃຊ້ນ້ຳ-ໃຊ້ໄຟຕ້ອງມີສະຕິ ຖ້າໄຟບໍ່ມາເຮົາບໍ່ຢູ່ເຮືອນຕ້ອງປິດສະວິດ, ຖ້ານ້ຳບໍ່ມາເຮົາບໍ່ຢູ່ເຮືອນກໍຕ້ອງປິດກອັກນ້ຳໄວ້ໂລດ ບາງຄົນຫຼົງເປີດກອັກນ້ຳໄວ້ແລ້ວໄປຫຼິ້ນຕ່າງແຂວງສອງສາມມື້ ພາໃຫ້ໄດ້ຈ່າຍຄ່ານ້ຳ ຫຼື ຄ່າໄຟຫຼາຍຂຶ້ນ.

ເວົ້າສະເພາະກໍແມ່ນການເປີດແອຍ້ອນວ່າອາກາດຮ້ອນ ເມື່ອເປີດແອໄວ້ໄຟບໍ່ມາ ກໍບໍ່ໄດ້ປິດແອໄວ້, ເລີກການກັບເຮືອນເລີຍ ບາດມາຄິດຮູ້ທີ່ຫຼົງ ກໍເປັນການເປີດແອໄວ້ຫ້ອງການໝົດມື້ໝົດຄືນກໍມີ ນີ້ກໍຮຽກຮ້ອງໃຫ້ມີສະຕິລະວັງໄພ ແລະ ຮັກສາຊັບສິນຂອງລັດຊ່ວຍກັນ; ການເຝິກສະຕິໃຫ້ຈື່ຈຳທຸກມື້ກໍຈະກາຍເປັນນິດໄສ ໂດຍຄິດເສຍວ່ານ້ຳ-ໄຟຂອງລັດຢູ່ຫ້ອງການ ລັດຈ່າຍ ກໍຈະສິ້ນເປືອງຫຼາຍຂຶ້ນ, ຖ້າວ່າມີພະນັກງານບໍ່ຮູ້ຈັກສຳນຶກຮັກສາຊັບສິນລວມຂອງຊາດນີ້ ກໍບົ່ງບອກວ່າຜູ້ກ່ຽວຂາດຄຸນສົມບັດ, ບໍ່ຮັກຊາດ ເພາະບໍ່ຮູ້ປະຢັດຊັບສິນລວມຂອງຊາດ.

ຜູ້ຂຽນເວົ້າເຖິງໄຟໄໝ້ອັກຄີໄພ ເພື່ອເຕືອນກັນທຸກຄົນໃຫ້ມີສະຕິ ທັງຊັບຂອງສ່ວນຕົວ ແລະ ສ່ວນລວມ, ອາກາດຮ້ອນໃຈຄົນກໍຍິ່ງຮ້ອນໄຟໃນໃຈກໍເຜົາໄໝ້ຊີວິດບໍ່ມີຄວາມສຸກ, ຮ້ອນທັງກາຍທັງໃຈ ກໍຍິ່ງຫາຄວາມສຸກໃຫ້ຊີວິດບໍ່ໄດ້.






# ວິທີເຮັດວຽກ

## ພາກທີ 7
## ບັນຫາພະນັກງານ

ຖ້າຫາກມີພະນັກງານຜູ້ບໍ່ອຸ່ນອ່ຽງໃນເຮັດວຽກ, ພວກເຮົາຕ້ອງກວດເບິ່ງບ່ອນທີ່ການນຳບໍ່ຖືກຕ້ອງຂອງພວກເຮົາ ເພື່ອຊີ້ແຈງແນະນຳຜູ້ນັ້ນໃຫ້ເຂົ້າໃຈພວກເຮົາດີ, ຖ້າຫາກວ່າເຫັນເປັນຍ້ອນວຽກການບໍ່ເໝາະສົມກັບຄວາມສາມາດຂອງເຂົາເຈົ້າ, ກໍຕ້ອງຊອກວຽກການທີ່ເໝາະສົມກວ່ານັ້ນໃຫ້ເຂົາເຈົ້າເຮັດ.

ຄ) ຕ້ອງເລື່ອນຊັ້ນພະນັກງານ: ການເລື່ອນຊັ້ນພະນັກງານ ຕ້ອງຖືເອົາຕາມວຽກງານ, ຖືເອົາຕາມຄວາມສາມາດ ແລະ ຖືເປັນການສ້າງເງື່ອນໄຂໃຫ້ຜູ້ອື່ນຂະຫຍັນຫ້າວຫັນຂຶ້ນຕື່ມ. ເຮັດແນວນັ້ນ ແນ່ນອນວຽກການຈະແລ່ນສະດວກດີ.

ຖ້າຫາກເຮັດຍ້ອນຄວາມຮັກແພງ ຫຼື ຄວາມຊັງ, ຍ້ອນຄວາມຊອບພໍກັນຍ້ອນຄວາມຈິ່ງຈຽມນັ້ນຈະບໍ່ມີຜູ້ໃດເຊື່ອຖື ຈະມີ ແຕ່ກໍ່ໃຫ້ເກີດຄວາມວຸ້ນວາຍຂຶ້ນພາຍໃນພັກ. ເຮັດແນວນັ້ນແມ່ນມີ ໂທດໜັກຕໍ່ພັກ ຕໍ່ປະເທດຊາດ ແລະ ຕໍ່ປະຊາຊົນ.

ກ່ອນຈະເລື່ອນຊັ້ນພະນັກງານຕ້ອງກວດເບິ່ງຄັກແນ່ ບໍ່ ແມ່ນພຽງແຕ່ກວດເບິ່ງວຽກການຂອງເຂົາເຈົ້າເທົ່ານັ້ນ, ແຕ່ຍັງຕ້ອງ ເບິ່ງວິທີຢູ່ກິນຂອງເຂົາເຈົ້າອີກດ້ວຍ. ບໍ່ແມ່ນພຽງແຕ່ເບິ່ງວິທີຂຽນ ແລະ ວິທີເວົ້າຂອງເຂົາເຈົ້າເທົ່ານັ້ນ, ແຕ່ຍັງຕ້ອງກວດເບິ່ງວຽກທີ່ເຂົາເຈົ້າເຮັດວ່າມັນຖືກກັບຄວາມເວົ້າຂອງເຂົາເຈົ້າ ແລະ ຖືກກັບ ສິ່ງທີ່ເຂົາເຈົ້າຂຽນນັ້ນຫຼື ບໍ່, ບໍ່ແມ່ນພຽງແຕ່ເບິ່ງທ່າທີຂອງເຂົາເຈົ້າ ຕໍ່ພວກເຮົາເທົ່ານັ້ນ, ແຕ່ຕ້ອງກວດເບິ່ງທ່າທີຂອງເຂົາເຈົ້າຕໍ່ຜູ້ອື່ນ ເປັນແນວໃດອີກດ້ວຍ ເມື່ອພວກເຮົາເຫັນວ່າເຂົາເຈົ້າເປັນຜູ້ດີແລ້ວກໍຕ້ອງກວດເບິ່ງອີກວ່າ ເພື່ອນສະມາຊິກຂອງເຮົາຍັງເຫັນວ່າເຂົາ ເຈົ້າດີຄືກັນກັບພວກເຮົາເຫັນນັ້ນ ຫຼື ບໍ່, ຕ້ອງຮູ້ຂໍ້ດີຂອງເຂົາເຈົ້າ ແລະ ຕ້ອງຮູ້ຂໍ້ບົກພ່ອງຂອງເຂົາເຈົ້າອີກດ້ວຍ. ບໍ່ຄວນເບິ່ງພຽງແຕ່ວຽກການຂອງເຂົາເຈົ້າແຕ່ຍາມດຽວ ແຕ່ຕ້ອງເບິ່ງວຽກການຂອງເຂົາເຈົ້າແຕ່ກ່ອນມາເຖິງດຽວນີ້.

ອ່ານຕໍ່ສະບັບໜ້າ...

## ທາລີ...

(ຕໍ່ຈາກໜ້າ 1)

ຊວງ ແລະ ອົງການທີ່ກ່ຽວຂ້ອງ, ຜູ້ຕາງໜ້າຂອງສະມາພັນຄວບຄຸມຢາສູບອາຊຽນ ແລະ ພະນັກງານຈາກພາກສ່ວນທີ່ກ່ຽວຂ້ອງ.

ທ່ານ ຄຳໃບ ດຳລັດ ໄດ້ມີຄຳເຫັນກ່າວເປີດວ່າ: ກອງປະຊຸມຄັ້ງນີ້ແມ່ນເພື່ອຄົ້ນຄວ້າແລະປຶກສາຫາຮ່ວມກັນ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍແລະນິຕິກຳໃຕ້ກົດໝາຍໃນຂົງເຂດວັດທະນະທຳ-ສັງຄົມ ທີ່ຕິດພັນກັບການແກ້ໄຂປາກົດການຫຍໍ້ທໍ້ ແລະ ບັນຫາທີ່ພົ້ນເດັ່ນເປັນຕົ້ນ ບັນຫາຢາສູບໄຟຟ້າແລະຄໍລາເຈັນ: ເຖິງວ່າຈະມີກົດໝາຍແລະລະບຽບການທີ່ກ່ຽວຂ້ອງແລ້ວ ແຕ່ການສະກັດກັ້ນ, ຄວບຄຸມການນຳເຂົ້າ, ການຈຳໜ່າຍ ແລະ ການນຳໃຊ້ຢາສູບໄຟຟ້າ, ຄໍລາເຈັນ ທີ່ມີສານເສບຕິດ ຍັງເປັນບັນຫາທີ່ໜ້າເປັນຫ່ວງ ລວມທັງປະສິດທິຜົນຂອງການບັງຄັບໃຊ້ກົດໝາຍ, ການກວດກາຄຸນນະພາບ ແລະ ການສ້າງຄວາມຮັບຮູ້ໃຫ້ແກ່ຜູ້ບໍລິໂພກຍັງບໍ່ເຂັ້ມງວດເທົ່າທີ່ຄວນ; ການຄຸ້ມຄອງສື່ສັງຄົມອອນລາຍ: ຍັງມີສິ່ງທ້າທາຍໃນການຄຸ້ມຄອງເນື້ອຫາທີ່ບໍ່ເໝາະສົມ, ເກີດມີຂ່າວປອມ ແລະ ຜົນກະທົບທາງລົບຕໍ່ສັງຄົມ, ກົນໄກການຄຸ້ມຄອງ, ການຮ່ວມມືກັບຜູ້ໃຫ້ບໍລິການ ແລະ ການສ້າງຄວາມຮູ້ເທົ່າທັນສື່ໃຫ້ແກ່ປະຊາຊົນ ຍັງບໍ່ກົມກຽວກັນເທົ່າທີ່ຄວນ; ບັນຫາການມົ້ວສຸມຢູ່ສະຖານບັນເທີງ: ການຈັດຕັ້ງປະຕິບັດລະບຽບການຄຸ້ມຄອງສະຖານບັນເທີງ ແລະ ມາດຕະການລົງໂທດຕໍ່ຜູ້ລະເມີດ ຍັງບໍ່ເຂັ້ມງວດເທົ່າທີ່ຄວນ; ບັນຫາອຸບັດເຫດຕາມທ້ອງຖະໜົນ: ເຖິງແມ່ນວ່າຈະມີກົດໝາຍ ແລະ ມາດຕະການຕ່າງໆ, ແຕ່ອຸບັດເຫດຕາມທ້ອງຖະໜົນຍັງເກີດຂຶ້ນຢ່າງຕໍ່ເນື່ອງ ແລະ ສ້າງຄວາມສູນເສຍຢ່າງຫຼວງຫຼາຍ; ການເພີ່ມຂຶ້ນຂອງອັດຕາການຕິດເຊື້ອເອດຈ໌ໄອວີ (ພະຍາດເອດ): ເຖິງວ່າຈະມີຄວາມພະຍາຍາມໃນການປ້ອງກັນ ແລະ ຄວບຄຸມ, ແຕ່ສະຖິຕິການຕິດເຊື້ອເອດຈ໌ໄອວີໃນບາງກຸ່ມ ຍັງມີທ່າອຽງເພີ່ມຂຶ້ນຢ່າງຕໍ່ເນື່ອງ ແລະ ອື່ນໆ. ບັນຫາທັງໝົດເຫຼົ່ານັ້ນ ໄດ້ສົ່ງຜົນກະທົບຕໍ່ສຸຂະພາບຂອງປະຊາຊົນ, ຄວາມບໍ່ສະຫງົບ-ຄວາມບໍ່ເປັນລະບຽບຮຽບຮ້ອຍຂອງສັງຄົມ, ກໍ່ໃຫ້ເກີດການສູນເສຍຊີວິດ, ຊັບສິນ ແລະ ມີຜົນກະທົບຕໍ່ການສ້າງຊັບພະຍາກອນມະນຸດຂອງຊາດທີ່ມີຄຸນນະພາບ.

ທ່ານ ບຸນຕາ ເທບພະວົງ ປະທານກຳມາທິການວັດທະນະທຳ-ສັງຄົມ ໄດ້ມີຄຳເຫັນວ່າ: ຜ່ານການຕິດຕາມກວດກາຂອງສະພາແຫ່ງຊາດ, ການລາຍງານສ່ອງແສງຈາກບັນດາທ່ານສະມາຊິກສະພາແຫ່ງຊາດ ທີ່ເປັນກຳມະການຂອງກຳມາທິການວັດທະນະທຳ-ສັງຄົມ ໃນຂອບເຂດທົ່ວປະເທດ ບວກກັບການລາຍງານຂອງບັນດາຂະແໜງການ ແລະພາກສ່ວນທີ່ກ່ຽວຂ້ອງເຫັນວ່າຍັງມີດ້ານອ່ອນທີ່ເປັນຂໍ້ຄົງຄ້າງ ແລະ ສິ່ງທ້າທາຍຈຳນວນໜຶ່ງ ທີ່ຈະຕ້ອງໄດ້ເອົາໃຈໃສ່ປັບປຸງ, ແກ້ໄຂໃນຕໍ່ໜ້າ ເປັນຕົ້ນ: ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຄວບຄຸມຢາສູບ, ກົດໝາຍວ່າດ້ວຍສິລະປະການສະແດງ, ກົດໝາຍວ່າດ້ວຍການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ, ກົດໝາຍວ່າດ້ວຍການກັນ ແລະ ຄວບຄຸມເຊື້ອເອດຈ໌ໄອວີ/ພະຍາດເອດ, ກົດໝາຍວ່າດ້ວຍຢາເສບຕິດ, ກົດໝາຍວ່າດ້ວຍການຈະລາຈອນທາງບົກ, ກົດໝາຍວ່າດ້ວຍເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ແລະ ອື່ນໆ ຍັງບໍ່ທັນເຂັ້ມງວດເທົ່າທີ່ຄວນສົ່ງຜົນກະທົບທາງລົບ ແລະ ກີດໜ່ວງຈັງຫວະການຂະຫຍາຍຕົວຂອງການພັດທະນາທາງດ້ານເສດຖະກິດ-ສັງຄົມ ກໍຄືການພັດທະນາຊັບພະຍາກອນມະນຸດຂອງຊາດ. ການຕິດຕາມກວດກາການຈັດຕັ້ງປະຕິບັດກົດໝາຍ ຍັງບໍ່ເປັນປົກກະຕິ ແລະ ຕໍ່ເນື່ອງ; ການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຂະແໜງການ ແລະ ພາກສ່ວນທີ່ກ່ຽວຂ້ອງ ບາງດ້ານຍັງບໍ່ທັນປະຕິບັດໄດ້ຕາມທີ່ກົດໝາຍກຳນົດໄວ້; ການແບ່ງຂັ້ນຄຸ້ມຄອງ, ແບ່ງຄວາມຮັບຜິດຊອບລະຫວ່າງສູນກາງ ກັບທ້ອງຖິ່ນ, ລະຫວ່າງພາກສ່ວນຕ່າງໆທີ່ກ່ຽວຂ້ອງ ຍັງມີຫຼາຍຂອດບໍ່ທັນຈະແຈ້ງ ແລະ ເປັນເອກະພາບກັນ. ການໂຄສະນາເຜີຍແຜ່ກົດໝາຍທີ່ຕິດພັນກັບວຽກງານການແກ້ໄຂປາກົດການຫຍໍ້ທໍ້ຕ່າງໆໃນສັງຄົມ ເຖິງວ່າໄດ້ມີຄວາມພະຍະຍາມເຮັດດ້ວຍຫຼາຍຮູບ, ຫຼາຍສີ ແລະ ຫຼາຍວິທີການແລ້ວກໍຕາມ ແຕ່ປະສິດທິພາບ, ປະສິດທິຜົນໃນການໂຄສະນາ ບໍ່ທັນສູງ, ເລິກເຊິ່ງ, ຕໍ່ເນື່ອງ, ກວ້າງຂວາງ ແລະ ທົ່ວເຖິງ, ຍັງມີລັກສະນະແບບລວມໆ, ບໍ່ທັນລົງເລິກອະທິບາຍ, ສ້າງຄວາມເຂົ້າໃຈໄດ້ຢ່າງເລິກເຊິ່ງ ເຮັດໃຫ້ຄວາມຮັບຮູ້ ແລະ ເຂົ້າໃຈຕໍ່ກັບກົດໝາຍດັ່ງກ່າວ, ສະຕິເຄົາລົບ ແລະປະຕິບັດກົດໝາຍຍັງບໍ່ທັນສູງ ລວມທັງການບັງຄັບໃຊ້ກົດໝາຍຕໍ່ຜູ້ລະເມີດ ກໍບໍ່ທັນເຂັ້ມງວດເທົ່າທີ່ຄວນ. ການຜັນຂະຫຍາຍບັນດາມາດຕາຂອງບາງກົດໝາຍທີ່ກຳນົດໃຫ້ມີລະບຽບການຕ່າງຫາກ ທີ່ກຳນົດໃນກົດໝາຍດັ່ງກ່າວຍັງຊັກຊ້າຫຼືມາດຕາທີ່ຜັນຂະຫຍາຍເປັນນິຕິກຳໃຕ້ກົດໝາຍແລ້ວ, ແຕ່ການຈັດຕັ້ງປະຕິບັດກໍຍັງບໍ່ທັນມີປະສິດທິພາບ ແລະ ປະສິດທິຜົນເທົ່າທີ່ຄວນ. ຄວາມຮັບຜິດຊອບໜ້າທີ່ການເມືອງຂອງຄະນະພັກ, ຄະນະນຳທຸກຂັ້ນ ໃນການບັນຊາ, ນຳພາ-ຊີ້ນຳ ໃນການແກ້ໄຂປາກົດການຫຍໍ້ທໍ້ຕ່າງໆ ຍັງບໍ່ທັນສູງເທົ່າທີ່ຄວນ. ການປະສານສົມທົບລະຫວ່າງບັນດາຂະແໜງການທີ່ກ່ຽວຂ້ອງ ທັງສູນກາງ ແລະ ທ້ອງຖິ່ນ ຍັງບໍ່ທັນໂລ່ງລ່ຽນ, ກົມກຽວ ແລະ ເປັນລະບົບດີເທົ່າທີ່ຄວນ, ຍັງເຮັດພໍໃຜພໍລາວ ແລະ ມີສະພາບການຖິ້ມຄວາມຮັບຜິດຊອບໃຫ້ກັນ. ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຍັງບໍ່ໃຫ້ການຮ່ວມມື, ບໍ່ເອົາໃຈໃສ່ປະຕິບັດຕາມເນື້ອໃນກົດໝາຍກຳນົດ ແລະ ຍັງບໍ່ທັນມີການຕິດຕາມກວດກາເປັນປົກກະຕິ ແລະ ປະຕິບັດມາດຕະການແກ້ໄຂຢ່າງເຂັ້ມງວດ ເຮັດໃຫ້ມີສະພາບການລະເມີດກົດໝາຍຫຼາຍ.

ກອງປະຊຸມຍັງໄດ້ຮັບຟັງການລາຍງານສະພາບສິ່ງທ້າທາຍຂອງຢາສູບໄຟຟ້າ, ຄວາມຄືບໜ້າຂອງການຕໍ່ສັນຍາການລົງທຶນຂອງບໍລິສັດຜະລິດຢາສູບໃນ ສປປລາວ; ການຄຸ້ມຄອງການນຳເຂົ້າ ແລະ ຈຳໜ່າຍຢາສູບ ໂດຍສະເພາະຢາສູບໄຟຟ້າ, ຄໍລາເຈັນ, ປຸມເປົ້າທີ່ເປັນອັນຕະລາຍຕໍ່ສຸຂະພາບ; ການຄຸ້ມຄອງນຳໃຊ້ຢາສູບໄຟຟ້າ, ຄໍລາເຈັນ, ປຸມເປົ້າ ທີ່ເປັນອັນຕະລາຍຕໍ່ສຸຂະພາບຢູ່ສະຖານການສຶກສາ; ການຄຸ້ມຄອງສະຖານບັນເທີງ ເປັນຕົ້ນ: ບັນຫາມົ້ວສຸມສິ່ງເສບຕິດ, ສິ່ງລາມົກອານາຈານ; ການຄຸ້ມຄອງສື່ສັງຄົມອອນລາຍ ທີ່ກະທົບຕໍ່ວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມຂອງຊາດ; ສະພາບການຕິດເຊື້ອ HIV ພະຍາດ AIDs; ສະພາບກ່ຽວກັບອຸປະຕິເຫດທາງທ້ອງຖະໜົນ.

ບັນດາຜູ້ເຂົ້າຮ່ວມ ໄດ້ພ້ອມກັນຄົ້ນຄວ້າ, ແລກປ່ຽນຄຳຄິດຄຳເຫັນຢ່າງກົງໄປກົງມາ, ສ້າງສັນ ແລະ ດ້ວຍຄວາມຮັບຜິດຊອບສູງ ເພື່ອຊອກໃຫ້ເຫັນບັນຫາ, ຂໍ້ຄົງຄ້າງ, ວິທີການແລະມາດຕະການແກ້ໄຂໃຫ້ທັນການ ແລະ ນຳໄປສູ່ການປ່ຽນແປງໃນທາງທີ່ດີຂຶ້ນໃນຕໍ່ໜ້າ.

**(ສອນສັກ ວັນວິໄຊ)**



## ສຸກສະບາຍຫາຍໂລກາ

# 5 ສັນຍານເຕືອນອາການແພ້ຢາສະຜົມ

# ຮຽບຮຽງໂດຍ: ກະຖິນອ່ອນ



ໃນປັດຈຸບັນນີ້ຢາສະຜົມມີຫຼາກຫຼາຍຍີ່ຫໍ້ ແລະ ຫຼາກຫຼາຍສູດ ຈຶ່ງເລືອກຊື້ເລືອກໃຊ້ບໍ່ຖືກ ແຕ່ເຊື່ອແນ່ວ່າຫຼາຍທ່ານຈະເລືອກໃຊ້ຜະລິດຕະພັນທີ່ມີກິ່ນຫອມຕາມໃຈມັກ ແຕ່ບາງຄັ້ງການໃຊ້ຕາມທີ່ໂຕເອງມັກອາດຈະພາໃຫ້ເກີດມີອາການຄັນ ຫຼື ແສບໜັງຫົວ ບາງເທື່ອກໍມີສິວຂຶ້ນຕາມໜັງຫົວ... ຖ້າທ່ານມີອາການເຫຼົ່ານີ້ລອງມາກວດນຳກັນເບິ່ງວ່າ ທ່ານມີອາການແພ້ຢາສະຜົມຫຼືບໍ່ ແລະ ໃນຄໍລຳສຸກສະບາຍຫາຍໂລກາສະບັບນີ້ເຮົາມີ5ສັນຍານເຕືອນອາການແພ້ຢາສະຜົມມານຳສະເໜີໃຫ້ແກ່ບັນດາທ່ານໄດ້ຮັບຮູ້ແລະສັງເກດໄປນຳກັນ:

**1. ແສບໜັງຫົວ ແລະ ມີຮອຍແດງ.**

ຫາກທ່ານໃດທີ່ໃຊ້ຢາສະຜົມແລ້ວຮູ້ສຶກແສບໆຄັນໆໜັງຫົວຕັ້ງແຕ່ເທື່ອທຳອິດທີ່ໃຊ້ ໂດຍທີ່ບໍ່ມີບາດແຜໃນໜັງຫົວ ອາການແບບນີ້ເປັນອາການແພ້ຢາສະຜົມ ເພາະໃນຢາສະຜົມອາດຈະມີສານເຄມີບາງຊະນິດທີ່ເຮັດໃຫ້ໜັງຫົວເກີດອາການຄັນຈົນອັກເສບ ແລະຈະກາຍເປັນຮອຍແດງຕາມໜັງຫົວບໍລິເວນອ້ອມຮອບແລະບາງຄົນອາດຈະມີອາການແສບນຳອີກ.

**2. ມີຕຸ່ມຂຶ້ນ ແລະ ມີອາການຄັນ**

ນອກຈາກບໍລິເວນໜັງຫົວແລ້ວບ່ອນໃດຖືກຢາສະຜົມກໍຈະມີຕຸ່ມຂຶ້ນ ຫຼື ຄັນ ເກີດຈາກຢາສະຜົມບາງຊະນິດມີສານSLS (ສານຫຼຸດຄວາມຕຶງຂອງຜິວ) ແລະ ພາລາເບນ (ສານກັນບູດໃນເຄື່ອງສຳອາງ) ທີ່ໄປທຳລາຍຄວາມຊຸ່ມຊື່ນ ແລະ ເຮັດໃຫ້ເກີດອາການຄັນໃນບ່ອນທີ່ຖືກກັບຢາສະຜົມ.

**3. ມີສິວສ້ຽນ ແລະ ສິວເກືອ**

ຢາສະຜົມທີ່ເຮົາໃຊ້ນັ້ນອາດເປັນສາເຫດທີ່ແທ້ຈິງຂອງການມີສິວ ເຊິ່ງມັກຈະເກີດບໍລິເວນໜ້າຜາກ,ຕີນຜົມແລະໜຶດ ໂດຍສະເພາະສິວເກືອ ແລະ ສິວສ້ຽນ ເພາະໃນຢາສະຜົມມີສານຊິລິໂຄນປະສົມຢູ່ເພື່ອເອືອບຜົມມີຄວາມນຸ່ມແລະມືນພ້ອມນັ້ນ, ສານດັ່ງກ່າວກໍເປັນສາເຫດຫຼັກຂອງການເປັນສິວສ້ຽນເຊິ່ງເກີດຂຶ້ນໄດ້ຈາກສານຊິລິໂຄນໃນຢາສະຜົມຕົກຄ້າງແລະສະສົມຕາມຮູຂຸມຂົນ ຈົນເກີດເປັນອາການແພ້ຢາສະຜົມ ແລະ ເປັນສິວນັ້ນເອງ.

**4. ມີຂີ້ຮັງແຄ**

ເປັນອີກໜຶ່ງສັນຍານທີ່ເຫັນໄດ້ຢ່າງຈະແຈ້ງ ນອກຈາກມີສະເກັດຂາວໆເປັນຝຸຍຕົກລົງມາແລ້ວຍັງມີອາການຄັນນຳອີກ ເຊິ່ງອາດເກີດໄດ້ຈາກຫລາຍສາເຫດ ບາງເທື່ອອາດຈະເປັນເພາະໜັງຫົວແຫ້ງ ແລະອັກເສບ ລວມເຖິງເຊື້ອລາຕ່າງໆ ດັ່ງນັ້ນ, ຈຶ່ງຕ້ອງໝັ່ນສັງເກດເວລາທີ່ປ່ຽນໃຊ້ຢາສະຜົມໃໝ່ ວ່າມີລັງແຄເກີດຂຶ້ນຫຼືບໍ່ ຖ້າມີໃຫ້ຢຸດໃຊ້ໃນທັນທີ.

**5. ຜົມຫຼົ່ນ**

ຢາສະຜົມເປັນໜຶ່ງສາເຫດທີ່ເຮັດໃຫ້ຜົມຫຼົ່ນ ອັນເກີດຈາກສານຊິລິໂຄນຕົກຄ້າງຢູ່ໃນກົກຜົມ ເຊິ່ງຈະໄປອັດຕັນ ແລະ ເຮັດໃຫ້ຜົມຫຼົ່ນ; ນອກນັ້ນ, ຜົມຫຼົ່ນຍັງເກີດມາຈາກຫຼາຍສາເຫດ ເຊັ່ນ: ແພ້ອາຫານ, ນອນເດິກ ຫຼື ມີພຶດຕິກຳທີ່ສົ່ງຜົນບໍ່ດີຕໍ່ເສັ້ນຜົມ ເປັນຕົ້ນການສະຜົມກາງຄືນແລ້ວບໍ່ເຮັດໃຫ້ແຫ້ງ ມັດຜົມແໜ້ນຈົນເກີນໄປເປັນປະຈຳ.

---

## ອາດ ກະວີລາວ

# ແບບທຳມະຊາດ

# ຫຼານເຈົ້ານ້ອຍ

❊ ຜັກສວນເຮົາປູກໄວ້
ຫວ່ານແລ້ວເອົາໄປບົ່ງ
ຂີ້ໄກ່ໂຮຍຮວາຍເຂົ້າ
ຢ່າລືມຫົດຮວາດນ້ຳ

ຕາມແບບບູຮານ
ໃສ່ໝານກຽມໄວ້
ລົງໄປເຕີມຕື່ມ
ສອງຄັ້ງຕໍ່ວັນ

❊ ຍາມເມື່ອມັນໃຫຍ່ຂຶ້ນ
ສາມາດເອົາໄປປຸງ
ຄວາມປອດໄພເກີນຮ້ອຍ
ແບບວ່າເຮົາບໍ່ຕ້ອງ

ໂດຍດັ່ງໃຈໝາຍ
ແຕ່ງເປັນອາຫານໄດ້
ຄົນກິນກໍແຊບ
ເສຍເງິນຊື້ຝຸ່ນປຸ໋ຍ

❊ ຄັນວ່າເຮົາຫາກໃຊ້
ຜັກໃຫຍ່ໄວທັນໃຈ
ຝຸ່ນເຄມີຊູໃຫ້
ກິນລົງໄປອາດຕ້ອງ

ວິທີໃໝ່ທັນສະໄໝ
ດັ່ງເຮົາປະສົງໄວ້
ໃບຂຽວຍາວໃຫຍ່
ໂຈມທ້ອງຮ່ວນຄາງ

❊ ນາງຢ່າເປັນດັ່ງເວົ້າ
ແປງແຕ່ຕີນຍັງຜົມ
ງາມດັ່ງຕົນຫວັງໄວ້
ຫາຄ່າຄຸນບໍ່ໄດ້

ເຮືອນຮ່າງລືໂສມ ແພງເອີຍ!
ຕື່ມເຕີມເສີມໃຫ້
ທາງໃຈດຳດ່າງ
ໃຜຊິຍ້ອງວ່າດີ

❊ ເພາະຍິງທີ່ຮູບຮ້າຍ
ແຕ່ວ່າມີໃຈງາມ
ມີຄ່າເກີນກາຍຜູ້
ຈູບບໍ່ຫອມເພິ່ນເວົ້າ

ກາຍກໍ່າດຳກາ
ສໍ່າດຽວນາງຟ້າ
ໂສມງາມພຽງຮູບ
ເຂົາຊິເຍີ້ຍຈົ່ມຂວັນ ແທ້ແລ້ວ!

---



## ສັກຫາຍ ລະບາຍ

*(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)*

# ສຽມຫຼຽນ

❊ **ລະ**ນຶກເຖິງວັນທີ 18 ພຶດສະພາ 1959-18 ພຶດສະພາ 2025 ຄົບຮອບ **66 ປີ ວັນຜ່າວົງປິດລ້ອມກອງພັນທີ 2** ວິລະຊົນ ອອກຈາກທົ່ງໄຫຫີນ ແຂວງຊຽງຂວາງ ແລະ **ວັນວິລະກຳໂຕນຖຸກຂອງບັນດາທ່ານຜູ້ບ່າ** (24 ພຶດສະພາ 1958-24 ພຶດສະພາ 2025) ຄົບຮອບ **67 ປີ** ບັດນີ້ຂໍກ່າວຍ້ອງ ຍໍຍື່ນໄປຫາ ການນຳພາພັກ-ລັດ ທ່ານຜູ້ບ່າຄາວກີ້ ຍ້ອນພວກທ່ານຈຶ່ງມີວັນນີ້ ປະຊາມີເອກະລາດ ຢູ່ຢ່າງສຸກສືບສ້າງ ລາວກ້າວພັດທະນາ **ຊອບແລ້ວ!**

❊ **ຊົມ**ເຊີຍຜົນສຳເລັດກອງປະຊຸມ**ສະໄໝວິສາມັນເທື່ອທີ 1** ຂອງສະພາປະຊາຊົນນະຄອນຫຼວງວຽງຈັນຊຸດທີ II ທີ່ໄດ້ປິດລົງດ້ວຍໝາກຜົນອັນຈົບງາມ ໃນວັນທີ **22 ພຶດສະພາ** ເຊິ່ງໄດ້ພິຈາລະນາ ແລະ ຮັບຮອງເອົາການສ້າງຕັ້ງຕາແສງທົດລອງ ນາມວ່າ **"ຕາແສງຊ້າງມີໄຊ"** ຢູ່ເມືອງໄຊທານີ ຕໍ່ນີ້ຄົງໜັກໜ້າ ທາງຝ່າຍຮາກຖານກະກຽມການສະເໜີ ບຸກຄະລາກອນບັນຈຸເຂົ້າ ຕາມການກຳນົດໄວ້ ໃນລັດຖະທຳມະນູນໃໝ່ ທີ່ປະກາດອອກໃຊ້ ປະຊາຮູ້ທົ່ວເຖິງ **ນັ້ນແລ້ວ!**

---

## ຊອບຍິ້ມ

# ແອ່ນຕຸ້ງ

### ເລື່ອງ: ມຶງຄືບໍ່ເບິ່ງ

ມີຜີສາມໂຕລໍຖ້າຄິວເພື່ອໄປນາຮົກ ເລີຍນັ່ງຖາມກັນວ່າ:

**ຜີໂຕທີ 1:** ມຶງເປັນຫຍັງຕາຍ

**ຜີໂຕທີ 2:** ກູຖຽງກັບເມຍ ເພາະລະແວງວ່າມັນມີຄົນອື່ນ ເລີຍຍົກຕູ້ຊິຖິ້ມໃສ່ມັນ ແຕ່ບໍ່ຖືກ, ກູໃຈຮ້າຍ ບອກກັບລືມກິນຢາບ້າ ກູເລີຍຊັອກຕາຍ, ມຶງເດ ຕາຍແນວໃດ?

**ຜີໂຕທີ 1:** ກູຂີ່ລົດມາດີໆ ຕູ້ຕົກໃສ່ຫົວລົດລົ້ມຕາຍ, ແລ້ວມຶງເດ

**ຜີໂຕທີ 3:** ກູວ່າ ກູກະຢູ່ໃນຕູ້ເດ!!! ມຶງຄືບໍ່ໄຂເບິ່ງກ່ອນ



## ຄະຕິເຕືອນໃຈ

# ດອກຫຍ້າ

ປາກົດປິ້ງເຕັ້ມໄພ
ສົ່ງມາດະດົ່ນດົ້ນ

ສົງບໍ່ຢາກ
ກິນເຂົ້າບ່າຍເກືອ

## ລັດຖະສະພາຕ່າງປະເທດ

# ເລືອກຕັ້ງລັດຖະສະພາ Albania




(Xinhua)-ການເລືອກຕັ້ງສະມາຊິກລັດຖະສະພາແຫ່ງສາທາລະນະລັດອານບານີ ໄດ້ເລີ່ມຂຶ້ນໃນທົ່ວປະເທດ ເມື່ອວັນອາທິດທີ 11 ພຶດສະພາຜ່ານມາ; ຜູ້ມີສິດເລືອກຕັ້ງເກືອບ3.7ລ້ານຄົນ ທີ່ລວມເຖິງຜູ້ມີສິດເລືອກຕັ້ງຢູ່ຕ່າງປະເທດ ລົງຄະແນນສຽງເລືອກຕັ້ງສະມາຊິກລັດຖະສະພາທັງໝົດ 140 ທີ່ນັ່ງ ຈາກ 11 ພັກການເມືອງ ແລະ ພັນທະມິດ, ມີສູນປ່ອນບັດຫຼາຍກວ່າ5,225 ແຫ່ງ ໄດ້ຮັບການຈັດຕັ້ງຂຶ້ນໃນທົ່ວປະເທດ ໂດຍເປີດໃນເວລາ 7:00 ໂມງເຊົ້າ ແລະ ປິດໃນເວລາ 19:00 ໂມງແລງ ຕາມເວລາທ້ອງຖິ່ນ.

ການເລືອກຕັ້ງຄັ້ງນີ້ແມ່ນການເລືອກຕັ້ງສະມາຊິກລັດຖະສະພາຄັ້ງທຳອິດໃນປະເທດ ນັບຕັ້ງແຕ່ ອານບານີ ເລີ່ມຕົ້ນການເຈລະຈາເຂົ້າເປັນສະມາຊິກສະຫະພາບເອີຣົບ(EU)ຢ່າງເປັນທາງການ ໃນເດືອນກໍລະກົດ2022.

ເປັນຄັ້ງທຳອິດທີ່ຜູ້ອົບພະຍົບສາມາດລົງຄະແນນສຽງທາງໄປສະນີໄດ້ ເຊິ່ງມີປະມານ 195,000 ຄົນ ໄປປ່ອນບັດທາງໄປສະນີ; ເນື່ອງຈາກມີການເຄື່ອນຍ້າຍຖິ່ນຖານໄປຢູ່ຕ່າງປະເທດຢ່າງຫຼວງຫຼາຍ, ປະເທດທີ່ມີປະຊາກອນ 2.4 ລ້ານຄົນ ຈຶ່ງມີຜູ້ມີສິດເລືອກຕັ້ງເກືອບ3.7ລ້ານຄົນ.

ຜົນການເລືອກຕັ້ງຢ່າງເປັນທາງການເມື່ອວັນອັງຄານທີ 13 ພຶດສະພາ, ສະແດງໃຫ້ເຫັນວ່າ ພັກສັງຄົມນິຍົມ (PS) ເຊິ່ງເປັນພັກລັດຖະບານ ໄດ້ 83 ທີ່ນັ່ງ ໃນລັດຖະສະພາທີ່ມີອາຍຸການ 4 ປີ, ພັກປະຊາທິປະໄຕ (PD) ເຊິ່ງເປັນຝ່າຍຄ້ານ ໄດ້ 50 ທີ່ນັ່ງ, ສ່ວນ 7 ທີ່ນັ່ງທີ່ຍັງເຫຼືອ ເປັນຂອງ 4 ພັກການເມືອງຂະໜາດນ້ອຍ.

ການທີ່ PS ໄດ້ຮັບໄຊຊະນະໃນການເລືອກຕັ້ງ, ຮັບປະກັນໃຫ້ນາຍົກລັດຖະມົນຕີ ເອດີ ຣາມາ (Edi Rama) ຈະດຳລົງຕຳແໜ່ງເປັນສະໄໝທີ 4 ເຊິ່ງບໍ່ເຄີຍມີມາກ່ອນ; ຣາມາ ທີ່ດຳລົງຕຳແໜ່ງມາຕັ້ງແຕ່ປີ 2013 ໄດ້ສຸມໃສ່ການໂຄສະນາຂອງເຂົາໃນການເຮັດວຽກເພື່ອເຂົ້າເປັນສະມາຊິກ EU ພາຍໃນປີ 2030, ຊາລີ ເບຣີຊາ (Sali Berisha) ຫົວໜ້າພັກ PD ຝ່າຍອະນຸລັກນິຍົມ ໂຕ້ແຍ້ງວ່າ ອານບານີ ຍັງບໍ່ພ້ອມສຳລັບການເຂົ້າເປັນສະມາຊິກ EU.

# ລັດຖະບານ Spain ອະນຸມັດຮ່າງກົດໝາຍຫຼຸດຊົ່ວໂມງເຮັດວຽກ




(Xinhua)-ລັດຖະບານແອັດສະປາຍ ໄດ້ອະນຸມັດຮ່າງກົດໝາຍຫຼຸດຊົ່ວໂມງການເຮັດວຽກ ຈາກອາທິດລະ 40 ຊົ່ວໂມງ ເຫຼືອ 37.5 ຊົ່ວໂມງ ໂດຍບໍ່ຫຼຸດຄ່າຈ້າງ; ການຫຼຸດຊົ່ວໂມງເຮັດວຽກ ໄດ້ຖືກອະນຸມັດຢູ່ກອງປະຊຸມຄະນະລັດຖະມົນຕີ ເມື່ອວັນພຸດທີ 7 ພຶດສະພາຜ່ານມາ, ເຖິງແມ່ນວ່າມາດຕະການດັ່ງກ່າວຍັງຕ້ອງໄດ້ຮັບການອະນຸມັດຈາກສະພາຜູ້ແທນລາສະດອນ (ສະພາຕ່ຳ).

ນາງ ໂຢລັນດາ ດິອາຊ (Yolanda Diaz) ຮອງນາຍົກລັດຖະມົນຕີຄົນທີ2, ລັດຖະມົນຕີກະຊວງແຮງງານ ແລະເສດຖະກິດສັງຄົມຂອງແອັດສະປາຍ ກ່າວໃນການຖະແຫຼງຂ່າວຫຼັງຈາກກອງປະຊຸມຄະນະລັດຖະມົນຕີວ່າ: ມາດຕະການດັ່ງກ່າວ ຈະເປັນປະໂຫຍດຕໍ່ແຮງງານປະມານ 12.5 ລ້ານຄົນໃນປະເທດ ເຊິ່ງລວມທັງ 2.4 ລ້ານຄົນ ໃນຂະແໜງຂາຍຍ່ອຍ, 2 ລ້ານຄົນ ໃນຂະແໜງອຸດສາຫະກຳແລະ1.4 ລ້ານຄົນ ໃນຂະແໜງບໍລິການ.

ເພື່ອຕອບສະໜອງຕໍ່ເລື່ອງນີ້, CEOE ອົງການຈັດຕັ້ງນາຍຈ້າງຕົ້ນຕໍຂອງແອັດສະປາຍ, ໄດ້ຮຽກຮ້ອງໃຫ້ມີການ "ເຈລະຈາຕໍ່ລອງກັນຫຼາຍຂຶ້ນແລະບັງຄັບໃຊ້ກົດລະບຽບໜ້ອຍລົງ".

# ຜູ້ນຳຝ່າຍນິຕິບັນຍັດອິນໂດເນເຊຍແລະກຳປູເຈຍຫາລືການພົວພັນທາງເສດຖະກິດ ແລະ ຄວາມາມັກຄີຂອງອາຊຽນ



(Xinhua) - ວັນພຸດທີ 7 ພຶດສະພາຜ່ານມາ ທີ່ນະຄອນຫຼວງຈາກາຕາ, ນາງ ປວນ ມະຫາຣານີ (Puan Maharani) ປະທານສະພາຜູ້ແທນປະຊາຊົນ (ສະພາຕ່ຳ) ອິນໂດເນເຊຍ ໄດ້ພົບປະກັບສົມເດັດ ອັກຄະມະຫາເສນາບໍດີ ເຕໂຈ ຮຸນເຊນ (Samdech Akka Moha Sena Padei Techo Hun Sen) ປະທານສະພາສູງກຳປູເຈຍ ເພື່ອປຶກສາຫາລືກ່ຽວກັບການຮ່ວມມືທາງເສດຖະກິດ ແລະ ການປ້ອງກັນປະເທດສອງຝ່າຍ ແລະ ຄວາມສາມັກຄີລະຫວ່າງປະເທດໃນອາຊີຕາເວັນອອກສຽງໃຕ້.

ໃນການຖະແຫຼງຂ່າວຫຼັງຈາກການພົບປະ, ນາງ ມະຫາຣານີ ລູກສາວຂອງນາງ ເມກາວາຕີ ຊູກາຣ໌ໂນບຸດຕຣີ (Megawati Soekarnoputri) ປະທານາທິບໍດີອິນໂດເນເຊຍ ຄົນທີ 4 ໃຫ້ຮູ້ວ່າ, ການຮ່ວມມືທາງເສດຖະກິດລະຫວ່າງສອງປະເທດ ໄດ້ເພີ່ມຂຶ້ນຢ່າງຫຼວງຫຼາຍ ໂດຍມູນຄ່າການຄ້າບັນລຸປະມານ 1 ຕື້ໂດລາສະຫະລັດ ໃນປີ 2024; ນາງກ່າວຕື່ມວ່າ, ລັດຖະສະພາຂອງທັງອິນໂດເນເຊຍ ແລະ ກຳປູເຈຍຕ່າງເຫັນດີສະໜັບສະໜູນນະໂຍບາຍທີ່ລັດຖະບານຕົນໄດ້ວາງອອກ.

ນາງກ່າວວ່າ "ເປັນໄປບໍ່ໄດ້ທີ່ຝ່າຍບໍລິຫານຈະເຮັດວຽກຢ່າງໂດດດ່ຽວໂດຍປາສະຈາກການສະໜັບສະໜູນຈາກຝ່າຍນິຕິບັນຍັດ; ສົມເດັດ ຮຸນເຊນ ຍັງໄດ້ເຫັນດີວ່າ ທັງຝ່າຍບໍລິຫານ ແລະ ຝ່າຍນິຕິບັນຍັດ ຈະຕ້ອງເຮັດວຽກຮ່ວມກັນໃນການປະຕິບັດນະໂຍບາຍສາທາລະນະ".

ປະທານລັດຖະສະພາຍັງກ່າວອີກວ່າ ສົມເດັດ ຮຸນເຊນ ເນັ້ນໜັກເຖິງຄວາມສຳຄັນຂອງຄວາມສາມັກຄີລະຫວ່າງປະເທດສະມາຊິກຂອງສະມາຄົມປະຊາຊາດແຫ່ງອາຊີຕາເວັນອອກສຽງໃຕ້ ຫຼື ອາຊຽນ ເນື່ອງຈາກສະພາບການໂລກທີ່ທ້າທາຍໃນປັດຈຸບັນ.

ນາງກ່າວວ່າ "ພວກເຮົາຫວັງວ່າອາຊຽນຈະມີຄວາມສາມັກຄີທີ່ເຂັ້ມແຂງ ແລະ ດີຂຶ້ນ ເພື່ອຫຼີກເວັ້ນຜົນກະທົບໂດຍກົງຈາກຄວາມວຸ້ນວາຍຂອງໂລກ.

# ປະທານາທິບໍດີອູແກຣນ ລົງນາມກົດໝາຍໃຫ້ສັດຕະຍາບັນຂໍ້ຕົກລົງຊັບພະຍາກອນທຳມະຊາດ



(Xinhua) - ວັນຈັນທີ 12 ພຶດສະພາຜ່ານມາ, ໂວໂລດີມີຣ໌ເຊເລນສະກີ(Volodymyr Zelensky) ປະທານາທິບໍດີອູແກຣນ ໄດ້ລົງນາມໃນກົດໝາຍໃຫ້ສັດຕະຍາບັນຂໍ້ຕົກລົງຊັບພະຍາກອນທຳມະຊາດກັບສະຫະລັດອາເມລິກາ ເຊິ່ງຈະສ້າງຕັ້ງກອງທຶນຮ່ວມລົງທຶນເພື່ອຟື້ນຟູອູແກຣນ, ຕາມຂໍ້ມູນໃນເວັບໄຊຂອງລັດຖະສະພາ.

ໝາຍເຫດອະທິບາຍກົດໝາຍ ລະບຸວ່າ "ການປະຕິບັດຂໍ້ຕົກລົງດັ່ງກ່າວ ຈະຮັບປະກັນການຮ່ວມມືທາງເສດຖະກິດລະຫວ່າງອູແກຣນແລະສະຫະລັດພັດທະນາຕໍ່ໄປໃນທາງທີ່ດີຂຶ້ນ".

ຂໍ້ຕົກລົງການສ້າງຕັ້ງກອງທຶນດັ່ງກ່າວ ເຊິ່ງຈະໄດ້ຮັບເງິນສະໜັບສະໜູນບາງສ່ວນຈາກຄ່າພາກຫຼວງ (royalty) ໃໝ່ ສຳລັບຊັບພະຍາກອນແຮ່ທາດ, ແກ๊ສ ແລະ ນ້ຳມັນຂອງອູແກຣນ ໄດ້ຮັບການລົງນາມໃນນະຄອນຫຼວງວໍຊິງຕັນເມື່ອວັນທີ 30 ເມສາຜ່ານມາ ໂດຍຢູເລຍ ສະວີຣິເດນໂກ(YuliaSvyrydenko)ຮອງນາຍົກລັດຖະມົນຕີຄົນທຳອິດ ແລະ ລັດຖະມົນຕີເສດຖະກິດຂອງອູແກຣນ ແລະ ສະກ๊ອດຕ໌ ເບສເຊນຕ໌ (Scott Bessent) ລັດຖະມົນຕີກະຊວງການເງິນຂອງສະຫະລັດ.

ຕາມຄຳກ່າວຂອງນາງ ສະວີຣິເດນໂກ, ທັງ 2 ປະເທດ ຈະຮ່ວມກັນບໍລິຫານແລະຮ່ວມໃຫ້ເງິນສະໜັບສະໜູນກອງທຶນ, ໃນຂະນະທີ່ ອູແກຣນ ຈະຮັກສາຄວາມເປັນເຈົ້າຂອງ ແລະ ຄວບຄຸມຊັບພະຍາກອນແຮ່ທາດແລະພະລັງງານຂອງຕົນຢ່າງຄົບຖ້ວນ.

ລັດຖະສະພາອູແກຣນ ສະໜັບສະໜູນການໃຫ້ສັດຕະຍາບັນຂໍ້ຕົກລົງດັ່ງກ່າວເມື່ອວັນພະຫັດທີ 8 ພຶດສະພາ ເຊິ່ງຜ່ານດ້ວຍຄະແນນສຽງເຫັນດີ 338 ສຽງ, ລື່ນກາຍເກນຂັ້ນຕ່ຳສຸດທີ່ກຳນົດໄວ້ 226 ສຽງ (ລັດຖະສະພາ ມີ 450 ທີ່ນັ່ງ).

ຂໍ້ຕົກລົງດັ່ງກ່າວ ຈະມີຜົນສັກສິດຫຼັງຈາກການແລກປ່ຽນບົດບັນທຶກທາງການທູດລະຫວ່າງ ອູແກຣນ ແລະ ສະຫະລັດ ເຊິ່ງຢືນຢັນວ່າບັນດາຂະບວນການພາຍໃນຂອງທັງ2ປະເທດ ໄດ້ສຳເລັດແລ້ວ.

# ພັກກຳອຳນາດຂອງສີລັງກາ ຊະນະການເລືອກຕັ້ງທ້ອງຖິ່ນ



(Xinhua) - ພັກພະລັງປະຊາຊົນແຫ່ງຊາດ (National People's Power - NPP) ພັກລັດຖະບານຊຸດປັດຈຸບັນ ຊະນະການເລືອກຕັ້ງລັດຖະບານທ້ອງຖິ່ນ ປະຈຳປີ 2025 ໂດຍໄດ້ຮັບຄະແນນສຽງ 43.26% ແລະໄດ້ 3,927 ທີ່ນັ່ງໃນສະພາທ້ອງຖິ່ນ, ອີງຕາມຜົນສຸດທ້າຍທີ່ເຜີຍແຜ່ໂດຍຄະນະກຳມະການເລືອກຕັ້ງເມື່ອວັນພຸດທີ 7 ພຶດສະພາ ຜ່ານມາ.

ການເລືອກຕັ້ງທີ່ຈັດຂຶ້ນທົ່ວປະເທດໃນວັນອັງຄານທີ 6 ພຶດສະພາ, NPP ໄດ້ຮັບຄະແນນສຽງສ່ວນຫຼາຍໃນ 266 ອົງການປົກຄອງທ້ອງຖິ່ນ ຈາກທັງໝົດ 339 ແຫ່ງທົ່ວເກາະແຫ່ງນີ້; ພັກພະລັງປະຊາຊົນສາມັກຄີ ເຊິ່ງເປັນຝ່າຍຄ້ານຕົ້ນຕໍ ໄດ້ອັນດັບ 2 ດ້ວຍຄະແນນສຽງ 21.69% ໄດ້ 1,767 ທີ່ນັ່ງ ແລະ 13 ອົງການປົກຄອງທ້ອງຖິ່ນ. ໃນຂະນະທີ່ພັກສະຫະພັນ ເຊິ່ງເປັນພັກການເມືອງລັດທະມົນຊົ້ນນຳ ໄດ້ 377 ທີ່ນັ່ງ ແລະ 37 ອົງການປົກຄອງທ້ອງຖິ່ນ, ສ່ວນພັກຄອງເກຣສຊາວມຸດສະລິມສີລັງກາ ໄດ້ 116 ທີ່ນັ່ງ ແລະ 5 ອົງການປົກຄອງທ້ອງຖິ່ນ.

ອີງຕາມຂໍ້ມູນຂອງຄະນະກຳມະການເລືອກຕັ້ງ, ມີຜູ້ລົງທະບຽນເລືອກຕັ້ງທັງໝົດ 17,156,338 ຄົນ ແລະ ມີຜູ້ມາໃຊ້ສິດປະມານ 60%.

# ໂຮມຊຸມນຸມຢູ່ໂຕກຽວໃນວັນລັດຖະທຳມະນູນ ເພື່ອສະແດງໃຫ້ເຫັນສັນຕິພາບ, ຕໍ່ຕ້ານສົງຄາມ




(Xinhua) - ວັນເສົາທີ 3 ພຶດສະພາຜ່ານມາ, ຊາວຍີ່ປຸ່ນຜູ້ສະແຫວງຫາສັນຕິພາບເກືອບ 40,000 ຄົນ ໄດ້ເຂົ້າຮ່ວມການໂຮມຊຸມນຸມຢູ່ສວນສາທາລະນະແຫ່ງໜຶ່ງທີ່ນະຄອນຫຼວງໂຕກຽວ ໃນວັນລັດຖະທຳມະນູນ ໂດຍຮຽກຮ້ອງໃຫ້ເຄົາລົບລັດຖະທຳມະນູນສັນຕິພາບຂອງປະເທດ ແລະ ຕໍ່ຕ້ານສົງຄາມ ແລະ ການຂະຫຍາຍກຳລັງອາວຸດ; ສະມາຊິກລັດຖະສະພາ, ນັກວິຊາການແລະປະຊາຊົນຈຳນວນຫຼາຍ ໄດ້ຖືກເຊີນໃຫ້ເວົ້າໃນການຊຸມນຸມ ໂດຍຜູ້ເຂົ້າຮ່ວມຫຼາຍຄົນຖືປ້າຍ ແລະ ປ້າຍໂຄສະນາທີ່ມີຂໍ້ຄວາມເຊັ່ນ "ຕໍ່ຕ້ານການຂະຫຍາຍກຳລັງອາວຸດ" ແລະ "ຮັກລັດຖະທຳມະນູນແລະປົກປ້ອງສັນຕິພາບໂລກ!" ເພື່ອສະແດງການສະໜັບສະໜູນຢ່າງໜັກແໜ້ນຂອງພວກເຂົາຕໍ່ແນວຄິດສັນຕິພາບ.

ລັດຖະທຳມະນູນສະບັບປັດຈຸບັນຂອງຍີ່ປຸ່ນ ປະກາດໃຊ້ໃນປີ 1947 ແລະ ເປັນທີ່ຮູ້ຈັກໃນຊື່ ລັດຖະທຳມະນູນແຫ່ງສັນຕິພາບຫຼັງສົງຄາມ ເຊິ່ງມາດຕາ 9 ຍົກເລີກສົງຄາມ ແລະ ຫ້າມປະເທດຮັກສາກຳລັງທາງບົກ, ທາງທະເລ ແລະ ທາງອາກາດ ລວມເຖິງຄວາມສາມາດໃນການເຮັດສົງຄາມອື່ນໆ.

ເປັນເວລາຫຼາຍທົດສະວັດແລ້ວທີ່ມາດຕາ 9 ແມ່ນຂໍ້ຈຳກັດພື້ນຖານຕໍ່ຄວາມພະຍາຍາມດ້ານການທະຫານຂອງຍີ່ປຸ່ນ; ແນວໃດກໍຕາມ, ໃນຊຸມປີມໍ່ໆມານີ້, ລັດຖະບານຍີ່ປຸ່ນໄດ້ປະຕິບັດຂັ້ນຕອນຕ່າງໆ ເຊັ່ນ: ການຍົກເລີກຂໍ້ຫ້າມການປ້ອງກັນຕົນເອງຮ່ວມກັນ (collective self-defense) ແລະ ປັບປຸງເອກະສານທີ່ກ່ຽວຂ້ອງກັບຄວາມໝັ້ນຄົງແລະການປ້ອງກັນປະເທດ 3 ສະບັບເຊິ່ງໄດ້ເຮັດໃຫ້ປະຊາຊົນມີຄວາມເປັນຫ່ວງຢ່າງໜັກໜ່ວງ.

ບັນດາເຈົ້າໜ້າທີ່ລະດັບສູງຈາກບັນດາພັກຝ່າຍຄ້ານ ໄດ້ຮຽກຮ້ອງບໍ່ອະນຸຍາດໃຫ້ສະພາແຫ່ງຊາດສະເໜີປັບປຸງລັດຖະທຳມະນູນ ໂດຍເນັ້ນໜັກເຖິງຄວາມຈຳເປັນໃນການປົກປັກຮັກສາສັນຕິພາບ, ຊີວິດ, ການດຳລົງຊີບ, ສິດທິມະນຸດ ດ້ວຍການນຳໃຊ້ລັດຖະທຳມະນູນສະບັບປັດຈຸບັນ.

ໂທໂມໂກະ ທາມູຣະ (Tomoko Tamura) ຫົວໜ້າພັກກອມມູນິດຍີ່ປຸ່ນກ່າວໃນຄຳປາໄສຂອງນາງວ່າການກະທຳຕ່າງໆຂອງລັດຖະບານຍີ່ປຸ່ນ ໄດ້ລວມເອົາກອງກຳລັງປ້ອງກັນຕົນເອງເຂົ້າໃນລະບົບບັນຊາການທະຫານຂອງສະຫະລັດອາເມລິກາໂດຍພື້ນຖານແລ້ວ ແລະ ກ່າວເສີມວ່າ ຍີ່ປຸ່ນ ຄວນສົ່ງເສີມການທູດເພື່ອສັນຕິພາບໃນອາຊີຕາເວັນອອກ ທີ່ປາສະຈາກຄວາມກັງວົນເລື່ອງສົງຄາມຕາມລັດຖະທຳມະນູນ ແລະ ສ້າງຂອບການເຮັດວຽກທີ່ກວ້າງຂຶ້ນສຳລັບການເຈລະຈາ ແລະ ການຮ່ວມມື.

ຊິເງອາກິ ໂຄງະ (Shigeaki Koga) ອະດີດເຈົ້າໜ້າທີ່ກະຊວງເສດຖະກິດ, ການຄ້າ ແລະ ອຸດສາຫະກຳ ກ່າວວ່າ ໂລກກຳລັງປະສົບກັບການປ່ຽນແປງຢ່າງເລິກເຊິ່ງແລະຍີ່ປຸ່ນ ຄວນຍຶດໝັ້ນໃນຈິດໃຈແຫ່ງສັນຕິພາບທີ່ມີຢູ່ໃນລັດຖະທຳມະນູນຂອງຕົນ; ເຂົາຢໍ້າວ່າຍີ່ປຸ່ນຄວນຢຸດຕິການເພິ່ງພາອາໄສບາງປະເທດ ແລະ ສ້າງສາຍພົວພັນທາງການທູດຄືນໃໝ່ບົນພື້ນຖານການແລກປ່ຽນ ແລະຄວາມເຂົ້າໃຈລະຫວ່າງປະຊາຊົນກັບປະຊາຊົນ ໂດຍກ່າວວ່າການປະທະກັນສາມາດແກ້ໄຂ ແລະຮັກສາສັນຕິພາບໄດ້ ໂດຍຜ່ານການເຈລະຈາເທົ່ານັ້ນ.

ມານາບຸຊາໂຕະ (Manabu Sato) ອະດີດສາດສະດາຈານທີ່ມະຫາວິທະຍາໄລໂຕກຽວ ໄດ້ວິພາກວິຈານນະໂຍບາຍຂະຫຍາຍກອງກຳລັງທະຫານຂອງລັດຖະບານຍີ່ປຸ່ນໃນປັດຈຸບັນວ່າ ເປັນການຂັດກັບຈິດໃຈຂອງລັດຖະທຳມະນູນ ແລະ ຕັ້ງຄຳຖາມກ່ຽວກັບລາຍຈ່າຍດ້ານປ້ອງກັນປະເທດຢ່າງຫຼວງຫຼາຍ; ເຂົາເຊື່ອວ່າການປະຖິ້ມສົງຄາມ (war-renouncing) ຕາມມາດຕາ 9 ໄດ້ນຳສັນຕິພາບມາສູ່ຍີ່ປຸ່ນໃນໄລຍະຍາວຫຼັງສົງຄາມ, ລັດຖະບານຄວນໃຫ້ຄວາມສຳຄັນກັບການນຳໃຊ້ຊັບພະຍາກອນເພື່ອການສຶກສາ, ສະຫວັດດີການຂອງປະຊາຊົນ ແລະ ປັບປຸງໂຄງສ້າງສັງຄົມ.

ການໂຮມຊຸມນຸມດັ່ງກ່າວໄດ້ດຶງດູດຊາວໜຸ່ມ ແລະ ຄອບຄົວເປັນຈຳນວນຫຼວງຫຼາຍ. ແມ່ຜູ້ໜຶ່ງທີ່ພາລູກໆມາຮ່ວມຊຸມນຸມ ກ່າວຕໍ່ຊິນຮວາວ່າ "ຂ້ອຍຫວັງວ່າລູກໆຂອງຂ້ອຍ ຈະເຕີບໃຫຍ່ຂຶ້ນໃນສະພາບແວດລ້ອມທີ່ປາສະຈາກໄພຂົ່ມຂູ່ຈາກສົງຄາມ; ໃນຖານະທີ່ເປັນພໍ່ແມ່, ຂ້ອຍມີຄວາມຮັບຜິດຊອບທີ່ຈະຖ່າຍທອດແນວຄິດນີ້".

## ສຳເລັດ...

(ຕໍ່ຈາກໜ້າ 1)

ໃຫຍ່ຄັ້ງທີ XII ຂອງພັກ ຢ່າງເປັນລະບົບ, ອັນໄດ້ສ່ອງແສງໃຫ້ເຫັນເຖິງຄວາມຮັບຜິດຊອບຂອງຄະນະບໍລິຫານງານສູນກາງພັກ, ສະແດງເຖິງຄວາມມີຊີວິດຊີວາຂອງການເສີມຂະຫຍາຍປະຊາທິປະໄຕ, ສະຕິປັນຍາລວມໝູ່ຢູ່ພາຍໃນພັກ ໃນການບູລະນະແນວທາງການເມືອງ ແລະ ແນວທາງການຈັດຕັ້ງຂອງພັກເຮົາໃຫ້ຖືກຕ້ອງ, ແທດເໝາະ, ສອດຄ່ອງ, ຮັດກຸມ ແລະ ສົມບູນຂຶ້ນຢ່າງຕໍ່ເນື່ອງ.

ລັດຖະບານ ແລະ ອົງການປົກຄອງທ້ອງຖິ່ນຂັ້ນຕ່າງໆ ມີຄວາມພະຍະຍາມສູງໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ການຍູ້ຂະບວນການດ້ານຕ່າງໆ ເຮັດໃຫ້ປະເທດເຮົາສືບຕໍ່ຮັກສາໄດ້ສະຖຽນລະພາບທາງການເມືອງໜັກແໜ້ນ, ສັງຄົມມີຄວາມເປັນລະບຽບຮຽບຮ້ອຍ, ສາມາດຜ່ານຜ່າແລະແກ້ໄຂບັນຫາເຄັ່ງຮ້ອນໄດ້ໂດຍພື້ນຖານ; ການພັດທະນາເສດຖະກິດ-ສັງຄົມ ຮັກສາໄດ້ຈັງຫວະການຂະຫຍາຍຕົວຢ່າງຕໍ່ເນື່ອງ; ການຜະລິດສິນຄ້າ, ການຈັດເກັບ ແລະ ຄຸ້ມຄອງງົບປະມານ ປະຕິບັດໄດ້ຕາມຄາດໝາຍ ເຊິ່ງໃນໄຕມາດທີ 1 ປີ 2025 ເສດຖະກິດຂະຫຍາຍຕົວໃນລະດັບ 4.5%; ການດຳເນີນກອງປະຊຸມໃຫຍ່ອົງຄະນະພັກເມືອງ-ນະຄອນ ແລະ ຮາກຖານພັກມາຮອດປັດຈຸບັນສຳເລັດ 143 ອົງຄະນະພັກ ເທົ່າກັບ 96.62% ແລະ ຈະສຳເລັດທັງໝົດພາຍໃນເດືອນມິຖຸນານີ້, ເປັນພື້ນຖານ ແລະ ບົດຮຽນໃຫ້ແກ່ການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ຢູ່ຂັ້ນແຂວງ ແລະ ກະຊວງ, ອົງການ ໃຫ້ໄດ້ຮັບຜົນດີ, ຍູ້ແຮງຂະບວນການປະຕິບັດຂໍ້ແຂ່ງຂັນຮັກຊາດ ແລະ ພັດທະນາ, ການສະເຫຼີມສະຫຼອງວັນສຳຄັນຂອງພັກ, ຂອງຊາດ, ກ້າວເຂົ້າສູ່ກອງປະຊຸມໃຫຍ່ຄັ້ງທີ XII ຂອງພັກ ໃຫ້ເປັນຂະບວນຟົດຟື້ນ.

ຄະນະບໍລິຫານງານສູນກາງພັກສະແດງຄວາມເປັນຫ່ວງເປັນໄຍຕໍ່ສະພາບຄວາມເຄັ່ງຮ້ອນ, ຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ໂດຍສະເພາະບັນຫາເງິນເຟີ້, ການເໜັງຕີງຂອງອັດຕາແລກປ່ຽນ, ຄ່າຄອງຊີບ-ລາຄາສິນຄ້າ, ບັນຫາຫຍໍ້ທໍ້ໃນສັງຄົມ ແລະ ອື່ນໆ ທີ່ສົ່ງຜົນກະທົບຕໍ່ຊີວິດການເປັນຢູ່ຂອງປະຊາຊົນ, ພະນັກງານ, ທະຫານ, ຕຳຫຼວດ... ໂດຍສະເໜີໃຫ້ລັດຖະບານ, ອົງການປົກຄອງແຕ່ລະຂັ້ນ ຕ້ອງສືບຕໍ່ສຸມໃສ່ແກ້ໄຂໃຫ້ຕົກໄປເປັນກ້າວໆ.

ໂອກາດນີ້, ສະຫາຍ ທອງລຸນ ສີສຸລິດ ໄດ້ມີຄຳເຫັນເນັ້ນໜັກບັນດາວຽກງານຈຸດສຸມຈຳນວນໜຶ່ງຄື:

1. ເອົາໃຈໃສ່ຊີ້ນຳການຫັນລົງກໍ່ສ້າງຮາກຖານການເມືອງຕິດພັນກັບການພັດທະນາຊົນນະບົດຮອບດ້ານ ຕາມແຜນພັດທະນາຂອງເມືອງ ແລະຂອງຕາແສງ ເພື່ອແກ້ໄຂຄວາມທຸກຍາກຂອງປະຊາຊົນ; ຄະນະພັກທຸກຂັ້ນຕ້ອງຖືເອົາວຽກງານນີ້ເປັນຄວາມຮັບຜິດຊອບໂດຍກົງຂອງຕົນ, ສຸມໃສ່ເຂດພູດອຍຫ່າງໄກສອກຫຼີກແລະຈຸດລໍ່ແຫຼມຕ່າງໆ, ຈັດສັນງົບປະມານ ເພື່ອສ້າງ ແລະ ປັບປຸງໂຄງລ່າງພື້ນຖານ, ເສີມກຳລັງ ແລະ ປັບປຸງສອງກຳລັງໃຫ້ເຂັ້ມແຂງ, ໜັກແໜ້ນ ເຊິ່ງເປັນວຽກທີ່ຕ້ອງເຮັດເປັນປະຈຳ ແລະ ຕໍ່ເນື່ອງ.

2. ສືບຕໍ່ຊີ້ນຳການແກ້ໄຂບັນຫາເຄັ່ງຮ້ອນທາງດ້ານເສດຖະກິດ-ການເງິນຕິດພັນກັບບັນຫາຫຍໍ້ທໍ້ໃນສັງຄົມໃຫ້ໄວ, ໃຫ້ທ່ວງທັນກັບສະພາບການ ໂດຍສະເພາະການແກ້ໄຂບັນຫາປາກທ້ອງຂອງປະຊາຊົນ, ການຂະຫຍາຍການຜະລິດເປັນສິນຄ້າ,... ມອບໃຫ້ລັດຖະບານ ເອົາໃຈໃສ່ຊີ້ນຳການວາງມາດຕະການຕ້ານແລ້ງ-ຕ້ານຖ້ວມ, ການລະບາດຂອງພະຍາດ ກໍຄືການຮັບມືກັບໄພພິບັດຕ່າງໆ, ລວມເຖິງບັນຫາອັກຄີໄພ ທີ່ເຫັນວ່າເກີດຂຶ້ນຢ່າງຕໍ່ເນື່ອງ.

3. ສືບຕໍ່ນຳພາຊີ້ນຳການປັບປຸງກົງຈັກການຈັດຕັ້ງຂອງກະຊວງ, ອົງການ ແລະ ຂະແໜງການສາຍຕັ້ງຢູ່ທ້ອງຖິ່ນ ໃຫ້ຖືກຕ້ອງຕາມທິດຊີ້ນຳ, ມີຜົນສຳເລັດ ແລະທັນຕາມກຳນົດເວລາທີ່ວາງໄວ້; ພ້ອມກັນນັ້ນ, ກໍຮີບຮ້ອນສືບຕໍ່ກະກຽມຄວາມພ້ອມດ້ານຕ່າງໆ ໃນການຈັດຕັ້ງຕາແສງໃນຂອບເຂດທົ່ວປະເທດ ໂດຍໃຫ້ມີແຜນກຳນົດສ້າງຕັ້ງ ຕິດພັນກັບແຜນຄົນ, ແຜນວຽກ (ຂະແໜງການ) ແລະແຜນງົບປະມານ.

4. ສືບຕໍ່ຊີ້ນຳການຍູ້ຂະບວນການກະກຽມກອງປະຊຸມໃຫຍ່ຄັ້ງທີ XII ຂອງພັກ ໃຫ້ເປັນຂະບວນການກວ້າງຂວາງ; ນຳເອົາບັນດາເອກະສານກອງປະຊຸມໃຫຍ່ ໄປຈັດຕັ້ງສຳມະນາ, ຄົ້ນຄວ້າບັນຫາທີ່ຍັງບໍ່ທັນແຈ້ງ, ສືບຕໍ່ທາບທາມຄຳເຫັນໃຫ້ກວ້າງຂວາງ ແລະ ເຂົ້າລວງເລິກຕື່ມ.

5. ກະກຽມການດຳເນີນຊີວິດການເມືອງທ້າຍສະໄໝຂອງຄະນະບໍລິຫານງານພັກກະຊວງ, ອົງການ, ນະຄອນຫຼວງ, ແຂວງ ແລະຄະນະບໍລິຫານງານສູນກາງພັກ ສະໄໝທີ XI ຕິດພັນກັບການກະກຽມບຸກຄະລາກອນກອງປະຊຸມໃຫຍ່ຄັ້ງທີ XII ຂອງພັກ ຕາມຫຼັກການ, ຂັ້ນຕອນ ແລະ ລະບຽບການ ຢ່າງຮັດກຸມ ແລະ ເຂັ້ມງວດ.

ສະຫາຍ ທອງລຸນ ສີສຸລິດ ຍັງໄດ້ສະແດງຄວາມເຊື່ອໝັ້ນແລະຮຽກຮ້ອງໃຫ້ສະຫາຍການນຳແຕ່ລະຂັ້ນ ຈົ່ງພ້ອມກັນຍົກສູງຄວາມຮັບຜິດຊອບການເມືອງຂອງຕົນ, ເຊີດຊູຄວາມເປັນເຈົ້າການ ແລະ ຄວາມເປັນແບບຢ່າງນຳໜ້າໃຫ້ສູງຂຶ້ນ ເພື່ອສືບຕໍ່ນຳພາ-ຊີ້ນຳທົ່ວພັກ, ທົ່ວລັດ, ທົ່ວກອງທັບແລະທົ່ວປວງຊົນລາວ ສຸມໃສ່ຈັດຕັ້ງປະຕິບັດບັນດາຄາດໝາຍສູ້ຊົນທີ່ກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກເຮົາວາງອອກ ໃຫ້ໄດ້ຮັບຜົນສຳເລັດອັນຈົບງາມ.

**(ຫ້ອງວ່າການສູນກາງພັກ)**

## ເບິ່ງໄວ້ ໄດ້ບົດຮຽນ

# ປັນຍາປະດິດ (ເອໄອ-AI) ໃຊ້ແບບຜິດ ຈະເປັນຜິດເປັນໄພ

❖ ວິເສດ ສະແຫວງສຶກສາ

ຫວ່າງບໍ່ດົນມານີ້ ກອງປະຊຸມລະດັບໂລກສຳລັບນັກໜັງສືພິມຈາກທົ່ວໂລກປະຈຳປີ 2025 ທີ່ ສ.ເກົາຫຼີ ໄດ້ສຳເລັດລົງດ້ວຍໝາກຜົນທີ່ຄວນເບິ່ງໄວ້ເປັນບົດຮຽນໃນການນຳໃຊ້ປັນຍາປະດິດ (AI) ເຂົ້າໃນວຽກງານໜັງສືພິມ, ຫົວຂໍ້ກອງປະຊຸມປະຈຳປີນີ້ ລົງເລິກການແລກປ່ຽນບົດຮຽນກ່ຽວກັບບົດບາດຄວາມສຳຄັນ ກໍຄືຜົນກະທົບຂອງ AI ຕໍ່ວຽກງານໜັງສືພິມ (ໜັງສືພິມ Vientian Times ປະຈຳວັນທີ 8 ເມສາ 2025). ຂ່າວໃຫ້ລາຍລະອຽດວ່າ ກອງປະຊຸມລະດັບໂລກສຳລັບນັກໜັງສືພິມທົ່ວໂລກນີ້ໄດ້ຈັດຂຶ້ນເປັນປະຈຳແຕ່ລະປີ ນັບແຕ່ປີ 2013 ເປັນຕົ້ນມາ, ສຳລັບປີນີ້ ກອງປະຊຸມໄດ້ລົງເລິກເນື້ອໃນທີ່ເປັນໃຈກາງໃນການນຳໃຊ້ AI ເຂົ້າໃນວຽກງານໜັງສືພິມ ຄື: "ກຳນົດອະນາຄົດຂອງວຽກໜັງສືພິມ ໃນຍຸກສື່ AI ແກ້ໄຂບັນຫາລິຂະສິດ ແລະ ສິ່ງທ້າທາຍດ້ານຈັນຍາບັນ". ຕໍ່ໄປແມ່ນບາງແງ່ຄິດ ຫຼື ຄຳເຫັນຂອງຜູ້ແທນຈາກບາງປະເທດທີ່ເຂົ້າຮ່ວມກອງປະຊຸມ ເຊັ່ນ: ທ່ານ ນາງ ຢິນກາວ (Yin CAO) ຈາກໜັງສືພິມລາຍວັນ China Daily ຂອງ ສປຈີນ ໄດ້ຊີ້ບອກວ່າ AI ນັ້ນ ໃຫ້ທັງປະໂຫຍດ ແລະ ທັງໂທດ, ມັນຂຶ້ນກັບການນຳໃຊ້; ພວກເຮົາຕ້ອງນຳໃຊ້ AI ໃຫ້ເປັນ, ໃຊ້ຢ່າງສະຫຼາດ ມີການຄາດຄິດຢ່າງຖີ່ຖ້ວນຄື ຕ້ອງກວດກາຂໍ້ມູນໃຫ້ລະອຽດ ແນໃສ່ປ້ອງກັນບໍ່ໃຫ້ມີການລະເມີດສິດທິຂອງຄົນເຮົາ. AI ຊ່ວຍພວກເຮົາໃນການຮ່າງ ແລະ ຕັ້ງຫົວຂໍ້ບົດຂ່າວ-ບົດຄວາມໄດ້ດີ; ແຕ່ພ້ອມດຽວກັນນັ້ນ, ພວກເຮົາກໍຕ້ອງມີສະຕິ ໂດຍສະເພາະແມ່ນເລື່ອງການລະເມີດລິຂະສິດ ເພາະຂໍ້ມູນທີ່ຊອກຜ່ານ AI ນັ້ນ ກວ້າງຂວາງມາຈາກຫຼາຍແຫຼ່ງ. AI ຊ່ວຍພວກເຮົາໄດ້ດີໃນວຽກວິໄຈ ແຕ່ກໍມີຄວາມສ່ຽງເລື່ອງການເຜີຍແຜ່ຂ່າວປອມ-ຂ່າວບິດເບືອນຄວາມຈິງແລະການລະເມີດລິຂະສິດ. ທ່ານ ນາງ ນາຕາເລຍ ຊິວຊັກ (Natalia Szewczak) ນັກໜັງສືພິມທຸລະກິດ ອິນໄຊເດີ (Insider) ຈາກປະເທດໂປໂລຍ ມີຄຳເຫັນວ່າ: ຄວນໃຊ້ AI ເປັນຕົວຊ່ວຍ, ບໍ່ແມ່ນນຳໃຊ້ເພື່ອເຮັດວຽກແທນນັກໜັງສືພິມ, ຍ້ອນວ່າ AI ບໍ່ສາມາດເຮັດບົດບາດເຈາະເລິກການສອບຖາມ-ສອບສວນ ຄືນັກໜັງສືພິມ, ບໍ່ສາມາດລົງເລິກບັນຫາທີ່ສັບສົນດ້ານກົດໝາຍ ເພື່ອນຳໄປສູ່ການປ່ຽນແປງໄດ້; ຈຸດດີເດັ່ນຂອງ AI ນັ້ນ ກໍຄືມັນຊ່ວຍຫຍໍ້ເວລາໃນການຊອກ ແລະ ຄັດເລືອກຂໍ້ມູນທີ່ຈຳເປັນ, ເຮັດໃຫ້ນັກໜັງສືພິມພວກເຮົາມີເວລາຫຼາຍຂຶ້ນໃນການສ້າງສັນຜົນງານໃໝ່ໆອອກສູ່ສັງຄົມ. ທ່ານ ຮວາງ ຊັອກຮາ (Hwang Seok-ha) ຈາກໜັງສືພິມ ພູຊານ ລາຍວັນ ສ.ເກົາຫຼີ ມີຄຳເຫັນກ່ຽວກັບບັນຫານີ້ວ່າ ນະໂຍບາຍການນຳໃຊ້ AI ນັ້ນຕ້ອງເນັ້ນເລື່ອງຄວາມໂປ່ງໃສ ແລະ ແຈ້ງໃຫ້ຜູ້ອ່ານ (ຜູ້ບໍລິໂພກສື່) ຮູ້ທີ່ມາຂອງຂໍ້ມູນທີ່ໄດ້ມາຈາກ AI ສິ່ງທີ່ຄວນລະວັງກໍຄື ບັນຫາລຳອຽງ, ອະຄະຕິດ້ານຂໍ້ມູນ; ດັ່ງນັ້ນ, ຈຶ່ງຕ້ອງມີການກວດກາ (ຂໍ້ມູນຈາກ AI) ຢ່າງຈິງຈັງຕັ້ງໜ້າແທ້ໆ. ທ່ານ ນາງ ຢິນກາວ (ຈາກໜັງສືພິມ China Daily) ໄດ້ເນັ້ນໃຫ້ທຸກຄົນມີສະຕິກ່ຽວກັບຜົນຮ້າຍຂອງຂ່າວປອມ, ຂ່າວຫຼອກລວງທີ່ເກີດຈາກການນຳໃຊ້ AI ເພາະວ່າມັນເປັນຂ່າວທີ່ເຮັດໃຫ້ຜູ້ອ່ານງົງ ແລະ ຍາກທີ່ຈະຈຳແນກອອກວ່າອັນໃດເປັນຂ່າວປອມ ອັນໃດເປັນຂ່າວຈິງ. ທ່ານ ນາງ ດຽນ ຟູເອັນເຕ (Dian Fuente) ຈາກສະຫະລັດອາເມລິກາ ໄດ້ໃຫ້ທັດສະນະວ່າ ຈຸດດີຂອງ AI ກໍຄືມັນຊ່ວຍໃຫ້ບັນດານັກໜັງສືພິມເບົາມື, ມີເວລາໃຊ້ຫົວຄິດປະດິດສ້າງເພື່ອຜະລິດຜົນງານໃໝ່ໆ ເຊິ່ງກໍຄ້າຍກັບຄຳເຫັນຂອງຜູ້ແທນຈາກປະເທດໂປໂລຍ.

ນີ້ເປັນການສັງລວມແບບຮຽບຮຽງ ຖ້າຢາກຮູ້ລະອຽດໃຫ້ຕິດຕາມອ່ານບົດ "World Journalists Conference debates AI's impact on the media" ໃນໜັງສືພິມ Vientiane Times ປະຈຳວັນທີ 8 ເມສາ 2025.

ທະນາຄານພັດທະນາລາວ
LDB Bank




## ຫົວຄິດລິເລີ່ມ

*# ບ່າວກະບື*

ພໍ່ຄ້າຫຼັກຊັບຫາກໍ່ສະເດືອກຮູ້ວ່າທີ່ດິນທີ່ເຂົາຂາຍອອກໄປນັ້ນພອມຈົມປົ່ງຢູ່ພື້ນນ້ຳ.

"ລູກໜ່ອຍລູກຄ້າຄົນນັ້ນ ກໍຄົງຈະພະເອີພະອາສູບມານີ້," ເຂົາເວົ້າລາຍງານຫົວໜ້າ.

"ຊິໃຫ້ຂ້າພະເຈົ້າສົ່ງເງິນຄືນໃຫ້ເຂົາບໍ່ທ່ານ?"

"ສົ່ງເງິນຄືນ? ຫົວໜ້າແຜດສຽງຂຶ້ນ, ນັກຂາຍແບບໃດເຈົ້າຫັ້ນ? ຮີບໄປຫາເຂົາດຽວນີ້ໂລດ ແລະ ຂາຍເຮືອນແພໃຫ້ລູກຄ້າຄົນນັ້ນ."

## Initiative

***# BAOKBU***

A realty salesman had just discovered that the piece of land he had sold was completely under water.

"That customer's going to come back here pretty mad," he said to his boss. "Should I give him his money back?" "Money back?" roared the boss. "What kind of salesman are you? Get out there now and sell him a houseboat".

## ຄາບພາສາ ກາຕູນ




● ໂດຍ : ພູຜາ

**ຜູ້ຊີ້ນຳ**
ທ່ານ ສົງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄຳຫວັນ ດາລາວົງ

**ຄະນະບັນນາທິການ**
ທ່ານ ປອ. ພົດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ
ທ່ານ ແກ້ວລະກາ ຊ້ອຍໄຊຍະ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລີນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ຫອມສະນິດ
ທ່ານ ນາງ ອາລີນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ